# ສິນໄຊ ເຫລັ້ມ 2

ຂຽນເປັນຄຳເວົ້າທຳມະດາ ອຸທິນ ບຸນຍາວົງ



# ສິນໄຊ ເຫລັ້ມ 2

***ຂຽນເປັນຄຳເວົ້າທຳມະດາ***

ໂດຍ **ອຸທິນ ບຸນຍາວົງ**

ອຸປະຖຳໂດຍ
ສະມາຄົມສົ່ງປຶ້ມໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ
ອົງການ ອຸຍນິເຊັບ ( UNICEF )

**1996**

ສິນໄຊ ເຫລັ້ມ 2

ຂຽນເປັນຄຳເວົ້າທຳມະດາ : ອຸທິນ ບຸນຍາວົງ
ຮູບປະກອບ : ກົງພັດ ຫລວງລາດ, ດວງດີ ຂັນທະວີໄລ,
ລອກລາຍເສັ້ນໃໝ່ : ຣັດສະໝີ ວີຣະວົງ
ພິມຄັ້ງທີ1 : 1991, ໂຮງພິມແຫ່ງຊາດ, ຈຳນວນ 2000 ຫົວ
ຈັດພິມໂດຍ : ວາລະສານ ວັນນະສິນ,
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ອຸປະຖຳ : ມູນນິທິໂຕໂຍຕາ

ພິມຄັ້ງທີ 2 : 1993, ໂຮງພິມວັນນະສິນ, ຈຳນວນ 1500 ຫົວ
ຈັດພິມໂດຍ : ວາລະສານ ວັນນະສິນ,
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ,
ອຸປະຖຳໂດຍ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ

ພິມຄັ້ງທີ 3 : 1996, ໄຜ່ຫນາມການພິມ,
ຈຳນວນ 2000 ຫົວ
ຈັດພິມໂດຍ : ອົງການອຸຍນິເຊັບ
ແລະ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ
ຈັດເປັນ 2 ເຫລັ້ມ

ທະບຽນ : 552/ພຫປ 231193
© ສະຫງວນລິຂະສິດ : ອຸທິນ ບຸນຍາວົງ

# ຄຳນຳ

ເລື່ອງສິນໄຊ ສະບັບເປັນຄຳກອນນັ້ນໄດ້ຮັບການພິມ ເຜີຍແຜ່ອອກຢ່າງກວ້າງຂວາງ ຫລາຍກວ່າວັນນະກຳເລື່ອງອື່ນໆ ແລະ ກືວ່າເປັນເລື່ອງເອກຂອງວັນນະຄະດີບູຮານຂອງລາວເຮົາ. ສຳນວນທີ່ລິດຈະນາຈາກໃບລານ ໂດຍ ມະຫາສີລາ ວີຣະວົງສ໌ ນັ້ນກືວ່າເປັນສະບັບທີ່ ສົມບູນກວ່າໝູ່ ແລະ ພິມອອກມາຫລາຍເທື່ອ ນັບແຕ່ຊຸມປີ 1940 ເປັນຕົ້ນມາ.

ສ່ວນເລື່ອງສິນໄຊ ສະບັບເປັນຄຳເວົ້າທຳມະດາ ຊຶ່ງດັດແປງໃຫ້ອ່ານງ່າຍ ເຫມາະສົມ ກັບຜູ້ອ່ານຣຸ່ນໃຫມ່ນີ້ ເລີ່ມພິມເທື່ອທຳອິດເມື່ອປີ 1991 - ອັນນີ້ເປັນວິທີພາຮູ້ອ່ານເຂົ້າເຖິງວັນນະຄະດີບູຮານອີກຮູບແບບໜຶ່ງ ຊຶ່ງຢູ່ຕ່າງປະເທດກໍເຄີຍເຮັດມາແລ້ວ. ປາກົດວ່າເລື່ອງສິນໄຊສະບັບດັດແປງເປັນຄຳເວົ້າທຳມະດານີ້ ກໍໄດ້ຮັບຄວາມສົນໃຈຢ່າງກວ້າງຂວາງຈາກຜູ້ອ່ານທັງໄວໜຸ່ມ ແລະ ໄວແກ່.

ຄວາມສົນໃຈຂອງຜູ້ອ່ານຕໍ່ວັນນະກຳນັ້ນ ຄືກຳລັງດັນໃນທາງບວກສຳລັບວັນນະຄະດີລາວ. ຂໍໃຫ້ທຸກຄົນຊ່ວຍເປັນກຳລັງຊຸກຍູ້ວັດທະນະທຳດ້ານນີ້ໃຫ້ຈະເລີນຍິ່ງໆ ຂຶ້ນ.

10 ກັນຍາ 1996

ອຸທິນ ບຸນຍາວົງ

ຜູ້ຮຽບຮຽງ

# ເລວກັບຍັກໂຕທຳອິດ

ເມື່ອຂ້າມຫວິດຜາຊັນແຫ່ງໜຶ່ງ ສິນໄຊເລີຍໄປພໍ້ຍັກ ຊຶ່ງໂມໂຫແຮງທີ່ເຂດແດນຖືກຄົນເຂົ້າມາລ່ວງລໍ້າ, ສິນໄຊເຮັດໃຈດີໆໄວ້ ແລະ ຖາມຍັກວ່າ : "ເຈົ້າເປັນເຊື້ອຊາດໃດ, ຊື່ວ່າຈັ່ງໃດນໍ ?"

ຍັກຕອບວ່າ : "ກູຄືວະລຸນນະຍັກ ຜູ້ເກັ່ງກ້າຊ່າລືໄປທົ່ວປ່າດົງວົງກົດ. ມະນຸດໜ້າໃດຕົກມາໃນເຂດນີ້ ແມ່ນຕາຍທັງນັ້ນ ! ບັກນ້ອຍມຶງແມ່ນໃຜ ? ມາແຕ່ໃສຈຶ່ງມາຮອດແຫ່ງນີ້. ກູຈະບໍ່ປ່ອຍໃຫ້ມຶງຫລຸດມືໄປເດັດຂາດ !"

ສິນໄຊເວົ້າກັບຍັກຢ່າງສຸພາບວ່າ : "ເອີ... ຄວາມຕາຍນີ້ແຂວນຄໍທຸກບາດຍ່າງ ມັນເລື່ອງທຳມະດາ. ຂ້ອຍຊື່ວ່າ ສິນໄຊ ຜູ້ບໍ່ຄຶດຢ້ານຕາຍ ຈຶ່ງກ້າຂ້າມພູຜາປ່າດົງ ມາຢຽບເຖິງຖິ່ນນີ້ຄົນດຽວ"

ຍັກໄດ້ຍິນຄຳເວົ້າ ອັນທ້າທາຍຂອງມະນຸດຕົວນ້ອຍໆ ຈຶ່ງຄຽດແຮງຈົນຮ້ອນກົກຫູອື່ໆ, ມັນຈັບຄ້ອນຫລູບໄປໃສ່ ແຕ່ສິນໄຊຍົກດາບຂຶ້ນຮັບຈົນອອກແສງມາບໆ, ທ້າວຮ້ອງທົ່ງໃສ່ມັນວ່າ : "ບັກຍັກຊາດຊົ່ວ ! ກູບໍ່ໄດ້ຮາວີຜູ້ໃດ, ເປັນຫຍັງມຶງມາເຮັດດັ່ງນີ້ໃສ່ກູ. ເຊົາເດີ ! ຖ້າບໍ່ດັ່ງນັ້ນ ມັບເປັນຜີຕາຍໂຫງຄັກ ໆ !"



ແຕ່ຍັກກໍບໍ່ຍອມເສຍປຽບ, ມັນໃຈຮ້າຍສຸດຂີດ ທີ່ມະນຸດຕົວນ້ອຍໆເວົ້າດູລ່າຜ່າເປຍ ມັນຈຶ່ງຄວ້າເອົາກ້ອນຫີນແລ່ນໃສ່ ກະວ່າຊິທັບຫົວສິນໄຊ, ແຕ່ສິນໄຊກໍຫລົບຫລີກໄດ້ທັນຢ່າງວ່ອງໄວ ຈົນຍັກເຊຖະຫລາໄປ, ຜູ້ໄດ້ຈັງຫວະ ສິນໄຊກໍຍິງລູກສອນ ໃສ່ຍັກຈົນບັດຕາຍ, ມັນດີ້ນບິດໂຕໄປມາດ້ວຍຄວາມເຈັບປວດ ທັງພົ່ນໄຟອອກຈາກປາກ ຫວັງໃຫ້ລວກລົນຄູ່ຕໍ່ສູ້ ແຕ່ສິນໄຊຢູ່ໃນທ່າເໜືອກວ່າ ຈຶ່ງຖອດດາບຟັນຄໍຍັກຂາດກະເດັນໄປ. ອາການໂມໂຫຮ້າຍຂອງວະລຸນນະຍັກດັບມອດໄປ ພ້ອມໆກັບຮ່າງຄີງອັນໃຫຍ່ໂຕທີ່ນອນຂວາງປ່າຢູ່ບໍ່ເໜັງບໍ່ຕີງ ສິ່ງກີນຄາວກຸ້ມໄປທົ່ວບໍລິເວນ.

## ຜ່ານແພ້ຊ້າງ

ຜ່ານການສູ້ຮົບຕົບຕີກັບຍັກລາຍທຳອິດແລ້ວ ສິນໄຊກໍຮີບຮ້ອນເດີນທາງຕໍ່ໄປ ຈົນຮອດແມ່ນ້ຳສາຍໜຶ່ງ ທີ່ກວ້າງສອງໂຍດ* ສັງທອງລອງຖາຢູ່ແຄມນ້ຳແທງນີ້ແລ້ວ, ສິນໄຊຂຶ້ນຂີ່ສັງທອງ ແລະພາກັນຂ້າມນ້ຳໄປຢ່າງບໍ່ມີອຸປະສັກໃດໆ, ຂຶ້ນເຖິງຝັ່ງແລ້ວ ສັງທອງກໍລ່ວງໜ້າໄປກ່ອນຕາມເຄີຍ, ສິນໄຊເຂົ້າສູ່ດົງຫລວງໄປ ໄກເຕີບເລີຍໄປເຫັນຮອຍຊ້າງຂະໜາດໃຫຍ່ກວ້າງເກືອບສາມວາ, ທ້າວນຳຮອຍຊ້າງໄປບໍ່ໄກປານໃດ ກໍຈອບໝູ່ຊ້າງນັບເປັນໝື່ນ ເປັນແສນໂຕ. ພວກຊ້າງແຕກຕື່ນ ແລະ ພາກັນແລ່ນໄປອອມ ຊ້າງເຜືອກ ຊື່ວ່າສັດທັນ ຊຶ່ງເປັນພະຍາຊ້າງຄຸມອານາເຂດອັນກວ້າງຂວາງ. ຊ້າງເຜືອກກາງຫູອອກພົ້ງອື້ງ ດ້ວຍຄວາມໂມໂຫ ທັງເວົ້າສຽງແຂງ ເປັນ

---

* **ໂຍດ** : ໄລຍະໄກປະມານສີ່ຊົ່ວສຽງມະນຸດເອີ້ນໃສ່ກັນ.

ການຂົ່ມຂູ່ວ່າ ຈະຈັບທ້າວນ້ອຍໂມ່ມເຂົ້າປາກກິນຕາງຫມ້ຽງຄໍາ ດຽວເລີຍ. ມັນປ້ອມງວງເຂົ້າທັງເວົ້າວ່າ ຂຶ້ນລົງກຽມຕໍ່ສູ້ກັບ ຜູ້ທີ່ມາ ລ່ວງລ້ຳເຂດແດນ, ຊ້າງບໍລິວານມີຫນ້າ ທີ່ປົກປ້ອງພະຍາຊ້າງ ກໍພາກັນຕັ້ງຕົວ ແລ້ວຫລັ່ງມາເປັນຂະບວນ ຈົນມືດທືບໄປຫມົດ ສຽງ ດັງສະນັ່ນຟ້າສະເທືອນດິນ. ເມື່ອຊ້າງມາຮອດໃກ້ສິນໄຊ ຊຶ່ງຢືນ ຢູ່ຢ່າງບໍ່ຫວັ່ນໄຫວກໍເຕາະສາຍທະນູ ເກີດ ສຽງດັງປານຟ້າຜ່າ, ພວກ ຊ້າງ ຈໍານວນນັບບໍ່ໄຂ່ວພາກັນຕື່ນຕົກໃຈ ແລ້ວບຽດກັນ ຫນີຈົນລົ້ມ ຊະລົ້ມຊາຍ. ພະຍາຊ້າງ ເຫັນອາການ ແຕກສະລຸຜຸພ່າຍປານແຜ່ນ ດິນປິ້ນຂອງບໍລິວານ ກໍເລີຍຂໍອ່ອນຂໍຍອມຕໍ່ສິນໄຊ ເພາະເຫັນວ່າ ທ້າວບໍ່ແມ່ນມະນຸດທໍາມະດາ ແຕ່ຫາກແມ່ນຜູ້ວິເສດທີ່ມີລິດເດດເຫລືອ ປະມານ. ຊ້າງເຜືອກຂໍອະໄພຍະ ໂທດນໍາສິນໄຊ ທີ່ໄດ້ສະແດງອາ ການໂມໂຫໂຫໂສຢ່າງບັງອາດ. ຝ່າຍສິນໄຊກ່າວວ່າຕົນບໍ່ໄດ້ຄິດອາ ຄາດບາດຫມາງ ຫລື ຜູກເວນ ແຕ່ຢ່າງໃດ ມີແຕ່ຄວາມປະສົງຢາກ ໄປນໍາເອົາອາຢູ່ເມືອງຍັກເທົ່ານັ້ນ, ທ້າວຖາມວ່າ ມີຜູ້ໃດຮູ້ເຫັນຮ່ອງ ຮອຍ ການທີ່ຍັກກຸມພັນໄປລັກ ເອົານາງສຸມຸນທາຫນີໄປຫລືບໍ່ ? ພະຍາ ຊ້າງເລົ່າວ່າ ໄດ້ເຫັນຍັກກຸມພັນອູ້ມເອົານາງຜ່ານກາຍໄປ ເມື່ອແປດ ປີມາແລ້ວ, ຍັກໂຕນີ້ ມີລິດເດດຫລາຍ ແລະ ກ່ອນຈະ ຮອດໂຕມັນ ກໍ ຕ້ອງຜ່ານດ່ານກັນດານ ຊຶ່ງມີຍັກສີ່ໂຕຂວາງຫນ້າຢູ່, ຜູ້ໃດກໍຕາມ ທີ່ຕົກເຂົ້າໄປໃນດ່ານນີ້ ຈະບໍ່ລອດຊີວິດໄປໄດ້ເລີຍ, ດັ່ງນີ້ ຕ້ອງ ລະວັງຕົວທີ່ສຸດ.

ສິນໄຊກ່າວຂອບໃຈໃນຄວາມຫວັງດີ ແລ້ວກໍເດີນທາງຕໍ່ ໂດຍ ມີຂະບວນຊ້າງແຫ່ແຫນໄປສົ່ງຈົນຫວິດດົງຊ້າງ.

# ບຸກດ່ານຍັກ

ສິນໄຊເລາະໄປຄົນດຽວ ລຽບຕີນພູທີ່ມີນ້ຳຕົກຕາດສຽງດັງອຶງຄະນຶງ, ຈາກບ່ອນນີ້ກໍຂຶ້ນພູເບັດໜ້າໄປສູ່ພູເງິນ ທີ່ຢູ່ສຸດຂອບຟ້າ. ທ້າວພັກແຮມຄືນໜຶ່ງ ຈຶ່ງມາຮອດເຂດອັນເປັນດ່ານຍັກສີ່ໂຕ, ຂະນະນັ້ນ ຍັກໂຕຊື່ວ່າ ຈິດຕະຍັກພວມກວດກາຮັກສາເຂດແດນຢູ່ເລີຍໄປພໍ້ສິນໄຊທີ່ເຊົາເມື່ອຍຢູ່ພະລານຫີນ, ມັນກ່າວຖ້ອຍຄຳຮຸນແຮງໃສ່ທ້າວຜູ້ລ່ວງລ້ຳເຂດແດນວ່າ: "ມຶງມາຜິດທາງ ແລ້ວ ! ສອດຫລອດມາຈັ່ງຊີ້ແມ່ນເອົາຊີວິດມາມອບໃຫ້ກູ ຮະ ຮະ ຮາ !"

24/VII

ສິນໄຊເວົ້າກັບມັນວ່າ: "ກູມາຫນີ້ບໍ່ໄດ້ຢ້ານຫົວມຶງດອກ ! ຍັກພວກສູບຽດບຽນກິນສັດອື່ນໆ ມານັບບໍ່ຖ້ວນແລ້ວ ຍັງບໍ່ພໍເທື່ອຫວະ ? ສຳລັບກູເລື່ອງຕາຍມັນເລື່ອງທຳມະດາເວີ້ຍ ."

ຫ້າມຈຳໜ່າຍ

ຈິດຕະຍັກໄດ້ຍິນຄຳເວົ້າອັນກ້າແຂງຂອງທ້າວນ້ອຍ ກໍໂມໂຫຂຶ້ນວຶດໆ ມີຍັກອີກສາມໂຕເຂົ້າມາອ້ອມສິນໄຊໄວ້ທັງຮ້ອງທັ່ງໃສ່ວ່າ: "ບັກນ້ອຍ ! ມຶງເວົ້າສະຫາວຈັ່ງຊີ້ ຕ້ອງຕາຍ, ມຶງແມ່ນໃຜ ?"

ທ້າວຕອບຢ່າງບໍ່ສະທ້ານຢ້ານກົວວ່າ: "ກູຄືສິນໄຊເວີ້ຍ ! ໜ້າໃດກໍຕາມທີ່ມາຂົ່ມຂູ່ກູແລ້ວ ຕ້ອງຖືກສອນຕາຍມັບດັບແຈບໂລດ !



ພວກຍັກຮູ້ວ່າ ມະນຸດຕົວນ້ອຍໆ ຜູ້ນີ້ ມີລິດເດດເກັ່ງກ້າ ຈຶ່ງຟ້າວຮ້ອງເອົາພັກພວກມາຊ່ອຍ, ບໍ່ດົນຍັກໃນເຂດພູເງິນກໍຫລັ່ງມາເປັນພັນເປັນຫມື່ນ ໂດຍມີໄມ້ຄ້ອນ ແລະ ຂວານເປັນອາວຸດຄົບມື. ສິນໄຊພະຍາຍາມຫາທາງປອງດອງ ໂດຍບອກຍັກໃຫ້ເຊົາອາຄາດບາດຫມາງ ເພາະທ້າວເອງບໍ່ໄດ້ມາບຽດບຽນຜູ້ໃດ, ແຕ່ພວກຍັກບໍ່ຍອມຟັງ, ສິນໄຊຈຶ່ງກຽມຕົວຕໍ່ສູ້ທັງໃຈກໍໄຫວ້ວອນຫາພະອິນໃຫ້ມາຊ່ອຍປົກປ້ອງ. ຍັກຈ້ອງເບິ່ງທ້າວແລ້ວກໍທະຍານເຂົ້າໃສ່ ແຕ່ສິນໄຊຫລົບຫລີກທັນ ແລະ ທັນໄປເອົາຄັນທະນູສວາກໃສ່ຈົນຍັກລົ້ມອາບຝາບ. ຍັກໂຕອື່ນໆ ຫຸ້ມມາຟາດຄ້ອນໃສ່ ແຕ່ສິນໄຊຈັບດາບກວັດແກວ່ງ ເກີດແສງມາບແມບ ແລະ ກາຍເປັນດາບເພັດນັບເປັນຫມື່ນໆດວງ ສະກັດໄມ້ຄ້ອນຂອງຍັກຈົນຫລຸດມື ຫລົ່ນລົງເດຍລະດາດຢູ່ຕາມພື້ນດິນ.

ຍັກຫຸ້ມມາໃສ່ບໍ່ຂາດສາຍ, ສຽງສູ້ຮົບດັງປານຟ້າປົ້ນແຜ່ນດິນໄຫວ. ບັດນີ້ສິນໄຊຫ້າງທະນູຍິງສອນໃສ່ ສຽງດັງປານຟ້າຜ່າ ເກີດໄຟລວກໄຫມ້, ພວກຍັກລົ້ມຕາຍລະເນລະນາດຢຽດໂຕຄົ້ງນິ້ງ ປານຂຽດຖືກນ້ຳຮ້ອນ. ລູກສອນນຳໄລ່ສັງຫານພວກຫົວຫນ້າຍັກທີ່ພະຍາຍາມຫລົບຫລີກໄປລີ້ຢູ່ຖ້ຳ ແລະ ງ່ອນຜາ ຈົນຕາຍບໍ່ເຫລືອຫລໍ. ພໍສຳເລັດຫນ້າທີ່ສັງຫານສັດຕູແລ້ວ ລູກສອນກໍກັບຕ່າວຄືນມາຫາສິນໄຊຄືເກົ່າ. ທ້າວຢືນເບິ່ງສະຫນາມຮົບ ຊຶ່ງບັດນີ້ ກາຍເປັນປ່າຊ້າຍັກຈຳນວນນັບບໍ່ໄຂວ ແລ້ວກໍອ່າຍຫນ້າຫນີເພື່ອຖິ້ມເຫດການດັ່ງກ່າວ ໃຫ້ຢູ່ເບື້ອງຫລັງ. ເສັ້ນທາງອັນຍາວໄກຍັງບໍ່ສຸດລົງງ່າຍເທື່ອສຳລັບສິນໄຊ.

# ພໍ້ຍັກຂີນີ

ສິນໄຊຂ້າມແມ່ນ້ຳອີກສາຍໜຶ່ງ ແລ້ວກໍມາຮອດພູອິນທະນິນ. ຕີນພູມີນ້ຳຫ້ວຍໃສເຢັນ ຊຶ່ງເຕັມໄປດ້ວຍແກ້ວມະນີຫລາຍສີສັນ ສົ່ງແສງເຫລື້ອມຍິບຍັບ. ທ້າວເອົາມືຟາຍຂຶ້ນມາເບິ່ງ ກໍເຫັນເມັດແກ້ວຫລາຍຂະໜາດ ມີທັງສີຂຽວ, ສີແຫລ້, ສີແດງ ແລະ ອື່ນໆ ຊຶ່ງລ້ວນແຕ່ມີຄ່າແພງ. ທ້າວຮູ້ສຶກດີໃຈທີ່ໄດ້ພົບເຫັນສິ່ງສົດໃສງາມຕາ, ມັນພາໃຫ້ມີຊີວິດຊີວາຂຶ້ນຕື່ມ, ແລ້ວທ້າວກໍເດີນມຸ່ງໜ້າໄປສູ່ແດນບອນຟ້າແຈ້ງຈ່າງປ່າງ. ນະທີ່ນັ້ນ ແມ່ນ້ຳຫລາຍ ສາຍໄຫລມາຈອບກັນ, ມີຖ້ຳແກ້ວ, ມີວິມານ ຂອງພວກພະຍາທອນ ຊຶ່ງທ່ອງທ່ຽວໄປມາບໍ່ຂາດໄລຍະ. ຜ່ານຈາກບ່ອນນັ້ນ ສິນໄຊກໍມາຮອດແດນຂອງຍັກຂີນີ.

ຍັກໂຕແມ່ເຫັນສິນໄຊກໍຕິດໃຈ ຢາກໄດ້ມາເປັນຜົວ. ມັນແປງເພດເປັນສາວງາມປານສາວສະຫວັນ ແລະ ເນລະມິດສາລາອັນວິຈິດສວຍງາມຂຶ້ນໄວ້ ເພື່ອໃຫ້ທ້າວພັກເຊົາ. ແລ້ວມັນກໍຂັບລຳສຽງອ້ອຍອິ່ນ ເພື່ອກ່ອມອາລົມສິນໄຊໃຫ້ອ່ອນໄຫວ ແລະ ພໍອົກພໍໃຈໃນຕົວມັນ. ສິນໄຊຫຍັບເຂົ້າໄປໃກ້ໆ ທັງຄຶດວ່າເປັນບຸນຂອງຕົນ ທີ່ໄດ້ມາພົບສາວສະຫວັນຢູ່ກາງປ່າ, ແຕ່ເມື່ອຈ້ອງເບິ່ງລັກໆ ກໍເລີຍເຫັນແຈ້ງວ່າ ແສງຕານັ້ນແຂງກະດ້າງ ທັງເຕັມໄປດ້ວຍເລລ່ຽມມາຍາ ມັນເປັນແສງຕາຂອງນາງຍັກຂີນີທີ່ປອມແປງຕົວ ເປັນນາງຟ້າ. ສິນໄຊຍ່າງໜີໄປໂດຍບໍ່ເອົາຫົວຊາກັບນາງເລີຍ, ແຕ່ນາງຍັກກໍຍ່າງນຳຫລັງ ທັງເວົ້າຈາອ້ອນວອນໃຫ້ທ້າວພັກເຊົານຳ ພໍໄດ້ ອຸ່ນໃຈ. ສິນໄຊ

ບໍ່ສົນໃຈ ຄົງຍ່າງຕໍ່ໄປເລື້ອຍໆ ຈົນນາງຍັກຍ່າງນຳບໍ່ທັນ ຈຶ່ງໄດ້ແຕ່ຮ້ອງດ່ານຳຫລັງວ່າ: " ຊາຍໂງ່ຈ້າ ຢ່າມາໃຫ້ເຫັນໜ້າອີກ! "

## ຕີກັບ ພະຍາທອນ *

ຫລັງຈາກເຂດນາງຍັກ ສິນໄຊມາຮອດບ່ອນໜຶ່ງ ທີ່ມີດອກໄມ້ບານເຮືອງເຮື່ອເປັນຫລາຍສີ, ບາງດອກມີກີບກ້ຽງອ່ອນນວນສົ່ງກິ່ນຫອມຫວນໄປທົ່ວດົງດອຍ. ທ້າວທ່ຽວຊົມດອກໄມ້ດ້ວຍຫົວໃຈປ່ຽມລົ້ນໄປດ້ວຍຄວາມສຸກສຳລານ ປານດັ່ງໄດ້ກອມກ້ຽວທ່ຽວຫລິ້ນກັບນາງຟ້າ ຫລື ສາວສະຫວັນຕາມລຳພັງ.

ຂະນະທີ່ສິນໄຊຊື່ນຊົມທຳມະຊາດຢູ່ນັ້ນ ພວກພະຍາທອນ ກໍພາກັນເຫາະມາເປັນໝູ່ ແລະ ຍາດກັນຊົມດອກໄມ້. ບາງພວກກໍວິວາດຜິດຖຽງກັນເຖິງຂັ້ນຟັນດາບກັນຢູ່ກາງອາກາດ. ພະຍາທອນຜູ້ໜຶ່ງເຫັນສິນໄຊກໍເລັ່ງໄປໃສ່ ແລະ ຮ້າຍດ່າວ່າ: "ບັກນ້ອຍມຶງມາແຕ່ທີ່ໃດ? ມາທ່ຽວລັກເສບຊົມດອກໄມ້ຢູ່ໜີ້ໂທດໜັກ ແທ້ໆໃດ ມຶງມາຫາບ່ອນຕາຍແລ້ວ!"

ສິນໄຊຕອບວ່າ: " ສູພວກທອນເຖົ້າ ພວກຜີບາບ ! ສູຊິກອງກັນຕາຍບັດນີ້ລະ ສູຮູ້ຈັກກູໜ້ອຍໄປ, ກູມາໜີ້ບໍ່ແມ່ນເພື່ອກໍ່ກຳທຳເວນຜູ້ໃດ, ຮັບຮູ້ເອົາໄວ້!"

---

* **ພະຍາທອນ ຫລື ທອນ** ແມ່ນຄົນຈຳພວກໜຶ່ງໃນນິທານ ທີ່ເຫາະເຫີນໄດ້ ແລະ ມີພຶດຕິກຳບໍ່ດີໃນດ້ານຊູ້ສາວ.

ພະຍາທອນຄຽດແຮງ ທີ່ສິນໄຊມາລັກຊົມດອກໄມ້ແລ້ວ ຍັງເວົ້າຈາກ້າແຂງ, ມັນກໍາດາບທະຍານເຂົ້າຫາ ຫວັງດັບຊີວິດ ທ້າວນ້ອຍຢ່າງງ່າຍດາຍ, ແຕ່ສິນໄຊໂດດຫລົບຢ່າງຄ່ອງແຄ່ວວ່ອງໄວເຮັດໃຫ້ພະຍາທອນພາດເປົ້າຫມາຍໄປ ແລ້ວຕັ້ງໂຕທັນ ຫນ້າມາໃຫມ່, ສິນໄຊຢູ່ໃນທ່າໄດ້ປຽບ ແຕ່ທ້າວຈັ້ງຕົວໄວ້ ທັງບອກ ມັນວ່າ ຄອນແພງຊີວິດໄວ້ດີກວ່າຈະມາຕາຍຍ້ອນເລື່ອງເລັກໆ ນ້ອຍໆ. ແຕ່ພະຍາທອນບໍ່ຍອມຟັງ ຍັງໂດດເຂົ້າມາອີກ ມືແກວ່ງດາບວຶດວັດ, ສິນໄຊຈໍາຕ້ອງຍົກດາບຂຶ້ນຮັບ ຈົນເກີດປະກາຍໄຟມາບແມບ. ທັງສອງສູ້ຢັນກັນໄປມາທັງຟັນທັງແທງທັງແກວ່ງ ດາບປັດປ່າຍ. ຝ່າຍພະຍາທອນເຖົ້າແກ່ກໍອ່ອນແຮງລົງ, ສິນໄຊຜູ້ມີລິດເດດຍັງເຂັ້ມແຂງ ແລະ ຫລົບຫລີກຄົມດາບໄດ້ຢ່າງງົດງາມ. ທ້າວຫລອກລໍ້ຝ່າຍກົງກັນຂ້າມຈົນຊິຫລົບບໍ່ທັນ, ເມື່ອໄດ້ຈັງຫວະດີໆ ທ້າວກໍຟັນຄໍພະຍາທອນຂາດກະເດັນ, ຝ່າຍພະຍາທອນກໍເກັ່ງ ທາງເວດມົນອາຄົມ ມັນຄວາມືໄປຈັບເອົາຫົວມາຕໍ່ຄືນ ແລ້ວການຕໍ່ ສູ້ກໍດໍາເນີນຕໍ່ໄປອີກຕື່ມ ແລະ ເພີ່ມຄວາມຂ້ຽວຂາດຮຸນແຮງຂຶ້ນ ຈົນບາງຄັ້ງທັງສອງຕ້ອງເຫາະຂຶ້ນໄປສູ້ກັນຢູ່ກາງອາກາດ ຟາດຟັນກັນໄປມາຢ່າງສຸດແຮງເກີດ ຈົນໃນທີ່ສຸດພະຍາທອນກໍເສຍທ່າອີກ, ດາບສິນໄຊປ່າຍເອົາຄໍພະຍາທອນຂາດປຸດ, ສິນໄຊໃຊ້ຄວາມ ວ່ອງໄວຄວ້າຈັບເອົາຫົວພະຍາ ທອນແກວ່ງໄປໄກໆ, ຮ່າງຄີງທີ່ ອາບເລືອດຂອງພະຍາທອນແລ່ນໄປນໍາເອົາຫົວຕໍ່ໃສ່ຄືນ ແລ້ວກໍແລ່ນຫນີໄປເລີຍ ເພາະມັນເຫັນວ່າ ຕົນເອງບໍ່ມີທາງທີ່ຈະເອົາຊະນະໄດ້. ສ່ວນພະຍາທອນໂຕອື່ນໆ ກໍພາກັນຫນີໄປຢ່າງບໍ່ມີຮ່ອງຮອຍ.

ສິນໄຊພັກເຊົາເອົາແຮງ ເພື່ອກຽມຈິດກຽມໃຈປະເຊີນກັບອຸປະສັກໃນຂັ້ນຕໍ່ໄປ ເຖິງແມ່ນວ່າ ເທິງເສັ້ນທາງນັ້ນ ສັງທອງໄດ້ບຸກເບີກເປັນແລວໄປກ່ອນແລ້ວກໍຕາມ.

# ຮອດແດນຍັກ ອັດສະມຸຂີ

ເມື່ອໄປຮອດຕີນພູແຫ່ງຫນຶ່ງ ສິນໄຊໄປພໍ້ຍັກອັດສະມຸຂີ ຊຶ່ງມີຫນ້າຄືກັບຫມາ. ມັນພວມຢູ່ໃນອາລົມເປົ່າປ່ຽວ ແລະ ຕື່ນເຕັ້ນດີໃຈທີ່ໄດ້ພົບພໍ້ກັບມະນຸດຮູບງາມ ຈຶ່ງຟ້າວເດ່ແຂນມາໂອບກອດອຸ້ມເອົາທ້າວແລ້ວແລ່ນໄປຕາມພະລານຫີນ ມຸ່ງຫນ້າສູ່ຖ້ຳອັນເປັນທີ່ຢູ່ຂອງມັນ. ສິນໄຊຕົກຢູ່ໃນທ່າຮັບເລີຍປ່ອຍໃຫ້ມັນອູ້ມໄປຊົ່ວໄລຍະຫນຶ່ງ ແລ້ວຈຶ່ງຖາມມັນວ່າ ຈະເອົາໄປເຮັດຫຍັງ ? ຍັກຕອບວ່າ ຈະເອົາໄປເປັນຄູ່ຊ້ອນນອນຮ່ວມຢູ່ໃນຖ້ຳ. ເມື່ອຮູ້ດັ່ງນັ້ນ ທ້າວຂໍຮ້ອງໃຫ້ມັນປ່ອຍໂດຍດີ ເພາະມີວຽກສຳຄັນຄອງຢູ່ທາງຫນ້າ. ຕໍ່ຄຳຂໍຮ້ອງດັ່ງກ່າວນັ້ນ ຍັກແຮ່ງກອດຮັດແຫນັ້ນເຂົ້າຕື່ມ ເພື່ອບໍ່ໃຫ້ສິນໄຊຫລຸດມືໄປໄດ້. ເມື່ອຮູ້ລັກແນ່ວ່າ ການເວົ້າດີໆກັບນາງຍັກຈະບໍ່ເກີດຜົນແຕ່ຢ່າງໃດ ສິນໄຊເລີຍຈຳໃຈຖອດດາບອອກແຫງ, ນາງຍັກວາງມືຈາກທ້າວປຸບປັບ ເພາະຄວາມເຈັບປວດບັງຄັບ, ມັນພະຍາຍາມໃຊ້ປາກສວາບກັດດັ່ງດຽວກັບຫມາ, ແຕ່ສິນໄຊເຄື່ອນໄຫວໄດ້ຄອງແຄ້ວກວ່າ ຈຶ່ງຟັນນາງຍັກຫລາຍບາດ ຈົນມັນຕາຍມອດມ້ອຍໃນທີ່ສຸດ.

ທ້າວກ່າວຄຳອະທິຖານ ໃຫ້ນາງຍັກໄປເກີດເທິງສະຫວັນ ຊັ້ນຟ້າ, ບໍ່ໃຫ້ມາວົນວຽນຕິດພັນກັບພວກຜີຍັກອີກຕໍ່ໄປ ບໍ່ວ່າເກີດຊາດໃດ.

# ຕົ້ນກັບລະພຶກ

ແລ້ວສິນໄຊກໍປີນພູຂຶ້ນໄປຈົນຮອດຈອມ. ຄວາມອິດເມື່ອຍປຸດເຊົາໄປເກືອບທັນທີ ເມື່ອສາຍຕາໄປພົບເຫັນຕົ້ນກັບລະພຶກອັນເປັນຕົ້ນໄມ້ວິເສດ ຊຶ່ງເລົ່າສືບຕໍ່ກັນມາແຕ່ປາງປະຖົມ. ຕົ້ນໄມ້ນີ້ ມີດອກໃສເຫລື້ອມ ລາມຈາກກິ່ງລົງມາຕາມລຳຕົ້ນຈົນຈໍາດິນ. ດອກມີຫລາຍຮູບຫລາຍຂະໜາດ ມີທັງເປັນດອກເງິນດອກຄໍາ ມີທັງເປັນແຜ່ນແພລວດລາຍເຫລືອງຄໍາ ລາຍເປັນຮູບ **ໂຕມອມ*** , ເຈຍ, ນົກເຄົ້າ, ບາງລາຍເປັນຮູບເຈົ້າຊີວິດນັ່ງຮຽງກັບມະເຫສີ, ຮູບເທບພະບຸດແນມນໍາເທບພະທິດາ. ສິນໄຊຕື່ນຕາຕື່ນໃຈ ທີ່ເຫັນ ຕົ້ນໄມ້ອອກດອກອອກຜົນເປັນຂອງທິບ ຊຶ່ງຫາຢູ່ທີ່ອື່ນໃດບໍ່ໄດ້ອີກແລ້ວ ໃນແຜ່ນດິນນີ້. ທ້າວຈັບເອົາຜ້າຜືນງາມທີ່ສຸດມາແປະໃສ່ຄີງ ເບິ່ງຄືຜ້າອຸທຸມພອນສີຟ້າ ແລະ ຜ້າໂກໄສສີສົ້ວ ຊຶ່ງເຊີງຕໍ່າດ້ວຍໄຫມຄໍາ. ຜ້າໂກໄສຖືກໃຈທ້າວເປັນພິເສດ ທ້າວຈຶ່ງພັບຈີບຄືໆ ແລ້ວເອົາໃສ່ບັ້ງລູກສອນໄວ້. ສິນໄຊແຍງເບິ່ງຕົ້ນກັບລະພຶກ ດ້ວຍຄວາມອອນຊອນ ຄືຈະບໍ່ມີຍາມເປີດເປັນ, ແລ້ວກໍຈໍາໃຈເອົາຕົວຈາກແຫ່ງນີ້ໄປດ້ວຍຄວາມເສຍດາຍ.

ສິນໄຊເລາະລຽບລົງພູ ໄປຮອດບ່ອນນໍ້າໄຫລອອກຈາກຕີນຜາ, ນໍ້າໃສເຢັນຈົນຫລຽວເຫັນເມັດແກ້ວເດຍລະດາດຕາມພື້ນ, ມີແກ້ວນິລະກົດ ແກ້ວພິທູນ ແກ້ວປັດທະມະລາດ ແກ້ວມະນີໂຊດແກ້ວພິ

---

* ມອມ ແມ່ນສັດໃນນິທານ ລັກສະນະເຄິ່ງຊ້າງເຄິ່ງສິງ.

ລາ ແກ້ວທຳມະໂຣງ ແກ້ວມະຫານິນ ແກ້ວບັບພາ (ສີກ່ານ) ແລະ ອື່ນໆ ນັບບໍ່ຖ້ວນ. ສິນໄຊແນມເບິ່ງແກ້ວດ້ວຍຄວາມຊື່ນຊົມ ອອນຊອນ ແລະ ເອົາມືຟາຍຂື້ນເບິ່ງ ທັງລູບໄປມາດ້ວຍຄວາມຮູ້ສຶກເບີກບານສຳລານໃຈ. ຮູບພາບອັນງົດງາມຂອງທຳມະຊາດ ເຮັດໃຫ້ທ້າວລືມຄວາມຮູ້ສຶກປ່ຽວພອຍຫງອຍເຫງົາ ເພາະຄິດຮອດແມ່ ລົງໄດ້ ເປັນຊົ່ວຄັ້ງຊົ່ວຄາວ.

## ຊົມກິນນະລີລົງອາບນ້ຳ

ໂດຍເລາະລົງໄປຕາມແຄມຫ້ວຍ ສິນໄຊກໍໄປຮອດສະຖານທີ່ອັນມີນ້ຳຕົກໄຫລລົງສູ່ວັງເວີນໃຫຍ່, ແຄມຝັ່ງເປັນພະລານຫີນສະຫວາດສະເຫວີຍ. ພວກນາງກິນນະລີຈຳນວນຫລາຍພາກັນມາລົງຫລິ້ນນ້ຳຢູ່ບ່ອນນີ້ເປັນປະຈຳ, ເມື່ອເຊີ່ນລົງເຖິງພື້ນ ພວກນາງກໍປົດປີກ ແລະ ຫາງອອກ ແລ້ວພາກັນອາບນ້ຳລອຍຫລິ້ນຢ່າງມີຄວາມສຸກ. ແຕ່ລະນາງຮ່າງອ່ອນແອ້ນ, ຜິວຂາວນວນງາມຜ່ອງ ຜົມປານອິນແຕ້ມແຕ່ງ, ໃຜໄດ້ແຍງແລ້ວບໍ່ມີມື້ໜ່າຍເປັນ. ບາງນາງຮ້ອງຂັບລຳ ແລະ ຟ້ອນແອ່ນຢູ່ເທິງພະລານຫີນ ປີ້ນຊ້າຍປີ້ນຂວາ ແລະ ເກາະກ່ຽວກັນເປັນຈັງຫວະ ໂດຍມີສຽງນ້ຳຕົກຕາດເປັນດົນຕີບັນເລງກ່ອມ.

ສິນໄຊຈອບເບິ່ງດ້ວຍຄວາມຕື່ນຕາຕື່ນໃຈ ແລະ ຄິດຢາກເຂົ້າໄປຫາໃກ້ໆ ຈຶ່ງປາກົດຕົວອອກ ແລະ ຮ້ອງໄປໃສ່ພວກນາງ ດ້ວຍນ້ຳສຽງເປັນມິດໄມຕີ, ຝ່າຍນາງກິນນະລີ ພ້ອມກັນຫລຽວມາ ແລະ ເມື່ອເຫັນສິນໄຊກໍພາກັນທ້ວງຂື້ນວ່າ ນັ້ນແມ່ນຄົນ, ແລ້ວກໍມີສຽງປ່າວເຕືອນກັນໃຫ້ບິນໜີ. ນາງກິນນະລີສ່ວນໜຶ່ງພືປີກບິນເປັນອື່ນໆ,



ສິນໄຊເລີຍຮ້ອງບອກວ່າ ຕົນບໍ່ໄດ້ມາທຳຮ້າຍບຽດບຽນຜູ້ໃດ ຫາກແຕ່ມີຈຸດປະສົງມາຂໍຂອດຮັກຂອດແພງກັບພວກນາງ. ຝ່າຍນາງກິນນະລີຮ້ອງຕອບວ່າ ພວກຕົນເປັນປັກສີ ເຊື້ອແນວເດຍ ລະສານບໍ່ອາດຈະໄຝ່ຝັນຫລົງຕົນໄປຮັກກັບມະນຸດຜູ້ສູງສັກໄດ້, ອີກປະການໜຶ່ງ ຜູ້ເຖົ້າມັກເລົ່າສືບຕໍ່ກັນມາວ່າ ທຳມະຊາດຂອງຄົນນັ້ນ ມັກເວົ້າຕົວະລ່າຍເປັນແທ້ໆ. ສິນໄຊຢືນຢັນວ່າ ຕົນມີຄວາມຈິງໃຈ ຫວັງຮັກໝັ້ນ ຜູກພັນດ້ວຍຄວາມບໍລິສຸດ, ຂໍໃຫ້ເຫັນໃຈຊາຍພອຍເດີນປ່າ, ຖ້າພວກນາງປະຕິເສດແລ້ວ ຕົນເອງກໍຈະແອ່ວ ວອນຢູ່ນານ ນັບເປັນພັນ ປີກໍຊິບໍ່ຍອມປະລະວາຍໆ. ທ້າວເວົ້າຈາ ສຽງຫວານ ຈົນໃນທີ່ສຸດ ພວກນາງກິນນະລີກໍໃຈອ່ອນ, ພວກທີ່ບິນ ຂຶ້ນເວີ່ນຢູ່ເທິງກໍກັບຄືນລົງມາ, ແລ້ວບໍລິເວນນັ້ນກໍເຕັມໄປດ້ວຍ ນາງກິນນະລີທີ່ມີລີລາຍ່າງຍ້າຍອ່ອນຊ້ອຍອໍລະຊອນ. ພວກໜຶ່ງພາກັນຟ້ອນແອ່ນສະບັດປີກແລະ ແພນຫາງເປັນເຫລື້ອງຫລ້າງ, ລຳແຂນກົມງາມ ແລະ ກົ່ງເປັນຄືດັ່ງຄັນສອນ, ພວກນາງເຊີນສິນໄຊຟ້ອນນຳ ເພື່ອເປັນການສ້າງບັນຍາກາດລົ້ງແກວ່ນສະໜຸກສະໜານ. ຄູ່ຟ້ອນຂອງທ້າວຊື່ວ່ານາງກຽງຄຳ ຜູ້ຊຶ່ງຕິດອົກຕິດໃຈໃນ ຕົວສິນໄຊເປັນພິເສດ. ທັງສອງຢູ່ໃນອາລົມເບີກບານມ່ວນຊື່ນ ຕ່າງ ຝ່າຍຕ່າງພໍໃຈຊຶ່ງກັນແລະກັນ, ດັ່ງນີ້ເສັ້ນທາງຮັກຂອງທັງສອງ ຈຶ່ງບໍ່ມີສິ່ງໃດມາກີດຂວາງໄດ້, ມີແຕ່ຄວາມ ສົດຊື່ນຫອມຫວນ ຄື ດັ່ງເສັ້ນທາງໃນສວນອຸດທິຍານ. ແຕ່ເວລາ ກັບຄວາມຮັກນັ້ນ ບໍ່ຄ່ອຍປະນີປະນອມກັນ. ພໍທັງສອງຄອງຮັກກັນຢ່າງດູດດື່ມ ວັນເວ ລາກໍປະກົດວ່າຜ່ານໄປໄວກວ່າປົກກະຕິ. ທ້າວກັບນາງກຽງຄຳ ກອດກ່ຽວສຳພັນກັນຢູ່ເຈັດວັນ ກໍຮອດບັ້ນຕ້ອງພັດພາກຈາກກັນ. ສິນໄຊມີວຽກງານອັນຈຳເປັນຄອງຢູ່ທາງໜ້າຈຶ່ງຈຳໃຈອຳລານາງໄປ ທ່າມກາງສຽງອ້ອນວອນ ຈົ່ມຫາອາໄລຂອງກຽງຄຳ ຊຶ່ງ ຍາມໃດກໍຮຽກຮ້ອງໃຫ້ສິນໄຊກັບຕ່າວຄືນມາຫາອີກ. ສິນໄຊຮັບປາກວ່າຈະກັບຄືນມາໃນອີກໜຶ່ງເດືອນກັບມາຍັງພະລານຫີນແຫ່ງນີ້ ບ່ອນທີ່ເປັນສັກຂີພິຍານແຫ່ງຄວາມຮັກຂອງທັງສອງ.

ທ້າວ ກອດເອົານາງເອ້ນາແນບອົກເປັນຄັ້ງສຸດທ້າຍ ແລ້ວກໍເດີນທາງຈາກໄປ. ສ່ວນນາງກຽງຄຳພ້ອມດ້ວຍໝູ່ກິນນະລີ ພາກັນບິນກັບຄືນສູ່ຖ້ຳຜາຈອງ.

ສິນໄຊຕ້ອງເລັ່ງບາດຍ່າງໄວກວ່າປົກກະຕິ ເພື່ອທົດແທນເວລາທີ່ເສຍໄປນຳເຫດການປະທັບໃຈ ຢູ່ແຄມວັງເວີນແຫ່ງນັ້ນ. ເມື່ອໄປຮອດແຄມນ້ຳສະໝຸດໃຫຍ່ ບ່ອນທີ່ສັງທອງຄອງຖ້າຢູ່ຜູ້ນ້ອງຖາມອ້າຍເຖິງສາເຫດທີ່ຊັກຊ້າ ຈົນເວລາລ່ວງໄປຕັ້ງແປດວັນ, ສິນໄຊຕອບນ້ອງ ໂດຍເລົ່າຄວາມຈິງ ທີ່ໄດ້ໄປມັກຮັກກັບນາງກິນນະລີຢູ່ກາງໄພ, ສັງທອງບໍ່ຈົ່ມບໍ່ວ່າຫຍັງ ແລ້ວກໍພາອ້າຍຂ້າມ ນ້ຳໄປຢ່າງວ່ອງໄວ.

ສິນໄຊຖາມວ່າ : "ຍັງອີກໄກປານໃດ ຈຶ່ງຈະຮອດຈຸດໝາຍປາຍທາງ ?" ສັງທອງຕອບວ່າ: "ຖ້າໄປຢ່າງຮີບດ່ວນກໍໃຊ້ເວລາອີກສອງມື້. ນ້ອງເອງຈະລັກລອບເຂົ້າໄປຈອບເບິ່ງສາກ່ອນ ເພາະເມືອງຍັກນີ້ຕ້ອງມີວິທີແນບນຽນ ຈຶ່ງເຂົ້າໄປໄດ້ຢ່າງປອດໄພ ຂໍໃຫ້ອ້າຍຄອງຖ້າຢູ່ຫນີ້ສາກ່ອນ." ສັງທອງບອກອ້າຍແລ້ວກໍລ່ວງໄປກ່ອນຕາມເຄີຍ. ສິນໄຊຄອງຖ້າຢູ່ແຄມນ້ຳ ຈົນເຊືອບຫລັບຝັນໄປ.

## ພົບອາສຸມຸນທາ

ສັງທອງເຮັດຫນ້າທີ່ໄປສອດແນມເບິ່ງບ່ອນຢູ່ ຂອງຍັກກຸມພັນຢ່າງລະອຽດ ແລ້ວກັບມາບອກສິນໄຊ. ສອງອ້າຍນ້ອງປຶກສາຫາຮືນຳກັນເລື່ອງຍຸດທະວິທີ ແລ້ວກໍພາກັນບຸກຫນ້າມຸ່ງສູ່ເມືອງອະໂນ



ລາດ. ເມື່ອໄປຮອດຜາສາດຂອງຍັກສັງທອງເລາະລຽບຮັກສາຢູ່ບໍລິເວນ ຮອບນອກ. ຍັກກຸມພັນບໍ່ຢູ່ ເພາະແມ່ນຍາມມັນໄປໂຫ່ ເນື້ອຢູ່ປ່າ. ສິນໄຊ ເຮັດໜ້າທີ່ເຂົ້າໄປໃນຜາສາດ ແລ້ວຕົບປະຕູເອີ້ນຫາຄົນທີ່ຢູ່ພາຍໃນເພື່ອໃຫ້ໄຂປະຕູ. ທ້າວເອີ້ນຢູ່ດົນເຕີບ ແຕ່ບໍ່ມີຜູ້ໃດຂານຕອບ ທ້າວເລີຍໃຊ້ກົນອຸບາຍ ໂດຍເວົ້າໝິ່ນປະໝາດວ່າ : "ໃຜຢູ່ໃນຫັ້ນ ມີຜົວແລ້ວຫລືຍັງ, ຖ້າຍັງເປັນໂສດນັ້ນ ຂໍເປັນຄູ່ຊ້ອນນອນຮຽງແດ່, ມັກຫລືບໍ່ມັກ ກໍຂໍໃຫ້ໄຂປະຕູອອກມາເບິ່ງໜ້າເບິ່ງຕາດູ."

ນາງສຸມຸນທາໄດ້ຍິນສຽງເດັກນ້ອຍເວົ້າສະຫາວ ກໍເກີດໂມໂຫ ຈຶ່ງສ່ອງເບິ່ງທາງປ່ອງຢ້ຽມ, ນາງເຫັນທ້າວນ້ອຍມີໜ້າຕາຄ້າຍຄືເຊື້ອແນວຂອງຕົນ ຈຶ່ງສໍ້ຖາມວ່າ ແມ່ນໃຜ ? ມາແຕ່ໃສ ? ຝ່າຍສິນໄຊບອກຊື່ຕົນເອງພ້ອມທັງຊື່ພໍ່ແມ່ ແລະວ່າທີ່ມານີ້ ແມ່ນມານໍາເອົາອາຄືນເມືອເມືອງເປັງຈານ. ນາງສຸມຸນທາໄຂປະຕູໃຫ້ ແລ້ວສິນໄຊກໍເຂົ້າໄປໃນຜາສາດ, ນາງໂຊມກອດເອົາຫລານທັງ ຮ້ອງໄຫ້ຟາຍນໍ້າຕາດ້ວຍຄວາມຕື້ນຕັນໃຈ, ແຕ່ແລ້ວນາງກໍບອກຫລານວ່າ : "ເລື່ອງໜີກັບຄືນໄປເມືອງເປັງຈານນີ້ ບໍ່ມີທາງເປັນໄປໄດ້ ເພາະຍັກກຸມພັນມີລິດເດດເກັ່ງກ້າຫລາຍ ມັນບໍ່ຍອມເດັດຂາດ, ດັ່ງນີ້ ຈຶ່ງໃຫ້ຫລານກັບຄືນໄປບອກພະຍາກຸສະລາດວ່າ ບໍ່ພົບ ບໍ່ເຫັນອາເດີ ." ຝ່າຍສິນໄຊກໍເວົ້າວ່າ : "ສໍາກຸມພັນນີ້ ບໍ່ມີຫຍັງເປັນຕາຢ້ານ, ໃຕ້ລຸ່ມຟ້ານີ້ມີໃຜແດ່ຈະມາຂັດຂວາງເສັ້ນທາງຂອງສິນໄຊໄດ້, ຕົກລົງໄດ້ຂ້າມນໍ້າສະໝຸດຂ້າມພູຜາຫລາຍລັ່ນມາແລ້ວ ແນວໃດຫລານ ກໍຕ້ອງສູ້ແບບເອົາຊີວິດເຂົ້າແລກເພື່ອເອົາອາຄືນເມືອ, ຫລືວ່າ ອາຮັກແພງຍັກຫລາຍກວ່າຜູ້ເປັນອ້າຍຄີງຂອງອາບໍ ?"

ຝ່າຍອາເຫັນທ່າທາງບໍ່ຍອມຄົນວ່າຍໆ ຂອງຫລານຊາຍ ຈຶ່ງບອກວ່າ : "ຂໍໃຫ້ອົດສາຖ້າຢູ່ອີກຄາວໜຶ່ງ ຊາມຊາຍັກກຸມພັນກັບຄືນມາ ເພື່ອວ່າອາຈະໄດ້ສັ່ງລາຜົວສາກ່ອນ." ແຕ່ສິນໄຊບໍ່ ຍອມ

ເພາະວ່າ ຖ້າຍັກກັບມາແລ້ວ ອາດເກີດການຕໍ່ສູ້ ແລ້ວຈະເສຍເວລາ. ສຸມຸນທາເວົ້າອີກວ່າ : "ລັບຊັ້ນຂໍໃຫ້ຫລານຄືນເມືອກ່ອນ, ຍາມໃດຍັກກຸມພັນກັບມາແລ້ວ ອາຊິຈໍາໃຫ້ລາວໄປສົ່ງດອກ." ສິນໄຊບໍ່ຍອມອີກ.

ສຸມຸນທາເວົ້າອ້າງເຫດຜົນຫລາຍອັນຫລາຍແນວ ເພື່ອແກ່ຍາວເວລາ. ນາງຄິດວ່າຖ້າຫນີໄປ ກຸມພັນຕ້ອງນໍາໄປຂັດຂວາງຢ່າງສຸດຂີດ. ນາງບໍ່ແນ່ໃຈວ່າ ສິນໄຊຈະມີລິດເດດເກັ່ງກ້າ ເຫນືອກວ່າຍັກກຸມພັນ, ດັ່ງນັ້ນນາງຈຶ່ງທ້າທາຍໃຫ້ສິນໄຊສະແດງລິດເດດລອງເບິ່ງ. ສິນໄຊຍິງສອນຂຶ້ນຟ້າ ເກີດສຽງດັງກ້ອງສະນັ່ນໄປທົ່ວຈັກກະວານ, ລູກສອນລຸກເປັນໄຟທະຍານຂຶ້ນເວຫາ ຮຸ່ງເຫລື້ອມໄປທົ່ວພິພົບປານວ່າຈະລາມໄຫມ້ທຸກຢ່າງບໍ່ໃຫ້ເຫລືອຫລໍ, ສຸດທ້າຍລູກສອນກໍກັບຄືນມາຫາສິນໄຊ. ນາງສຸມຸນທາຢ້ານສັ່ນເຊັນ ຈຶ່ງກອດຫລານໄວ້ ທັງເວົ້າຍົກຍ້ອງວ່າ ບໍ່ມີຜູ້ໃດຈະມາທຽມທັນກັບຫລານໄດ້.

ແນວໃດກໍຕາມ ສຸມຸນທາກໍຂໍຮ້ອງນໍາຫລານໃຫ້ເຫັນໃຈອາ ເພາະແນວໃດກໍໄດ້ສົມສູ່ຢູ່ນໍາກັນກັບກຸມພັນດົນນານແລ້ວ ຜົວເມຍຍ່ອມມີຄວາມຜູກພັນຕໍ່ກັນ, ເມື່ອຈໍາເປັນຕ້ອງພັດພາກຈາກບ້ານ ກໍຂໍໃຫ້ໄດ້ເຫັນຫນ້າ ແລະ ສັ່ງລາກັນ. ນາງເຫັນວ່າ ລິດເດດຂອງຫລານຊາຍນັ້ນເຫນືອກວ່າຍັກກຸມພັນ ຈຶ່ງເຕືອນສິນໄຊວ່າ ຢ່າເຮັດຮຸນແຮງຈົນເຖິງຂັ້ນກຸມພັນຕ້ອງຕາຍດັບວາຍເລີຍ. ສ່ວນສິນໄຊກໍເວົ້າວ່າ ມັນຂຶ້ນກັບພຶດຕິກໍາຂອງກຸມພັນວ່າຈະຈິ່ງອັ່ງມັ່ງນໍສໍ່າໃດ.

ໃນທີ່ສຸດ ກໍຮອດເວລາທີ່ຍັກກຸມພັນກັບຕ່າວຄືນມາແຕ່ປ່າ. ສັງທອງບອກສິນໄຊວ່າ ຍັກກຸມພັນມາຮອດໃກ້ຜາສາດແລ້ວ. ສິນໄຊກຽມຕົວ ມືຈັບດ້າມດາບໄວ້ແຫນ້ນ ທ່າທາງເດັດດ່ຽວພ້ອມທີ່ຈະປະ



ເຊີນໜ້າກັບເຫດການທຸກຢ່າງ. ນາງສຸມຸນທາຂໍຮ້ອງນຳຫລານ ໃຫ້ຫລີກເວັ້ນການປະທະ ຈຶ່ງເອົາຫລານໄປເຊື່ອງໄວ້ຢູ່ພຸ່ມດອກໄມ້ຂ້າງເສົາພາຍໃນຜາສາດ ໂດຍບໍ່ປະຮ່ອງຮອຍໃດໆໃຫ້ ເປັນທີ່ສົງໄສ.

ຍັກກຸມພັນກ້າວຂຶ້ນຜາສາດດ້ວຍອາການໂຊເຊ ເພາະຕາມືດມົວ ຍ້ອນກະທົບກັບແສງເຫລື້ອມອັນແຮງກ້າ ຈາກລູກສອນໄຟ ເວລາຢູ່ກາງປ່າ. ມັນງົມຫາວເຂົ້າປະຕູແລ້ວກໍຮູ້ສຶກໄດ້ກິ່ນແປກຕ່າງ ນັ້ນຄືກິ່ນຄົນແປກໜ້າ. ມັນສໍ້ຖາມເມຍແບບເອົາເລື່ອງວ່າ: "ມີຜີນ້ອງຂອງເຈົ້າຈາກເມືອງມະນຸດມາຫາແມ່ນບໍ່ ? ລີ້ຢູ່ໃສໃຫ້ບອກມາໃດ !"

ສຸມຸນທາວ່າບໍ່ມີມະນຸດໜ້າໃດ ໃນຜາສາດແຫ່ງເມືອງອະໂນລາດນີ້ ນອກຈາກນາງຄົນດຽວ ທີ່ພວມຄອງຄອຍຜົວດ້ວຍຄວາມ ເປັນຫ່ວງ. ແຕ່ຍັກກຸມພັນກໍຍັງຢືນຢັນວ່າໄດ້ກິ່ນຄົນແທ້ໆ, ມັນສົງໄສໃນຄວາມຈົງຮັກພັກດີຂອງຜູ້ເປັນເມຍ ເພາະເຫັນສີໜ້າສຸມຸນທາບໍ່ເປັນປົກກະຕິ. ສອງຝ່າຍຜິດຖຽງກັນເຖິງຂັ້ນຮຸນແຮງ.

ສຸມຸນທາຄຽດຫລາຍຈົນອົດບໍ່ໄດ້ ຈຶ່ງເວົ້າທັ່ງໃສ່ຜົວວ່າ: "ເຈົ້າຕາມືດມົວຈຶ່ງເຫັນໜ້າຂ້ອຍບໍ່ປົກກະຕິ, ຖ້າຜີນ້ອງຂ້ອຍມານຳເອົາແທ້ ຂ້ອຍຊິປ່ອຍໃຫ້ເຂົາຈັດການກັບເຈົ້າຈົນມຸ່ນໂລດ, ບໍ່ໃຫ້ ໄດ້ຖຽງພໍຄວາມຊໍ້າ !"

ຍັກກຸມພັນເຫັນເມຍປະຕິເສດສຽງແຂງ ແລະ ຢ່າງເດັດດ່ຽວກໍເລີຍອ່ອນສຽງລົງແລ້ວກໍລົ້ມຕົວລົງນອນ ເພາະເມື່ອຍອ່ອນ ຢ່າງບໍ່ເຄີຍເປັນມາກ່ອນ ຈາກການໄປຫ່ຽວໂຫ່ເນື້ອໃນປ່າ. ມັນຫລັບ ແລະກົນສຽງດັງປານຊ້າງຮ້ອງ. ສິນໄຊຮູ້ວ່າ ຍັກຫລັບແຈບ ແລ້ວກໍອອກມາຈາກບ່ອນລີ້ ແລະ ດຶງເອົາອາອອກມານອກ ເພື່ອກຽມໜີ, ແຕ່

ຜູ້ເປັນອາຍັງອາໄລຫ່ວງຫາຜົວຈຶ່ງທຳທ່າລືມຜ້າສະໄບ ແລ້ວກໍກັບຄືນເຂົ້າໄປໃນຫ້ອງນອນ. ນາງໄປຊັກສັ່ນກຸມພັນໃຫ້ຕື່ນແຕ່ຜົວຫລັບແຈບຈົມປານກ້ອນຫີນ, ນາງປຸກແນວໃດຜົວກໍບໍ່ຕື່ນ ຈົນຫລານອົດເປັນຫ່ວງບໍ່ໄດ້ ຈຶ່ງນຳເຂົ້າໄປເບິ່ງ, ນາງຟ້າວ ດຶງເອົາຜ້າ ສະໄບແລ້ວອອກມາ. ພໍຫລີດຈາກຫ້ອງ ນາງກໍບອກວ່າລືມປິ່ນເກົ້າຈຶ່ງກັບຄືນເຂົ້າໄປອີກ, ສິນໄຊບອກໃຫ້ອາດ່ວນຟ້າວ ເພາະຢ້ານຍັກຕື່ນ. ນາງເອົາປິ່ນເກົ້າແລ້ວກໍອອກມາ ແຕ່ບັດນີ້ຊ້ຳ ພັດລືມຊ້ອງ. ນາງກັບຄືນໄປອີກເປັນເທື່ອທີສາມ. ທຸກເທື່ອທີ່ເຂົ້າ ໄປໃນຫ້ອງ ນາງໄປປຸກຜົວໃຫ້ຕື່ນ ທັງນີ້ເພາະນາງຮູ້ດີວ່າຕົນເອງ ບໍ່ອາດຂືນຄວາມຂອງຫລານໄດ້ ຈຶ່ງຢາກໃຫ້ຜົວເປັນຝ່າຍຍາດຊິງ ເອົາຕົນໄວ້, ແຕ່ປາກົດວ່າປຸກເທົ່າໃດ ກຸມພັນກໍຍິ່ງຫລັບລື່ນລັ້ນບໍ່ມີ ຮູ້ເມື່ອຄີງ. ຈຳເປັນສິນໄຊໄດ້ນຳເຂົ້າໄປຫາ ແລະ ເລັ່ງໃຫ້ອາອອກ ມາ.

ນາງສຸມຸນທາຈຳໃຈໜີຈາກເມືອງຍັກ ດ້ວຍຄວາມເປັນຫ່ວງອາໄລຜົວຈົນນ້ຳຕາໄຫລອາບແກ້ມ. ສິນໄຊກັບສັງທອງພາອາໄປພັກເຊົາຢູ່ຖ້ຳແກ້ວທີ່ພູແຫ່ງໜຶ່ງ ຊຶ່ງແນມຈາກບ່ອນນີ້ ພໍຫລຽວເຫັນຈອມແຫລມຂອງຜາສາດແຫ່ງເມືອງອະໂນລາດຢູ່ໄກໆບ່ອນສຸດຂອບຟ້າ.

## ລອງແຮງກັບຍັກກຸມພັນ

ພາຍຫລັງພັກຜ່ອນມີແຮງແລ້ວ ສິນໄຊກັບສັງທອງຕ້ອງຄືນໄປສະກັດກັ້ນຍັກກຸມພັນ ທີ່ຈະນຳມາຂັດຂວາງການຫລົບໜີຂອງນາງສຸມຸນທາ. ພວກທ້າວເອົາກ້ອນຫີນຕັນປາກຖ້ຳໄວ້ ເພື່ອຮັບປະກັນຄວາມປອດໄພ ແລະ ເພື່ອບໍ່ໃຫ້ອາລັກໜີໄປ, ແລ້ວທັງສອງກໍພາກັນກັບຄືນໄປຈົນຮອດຜາສາດຂອງຍັກ.

ສິນໄຊເຂົ້າໄປຫາກຸມພັນ ເລີຍເກີດການຕໍ່ສູ້ກັນ ຢ່າງດຸເດືອດ. ສິນໄຊເອົາດາບຟັນຄໍຍັກກຸມພັນຂາດສະເດັນ ແຕ່ກຸມພັນກໍມີລິດເດດເກັ່ງກ້າ ໂດຍແຜງລິດເກີດເປັນຍັກ ຂຶ້ນມາໃຫມ່ພາບດຽວເຈັດໂຕ ພ້ອມທັງຖືຄ້ອນທອງສີເຫລືອງຫຸ້ມມາໃສ່ສິນໄຊ. ແຕ່ສິນໄຊກໍາດາບກວັດແກວ່ງເປັນແສງມາບແມບຄືດັ່ງຟ້າຜ່າ. ແສງອັນນີ້ໄປຖືກຍັກ ລົ້ມຕາຍອາບຟາບເດຍລະດາດ. ຍັກແຕ່ລະໂຕທີ່ຕາຍນັ້ນ ເກີດເປັນຍັກເພີ່ມຂຶ້ນມາອີກເຈັດໂຕ ແລະ ເປັນໄປດັ່ງນີ້ລົ້ມໄປລົ້ມມາຫລາຍເທື່ອຫລາຍທີ ຈົນຈໍານວນຍັກເພີ່ມຂຶ້ນເປັນພັນໆ ພວກມັນຍົກຂະບວນມາຈົນຂີ້ໄຕ່ກຸ້ມມືດໄປທົ່ວທິບ ຫມາຍຈະດັບສູນສິນໄຊ ແລະ ສັງທອງບໍ່ໃຫ້ເຫລືອ ແມ່ນແຕ່ຮ່ອງຮອຍ.

ບັດນີ້ ສິນໄຊຕ້ອງໃຊ້ທະນູຍິງໃສ່, ທ້າວກົ່ງຄັນສອນດ້ອຍທ່າທາງທະນົງອົງອາດແລ້ວປ່ອຍລູກສອນໄປ ເກີດເປັນໄຟລຸກວາບ. ລົດອັນຮ້ອນຮົນລາມໄຫມ້ພວກຍັກຈົນລົ້ມລ່າວ, ໂຕໃດຍັງໂງຫົວຂຶ້ນມາໄດ້ ກໍຖືກສັງທອງງັບຫົວຈົນແປ. ໂຕທີ່ເຫລືອຕາຍ ຟ້າວຫລົບຫນີໄປໂດຍມຸ່ງຫນ້າສູ່ປ່າໄພຫນາທີ່ແນມເຫັນຢູ່ສຸດຂອບ ຟ້າ.

ເມື່ອຍັກຫນີໄປແລ້ວ ສິນໄຊແລະ ສັງທອງກໍກັບຄືນມາຫາອາທີ່ຖ້ໍາແກ້ວ ເພື່ອພາກັນເດີນທາງຕໍ່ໄປທາງຫນ້າ. ນາງສຸມຸນທາຍັງຄິດຫ່ວງຫນ້າຫ່ວງຫລັງ ຫລຽວຄືນໄປເບິ່ງເມືອງອະໂນລາດດ້ວຍຈິດໃຈບໍ່ເບີກບານ, ແຕ່ກໍຂືນຫລານບໍ່ໄດ້ ຈຶ່ງບອກສິນໄຊໃຫ້ພາຫນີໄປໄວໆ ເພາະຢ້ານກຸມພັນໄປອວນເອົາຍັກທົ່ວທັງຫມົດ ແລ້ວຍົກມາເປັນກອງທັບໃຫຍ່ ເພື່ອຍາດຊີງເອົານາງໄປ, ແຕ່ສິນໄຊບອກອາບໍ່ໃຫ້ຢ້ານກົວແຕ່ຢ່າງໃດ ເພາະທ້າວເຊື່ອຫມັ້ນໃນຕົວເອງທີ່ຈະປົກປ້ອງອາໄວ້ໄດ້ຢ່າງປອດໄພ. ແລ້ວທັງສາມກໍຍ້າຍອອກ

ຈາກຖ້ຳແກ້ວ ເດີນທາງຕໍ່ໄປຈົນຮອດພູແຫ່ງໜຶ່ງ ຊຶ່ງມີຜາສາດວິດວາມຕັ້ງຢູ່ກາງປ່າ. ທັງສາມພາກັນເຂົ້າໄປພັກຢູ່ຜາສາດແຫ່ງນີ້. ພະອິນເປັນຜູ້ເນລະມິດຜາສາດດັ່ງກ່າວໄວ້ໃຫ້ເຊື້ອກະສັດທັງສາມໃນຍາມອັດຕະຄັດຂັດສົນ.

ສິນໄຊລົມກັບສັງທອງວ່າ ບັ້ນຮົບຂັ້ນຕໍ່ໄປນີ້ຈະໜັກໜ່ວງເຫລືອປະມານ, ຈຳເປັນຕ້ອງເອີ້ນສີໂຫໃຫ້ມາຊ່ອຍ, ດັ່ງນັ້ນ ສິນໄຊຈຶ່ງຍິງສອນອອກໄປ, ລູກສອນໄປຕົກຕໍ່ໜ້າສີໂຫຜູ້ຊຶ່ງຢູ່ເຝົ້າ ເປັນໝູ່ທ້າວທັງຫົກ ທີ່ແຄມແມ່ນ້ຳ, ສີໂຫເຂົ້າໃຈວ່າຈະຕ້ອງເກີດເສິກໃຫຍ່ ຈຶ່ງຮີບໄປຫາສິນໄຊທັນທີ ໂດຍປະທ້າວທັງຫົກຄອງຖ້າຢູ່ແຄມນ້ຳແຫ່ງນັ້ນ.

## ກອງທັບຍັກໄລ່ຕິດຕາມ

ຍັກກຸມພັນທີ່ລອດຕາຍ ໜີເຂົ້າປ່າໄປເຕົ້າໂຮມໄພ່ພົນ ຈຳນວນຫລວງຫລາຍ ເພື່ອກຽມໄປດັບມອດຝ່າຍສິນໄຊເປັນການແກ້ແຄ້ນ. ມັນຈັດກອງທັບຊ້າງໄດ້ສີ່ລ້ານໂຕ, ກອງທັບມ້າໄດ້ເຈັດແສນໂຕ, ທະຫານຖືຫອກຈຳນວນແປດກື. ເມື່ອທຸກສິ່ງທຸກຢ່າງ ກຽມພ້ອມກຸມພັນກໍສັ່ງບັນດາຂຸນຍັກ ຍົກກອງທັບຂະໜາດໃຫຍ່ນີ້ ໄລ່ນຳສິນໄຊໄປ ຊຶ່ງປັດຈຸບັນສິນໄຊພາອາສຸມຸນທາອອກຈາກຖ້ຳແກ້ວ ແລ້ວໄປພັກຢູ່ທີ່ຜາສາດແຫ່ງໜຶ່ງ.

ກອງທັບຍັກຈັດກຳລັງເພື່ອຕໍ່ສູ້ກັບສິນໄຊເປັນດັ່ງນີ້ : ຍັກໄວຍຸເວດ ຄຸມກອງທັບໜ້າ, ຍັກໄຄສີຄຸມກອງທັບປີກຊ້າຍ, ຍັກໄກສີຄຸມກອງທັບປີກຂວາ, ຍັກເພັດຊະໄຄ ຄຸມກອງທັບໜູນທາງກາງ, ແລະ

ຍັກໄອຍຸກັນ ຄຸມກຳລັງສອດແນມ ແລະ ສື່ສານ.

ເວລາໃກ້ທ່ຽງ ກອງທັບຫນ້າຊຶ່ງບັນຊາໂດຍຍັກໄອຍຸເວດ ກໍມາຮອດບໍລິເວນອ້ອມແອ້ມຜາສາດຂອງສິນໄຊ, ກອງທັບຍັກຫລັ່ງມາຈົນຄັບທັບ ແລະ ມືດອື້ຕື້, ສຽງດັງປານແຜ່ນດິນຊິປິ້ນ, ນາງສຸມຸນທາຢ້ານຈົນສັ່ນເຊັນ ແລະ ບອກໃຫ້ສິນໄຊອອກໄປຍອມ ໂດຍດີ ເພາະເຫັນກອງທັບຍັກນັ້ນຍິ່ງໃຫຍ່ຫລາຍ. ທ້າວທັງສາມ ຄື ສິນໄຊ ສັງທອງ ແລະ ສີໂຫ ປຶກສາກັນເຖິງຍຸດທະວິທີຕໍ່ສູ້ ແລ້ວກໍບອກໃຫ້ອາເຮັດໃຈເຢັນໆໄວ້ ເພາະສົງຄາມເທື່ອນີ້ບໍ່ມີຫຍັງ ເປັນຫນ້າວິຕົກ. ທັງສາມຕົກລົງກັນ ໃຫ້ສີໂຫ ກັບຄືນໄປຫາອ້າຍທັງຫົກ ທີ່ເຝົ້າຢູ່ແຄມແມ່ນ້ຳ. ສິນໄຊກັບສັງທອງຂັນອາສາສູ້ເສິກພຽງລຳພັງ ເພາະເຫັນວ່າບໍ່ແມ່ນເລື່ອງສຸດວິໄສ. ສີໂຫເອົາຕົວເລັດລອດອອກຈາກຍຸດທະພູມໄປ, ສ່ວນສິນໄຊກັບສັງທອງແຕ່ງຊຸດອອກສະຫນາມຮົບ ແລ້ວກໍປາກົດຕົວທີ່ນອກຜາສາດ. ຍັກເຫັນສິນໄຊເປັນ ເດັກນ້ອຍກໍພາກັນຫົວຂວັນ ແລະ ບອກກັນໃຫ້ຈັບເອົາທ້າວທັງເປັນ ເພື່ອໄປມອບໃຫ້ກຸມພັນ. ເພື່ອເປັນການຂູ່ຂວັນ ພວກຍັກສະແດງ ລິດເດດຕ່າງໆ ນາໆ ເຊັ່ນ ເນລະມິດຕົນເອງໃຫ້ທ່ອນຫົວເປັນຫົວຊ້າງ, ຫົວງົວ, ຫົວເມີຍ; ສ່ວນຕົນໂຕເປັນມ້າເຕັ້ນທະຍານໄປ, ຍັກບາງ ໂຕເປັນເຄິ່ງຄວາຍເຄິ່ງແຮດ, ຫລືເຄິ່ງເສືອເຄິ່ງແບ້, ຫລື ເຄິ່ງແຮດເຄິ່ງມ້າ, ຍັກບາງໂຕເຮັດໂຕໃຫ້ໃຫຍ່ ສູງເທົ່າປາຍຕານ ແລະ ແລບລີ້ນປິ້ນຕາ ເພື່ອໃຫ້ສິນໄຊຢ້ານ ແຕ່ປາກົດວ່າ ທ້າວວາງຕົວເສີຍ ຄືດັ່ງບໍ່ມີຫຍັງເກີດຂຶ້ນຢູ່ອ້ອມຂ້າງ. ເມື່ອເປັນດັ່ງນັ້ນ ຍັກຈຶ່ງຫຸ້ມມາໃສ່ ຫວັງຈະຈັບເອົາທ້າວທັງສອງ, ສິນໄຊປ້ອງກັນຕົວ ທັນໃດໂດຍຖອດດາບອອກມາກວັດແກວ່ງເກີດປະກາຍໄຟມາບແມບ ຄືດັ່ງຟ້າຜ່າ ຍັກຖອຍຫລັງຍ້າວ, ຈຳນວນຫນຶ່ງລົ້ມລົງຕາຍ ເພາະລິດຮ້ອນແຮງຂອງໄຟ. ຍັກໄອຍຸເວດສັ່ງໃຫ້ທະຫານບຸກເຂົ້າມາອີກ ຜູ້ໃດຖອຍແມ່ນຖືກຂ້າຖິ້ມ. ບັດນີ້ສິນໄຊຊັດດາບໄປໃສ່ກາບ ເປົ້າແສງເຫລື້ອມແລ້ວ ແຕກອອກຄືບັ້ງໄຟດອກ

ກາຍເປັນດາບນັບ ແສນນັບລ້ານດວງ ພຸ່ງເຂົ້າໃສ່ຝູງຍັກລົ້ມລະເນລະ ນາດ, ດາບສຽບຕາມຕົນໂຕ, ສຽບຄໍ, ສຽບເອິກຍັກຈົນນອນຕາຍ ຈົມນອກເລືອດ.

ເມື່ອເຫັນກອງທັບຂອງໄວຍຸເວດ ເສຍໄພ່ພົນຫລວງຫລາຍ ຝ່າຍຍັກເຜັດຊະໄຄ ຊຶ່ງຄຸມກອງທັບຫນູນມາທາງຫລັງ ກໍ ສັ່ງທະຫານ ໄສ້ຊ້າງເປັນຂະບວນຫນ້າແຫນ້ນ ແລະ ຍາວຢຽດມຸ່ງສູ່ສະຫນາມຣົບ. ພ້ອມດຽວກັນກອງທັບປີກຊ້າຍ ຊຶ່ງບັນຊາໂດຍຍັກໄຄສີ ແລະ ກອງ ທັບປີກຂວາ ຊຶ່ງບັນຊາໂດຍຍັກໄກສີກໍໂອບເຂົ້າມາ. ພວກຂຸນຍັກ ຄິດວ່າ ສິນໄຊບໍ່ມີທາງສູ້ ແລະ ບໍ່ມີທາງຫນີແລ້ວ, ເຂົາຈະຈັບເອົາ ສິນໄຊໄປເປັນຂອງຂວັນມອບໃຫ້ຍັກກຸມພັນ. ເມື່ອເຫັນທະຫານ ຝ່າຍຍັກຫລວງຫລາຍ ຈົນມືດມົວໄປຫມົດ ສັງທອງຊຶ່ງຢູ່ຮຽງຂ້າງ ສິນໄຊຕະຫລອດເວລາ ກໍແຜງລິດເດດໂດຍເສກມົນເກີດເປັນນ້ຳ ນອງໄຫລຖ້ວມ ແລະ ພັດເອົາພວກຍັກຈົມນ້ຳຕາຍຫລວງຫລາຍ. ຍັກ ເຜັດຊະໄຄ ເສກມົນເປົ່າໃຫ້ນ້ຳແຫ້ງແລ້ວ ທັບຍັກຊຸດໃຫມ່ກໍຫນູນ ຂຶ້ນມາອີກ.

ຍັກໄກສີ ແລະ ຍັກໄຄສີ ສັ່ງໃຫ້ທະຫານຕີໂອບເຂົ້າມາຈາກ ປີກຂວາປີກຊ້າຍ. ບັດນີ້ສິນໄຊຕ້ອງໃຊ້ທະນູ. ທ້າວຍິງສອນສຽງ ດັງສະນັ່ນຟ້າສະເທືອນດິນ, ລູກສອນເປັນໄຟລຸກພຸ່ງເຂົ້າໃສ່ລາມ ໄຫມ້ຝູງຍັກຈົນຕາຍລະເນລະນາດ. ຍັກໄກສີ ເສກມົນເປັນກ້ອນຫີນ ຕົກລົງມາປານຫ່າຝົນ ເພື່ອຫວັງດັບມອດໄຟ, ແຕ່ສິນໄຊຍົກດາບ ຂຶ້ນກວັດແກວ່ງ ເຮັດໃຫ້ກ້ອນຫີນຟົ້ງໄປຕົກທີ່ອື່ນ ແລະ ຕົກໃສ່ຫົວ ຍັກເອງຕາຍນັບບໍ່ໄຫວ. ຍັກໄກສີ ບໍ່ຍອມງ່າຍໆ, ບັດນີ້ ມັນຍິງ ສອນຂຶ້ນເທິງຟ້າ ແລ້ວເກີດເປັນໄຟຕົກລົງມາ ລາມໄຫມ້ໄປຕາມພື້ນ ດິນ. ສິນໄຊ ກໍມີວິທີມອດໄຟ, ທ້າວຍິງສອນຂຶ້ນຟ້າເຊັ່ນດຽວກັນ, ລູກສອນເຮັດໃຫ້ຝົນຕົກລົງມາຫ່າໃຫຍ່ ນ້ຳນອງແຜ່ນດິນຈົນໄຟ

ມອດໝົດ. ໄກສີ ໂມໂໝແຮງ ໄສຊ້າງພຸ່ງເຂົ້າໃສ່ສິນໄຊ ແຕ່ສິນໄຊ ຮ້ອງໃສ່ຊ້າງແຮງໆ ຈົນຊ້າງຢຸດ ແລ້ວຫັນກັບຫລັງ. ໄກສີໂດດລົງ ຈາກຄໍຊ້າງ ແລ້ວຫລູບໃສ່ສິນໄຊ ໂດຍມີດາບເປັນອາວຸດ ທັງສອງ ຟັນກັນໄປມາ, ຄາວໜຶ່ງດາບທັງສອງຝ່າຍຄ້ຳກັນຢູ່ ຝ່າຍສິນໄຊ ເລີຍຈັບເອົາສອນທົ່ງໃສ່ດາບຂອງໄກສີຈົນຫັກທ່ອງ. ສິນໄຊຢູ່ໃນ ທ່າເໜືອກວ່າ ໃຊ້ດາບຟັນໄກສີຈົນຕາຍ.

ຍັກໄວຍຸກັນ ເຫັນໄກສີຕາຍ ກໍຍິ່ງຄຽດແຄ້ນ. ມັນບັນຊາທະ ຫານລູ່ເຂົ້າມາຈົນແຜ່ນດິນໄງ່ກຸ້ມ. ສັງທອງກໍສູ້ສຸດແຮງໂດຍເອົາ ໂຕກິ້ງທັບພວກຍັກຕາຍນັບບໍ່ໄຂວ່. ສິນໄຊບໍ່ຢາກໃຫ້ນ້ອງລຳບາກ ຫລາຍ ກໍຍິງສອນໃສ່ພວກຍັກຕື່ມ ສອນພຸ່ງໄປເປັນແປວໄຟຮ້ອນຮົນ ລວກລົນຍັກຕາຍປານແມງເມົ່າຖືກໄຟ. ຍັກໄວຍຸກັນກໍຕາຍກາງສະ ໜາມຮົບດ້ວຍ.

ເມື່ອເຮັດແນວໃດກໍບໍ່ແພ້ສິນໄຊ ຂຸນຍັກທີ່ຍັງເຫລືອຢູ່ ກໍຄິດ ຄົ້ນຫາອຸບາຍທຸກຢ່າງ. ຍັກໄຄສີ ຜູ້ຄຸມກອງທັບປີກຊ້າຍປອມໂຕ ເປັນທ້າວນ້ອຍ ຊົ່ງຄືສິນໄຊແລ້ວເຂົ້າໄປຫາ ທຳທ່າເປັນມິດທີ່ລື້ງ ເຄີຍສະໜິດສະໜົມກັນ, ພໍໄດ້ໂອກາດ ຍັກໄຄສີກໍຜີປອງຍາດເອົາ ດາບ, ແຕ່ສິນໄຊລະວັງຕົວຢູ່ແລ້ວ ຈຶ່ງປ້ອງກັນຕົວໄວ້ທັນ ແລະ ໃຊ້ ລູກສອນຊັດໃສ່ຄໍຍັກຕາຍກັບບາດ.

ສ່ວນຍັກເຜັດຊະໄຄ ປອມໂຕເປັນພາມແບກໄຫນ້ຳເຂົ້າໄປ ຫາ ແລະ ບອກສິນໄຊດື່ມນ້ຳເຢັນ. ສິນໄຊຫລົງເຊື່ອ ເພາະເຫັນວ່າເປັນ ພາມເຖົ້າແກ່ ເມື່ອເຂົ້າຮອດຕົວທ້າວແລ້ວ ພາມກໍຖອກນ້ຳໃສ່ ຊຶ່ງ ເປັນນ້ຳຮ້ອນທີ່ສຸດ, ສິນໄຊຫລົບຫລີກແລ້ວຖອດດາບຟັນຄໍ ເຜັດຊະໄຄ ຕາຍກັບທີ່. ນ້ຳຮ້ອນຖືກສິນໄຊໜ້ອຍໜຶ່ງ ສັງທອງຈຶ່ງພົ່ນນ້ຳເຢັນໃສ່ ໃຫ້ເຊົາຮ້ອນ.

ຍັກໄວຍຸເວດ ເຫັນວ່າໄພ່ພົນລົ້ມຕາຍເດຍລະດາດ ຈົນນັບບໍ່ຖ້ວນ ຈຶ່ງສັ່ງຖອຍທັບກັບຄືນໄປຫາກຸມພັນ. ມັນໄສຊ້າງອອກຈາກສະຫນາມຮົບ ຊຶ່ງບັດນີ້ກາຍເປັນປ່າຊ້າຂອງໄພ່ພົນຍັກຈຳນວນມະຫາສານ ມຸ່ງຫນ້າກັບຄືນໄປຍັງທິດທາງສູ່ເມືອງອະໂນລາດ ຕິດຕາມດ້ວຍກຳລັງພົນທີ່ລອດຕາຍຈຳນວນບໍ່ເທົ່າໃດ.

ສ່ວນສິນໄຊກັບສັງທອງ ມີຄວາມທະນົງອົງອາດເພີ່ມ ຂຶ້ນຫລັງຈາກທີ່ຜ່ານບັ້ນຮົບມາຢ່າງມີໄຊ.

## ບັ້ນຮົບຕັດສິນ

ຍັກໄວຍຸເວດລອດຕາຍ ແລ້ວກັບຄືນໄປລາຍງານຕໍ່ຍັກກຸມ ພັນກ່ຽວກັບຄວາມປະລາໄຊ ໃນການຍົກທັບໄລ່ຕິດຕາມ ເອົານາງສຸມຸນທາ. ກຸມພັນໃຈຮ້າຍ ອາລົມຮ້ອນອື່ໆ ແລ້ວກໍຮີບຈັດການເກນໄພ່ພົນເຂົ້າເປັນທະຫານໄດ້ອີກຈຳນວນສີ່ກື, ຈັດກອງທັບຊ້າງໄດ້ສາມລ້ານໂຕ. ກຸມພັນບັນຊາກອງທັບເອງ ອອກຈາກເມືອງອະໂນລາດ ໂດຍມີຂຸນຍັກທີ່ເປັນມືຂວາ ຄື ໄວຍຸເວດ ແລະ ມືຊ້າຍ ຄື ວັນລຸວາ. ກອງທັບຍັກຖືດາບ ແລະ **ດ້າງ*** ເປັນຊາບລາບ ບຸກໄປ ຫນ້າຈົນແຜ່ນດິນໄງກຸ້ມມືດໄປທົ່ວທິບ.

---

* ເຄື່ອງປ້ອງກັນຕົວ ເຮັດດ້ວຍຫນັງ ຫລື ໂລຫະ ເປັນຮູບມົນ ຫລື ສີ່ລ່ຽມກົ່ງ, ປົກກະຕິມືຊ້າຍຈັບດ້າງ, ມືຂວາຈັບອາວຸດສູ້ກັບສັດຕູ

ເມື່ອມາຮອດໃກ້ຜາສາດຂອງສິນໄຊ ກອງທັບຍັກກໍທຳ ການປິດລ້ອມຢ່າງແຫນ້ນຫນາ, ຫລຽວໄປທາງໃດ ປາກົດມີແຕ່ທະຫານຍັກເຕັມໄປຫມົດ.

ນາງສຸມຸນທາເຫັນກອງທັບຍັກແຫນ້ນອີ້ຕີ້ ກໍຢ້ານສັ່ນເຊັນ ແລະ ປຸກສິນໄຊໃຫ້ຟ້າວຕື່ນຂຶ້ນມາເບິ່ງ, ແຕ່ສິນໄຊບໍ່ຫວັ່ນແຕ່ຢ່າງໃດ ໃນຂະນະນັ້ນ ສີໂຫຊຶ່ງຄິດເປັນຫ່ວງສິນໄຊຢູ່ບໍ່ເຊົາ ກໍທະຍານມາທາງອາກາດທັນເຫດການພໍດີ. ສັງທອງສັງເກດເບິ່ງສະຫນາມຮົບຢ່າງລະອຽດ ເພື່ອບອກສິນໄຊໃຫ້ ກຳສະພາບການໄດ້ຢ່າງຊັດເຈນ. ຕໍ່ມາທັງສາມທ້າວກໍອອກສູ່ສະຫນາມຮົບດ້ວຍ ເຄື່ອງນຸ່ງເຕັມຍົດ ໂດຍມີອາສຸມຸນທາຢູ່ຮຽງຂ້າງຫລານ ບໍ່ຍອມຫ່າງ.

ກຸມພັນມາບເຫັນຫນ້າສິນໄຊແລ້ວ ກໍປານກັບບັ້ງໄຟແສນ ທີ່ພວມຈະທະຍານໄປທາງຫນ້າ ໂດຍບໍ່ມີສິ່ງໃດສາມາດຢຸດຈັ້ງໄວ້ໄດ້, ມັນຂີ່ຊ້າງ ຊື່ວ່າ ອ້າຍຊຽງດາວ ລູ່ໃສ່ສິນໄຊ ຫວັງຈະຢຽບໃຫ້ມຸ່ນຄາຕີນ. ຊ້າງມາຮອດໄລຍະພໍເຫມາະ ສິນໄຊຢືນຈົ້ງຢ່າງຫມັ້ນຄົງຖອດດາບອອກມາຕັ້ງຮັບຢ່າງບໍ່ສະທົກສະທ້ານ. ຊ້າງຢຸດກັບທີ່ແລ້ວຫົນຫລັງຄືນ ໂດຍບໍ່ຍອມປະຕິບັດຕາມການບັນຊາຂອງກຸມພັນ. ເມື່ອ ເປັນດັ່ງນີ້ ກຸມພັນ ກໍຮ້ອງຂຶ້ນເຜັ້ງໆ ແລະ ສັ່ງທະຫານໃຫ້ ບຸກໄປທາງຫນ້າ ຜູ້ໃດຖອຍແມ່ນຕາຍບໍ່ເຫລືອ.

ສິນໄຊ ກວັດແກວ່ງດາບເຫລື້ອມມາບແມບ ເກີດເປັນດາບຄົມແວວວາວ ນັບເປັນແສນໆດວງ ເລັ່ງລື້ວໃສ່ຫມູ່ຍັກລົ້ມຕາຍເປັນລ່າວ ປານມີລົມມິດແຖພັດນ່ຳ. ແຕ່ບໍ່ທັນດົນ ທະຫານຍັກກໍຖືຄ້ອນຫຸ້ມມາອີກ ສິນໄຊເອົາທະນູຍິງໃສ່ສຽງດັງປານແຜ່ນດິນໄຫວ, ລູກສອນເປັນໄຟພຸ່ງເຂົ້າລ້ອມໄຫມ້ຝູງຍັກຕາຍນັບບໍ່ໄຫວ. ຍັກອີກຝູງຫນຶ່ງຖືຂວານ ແລະ ກ້ອນຫີນທະຍານມາທາງອາກາດ, ສີໂຫຄິດ



ຜະຫຍອງຂຶ້ນໄປເອົາວາແຫງຍັກຕາຍ ຈົນເລືອດຕົກລົງດິນປານທ່າ ຝົນ. ສ່ວນສັງທອງກໍເອົາໂຕກິ້ງທັບທັງເອົາປາກງັບຍັກ ຈົນຫົວແປ ຫົວແປັດຢູ່ທີ່ພື້ນສະໜາມ.

ການຕໍ່ສູ້ດຳເນີນໄປຫລາຍຮູບແບບ, ຄັ້ງໜຶ່ງ ສີໂຫ ໃຫ້ ສິນໄຊ ແລະ ອາສຸມຸນທາຂຶ້ນຂີ່ຫລັງ ແລ້ວທະຍານຂຶ້ນສູ່ເວຫາ. ຍັກກຸມພັນກໍ ບັງຄັບຊ້າງເຫາະຂຶ້ນໄປ ເພື່ອໄລ່ຕິດຕາມແລ້ວກໍເອົາທ້ອງຟ້າເປັນ ສະໜາມຕໍ່ສູ້ກັນ. ກຸມພັນເສກມົນເປົ່າເປັນໄຟລາມໄໝ້ຢູ່ກາງ ອາກາດ, ສິນໄຊ ກວັດແກວ່ງດາບເກີດເປັນລົມແຮງດັບ ມອດໄຟ ກ່ອນທີ່ຈະລາມມາເຖິງຕົວ. ສູ້ກັນຢູ່ເທິງຟ້າບໍ່ໄຫວສິນໄຊ ແລ້ວກຸມ ພັນກໍລົງສູ່ພື້ນດິນ. ມັນສັ່ງທະຫານບຸກເຂົ້າໃສ່ສິນໄຊ ຈາກສອງປີກ ຄື ໄອຍຸເວດປີກຂວາ, ວັນລຸວາ ຄຸມປີກຊ້າຍ, ສ່ວນກຸມພັນເອງຕີເຂົ້າ ທາງໜ້າ, ຟັງສຽງດັງສະນັ່ນຟັ່ນຟື້ນ. ສິນໄຊເຫັນຍັກມາຫລາຍຈົນ ຄັບທິບ ກໍກົ່ງທະນູຍິງສອນເຂົ້າໃສ່, ລູກສອນແຕກອອກເປັນປະກາຍ ໄຟ ແລ້ວກາຍເປັນດາບເພັດພຸ່ງເຂົ້າໃສ່ຝູງຍັກລົ້ມລະເນລະນາດ. ກຸມ ພັນເຫັນໄພພົນລົ້ມຕາຍ, ບາງພວກກໍຖອຍໜີຢ່າງບໍ່ເປັນລະບຽບ ມັນຈຶ່ງສັ່ງໃຫ້ຂຸນຍັກສະກັດລັດໄວ້ ແລ້ວລະດົມກຳລັງຂຶ້ນມາອີກໃໝ່. ກຸມພັນທັງເຫລືອໃຈໃຫ້ລູກນ້ອງ ທັງໂມໂຫໃຫ້ສິນໄຊຈຶ່ງໜ້າແດງ ດ້ວຍເລືອດແຄ້ນ. ມັນຊີ້ໜ້າສິນໄຊ ທັງດ່າວ່າຢ່າງເຕັມສົບເຕັມ ປາກ.

ກຸມພັນ: "ມຶງມີໂທດໜັກ ທີ່ລັກເອົາເມຍກູ ຮູ້ໄວ້ ! ນີ້ລະ ຄືກຸມພັນ ຊາຍຊາດທະຫານ, ກູຈະສູ້ຈົນຫົວຂາດຄາ."

ສິນໄຊ: "ຂ້ອຍມາເອົາອາກັບຄືນເມືອ, ເລື່ອງຫຍັງຊິມີໂທດ. ເຈົ້ານັ້ນລະມີໂທດໜັກ ທີ່ເຮັດຜິດຮີດຜິດຄອງ, ເຈົ້າມາ ຫລອນລັກເອົາຢ່າງດ້ານໆ, ບາດນີ້ ໃຫ້ເຈົ້າຄືນໄປສາ ໄປຊອກເອົາເມຍເຊື້ອແນວດຽວກັນພຸ້ນ !"

ກຸມພັນ: "ເຖິງຈະແມ່ນໂຄດເຊື້ອຂອງມຶງ ແຕ່ນາງເປັນເມຍຂອງກູແລ້ວ. ເລື່ອງຜິດນັບເລື່ອງເກົ່າ ເລື່ອງຫລັງແຕ່ກໍຄວນເວົ້າກັນຕາມທາງທີ່ຊອບທີ່ຄວນ. ອັນນີ້ມາເຮັດຫັກໜ້າຫັກຕາກັນ ກູທົນບໍ່ໄດ້, ມາເລວກັນໃຫ້ເຫັນດຳເຫັນແດງເລີຍ !"

ສິນໄຊ: "ຊິເລວກັນໄປຮອດໃສ, ເຫັນຕວ່າ ໄພ່ພົນຍັກຕາຍເດຍລະດາດຈົນນັບບໍ່ໄຫວ. ເຊົາສາ ຢ່າເສຍເລືອດຕື່ມເທາະ !"

ຍັກກຸມພັນເຫັນວ່າສິນໄຊອອ່ນສຽງລົງ ເລີຍໄດ້ໃຈ ທັງເວົ້າຂຶ້ນວ່າ:

"ຄັນຢ້ານຕາຍ ກໍປ່ອຍເມຍກູຄືນມາ ກູຊິໄວ້ຊີວິດມຶງ. ຖ້າບໍ່ປ່ອຍ ກູຊິນຳຍ່ອງຈົນຮອດເມືອງ, ຕາຍໝົດທັງໂຄດໂລດ !"

ສິນໄຊຕອບວ່າ: "ບໍ່ຕ້ອງເວົ້າຮອດເລື່ອງປ່ອຍອາສຸມຸນທາຄືນໄປ. ເລືອກເອົາວ່າເຈົ້າຊິໜີໄປ ຫລື ຊິຕາຍໃຫ້ໝູ່ແຮ້ງ ໝູ່ກາມ້ຽນຄາບ."

ກຸມພັນຮູ້ສຶກແຄ້ນເຄືອງ ປານມີໄຟລຸກອີ່ໃນຫົວໃຈ. ມັນຮ້ອງໃສ່ນາງສຸມຸນທາວ່າ: "ນ້ອງລືມອ້າຍແລ້ວຫວະ ບັກນັ້ນແມ່ນຜົວ ຫລືພີ່ນ້ອງແນວໃດກັນແທ້, ຄືນມາຫາອ້າຍສາ, ຖ້າບໍ່ດັ່ງນັ້ນ ອ້າຍຈຳເປັນຕ້ອງສູ້ຢ່າງຖະຫວາຍຊີວິດ ເພື່ອເອົານ້ອງຄືນມາ."

ສຸມຸນທາເວົ້າປົນສຽງສະອື້ນວ່າ: "ທ້າວນີ້ແມ່ນຫລານແທ້ໆ ມີລິດເດດເກັ່ງກ້າຜາບຂຸນຍັກລົງມາແລ້ວຫຼາຍ. ໃຫ້ອ້າຍຄືນໄປສາ, ຢ່າມານຳຫາເທາະ, ນ້ອງຢ້ານອ້າຍຕາຍປະໄພ່ພົນລ້າໆ ."

ສຸມຸນທາ ເວົ້າແລ້ວກໍຮ້ອງໄຫ້ຫລັ່ງນ້ຳຕາ, ກຸມພັນເຫັນດັ່ງນັ້ນ ກໍເຊື່ອວ່າເມຍຍັງເປັນໃຈກັບຕົນຢູ່, ມັນຈຶ່ງໄສ່ຊ້າງພຸ່ງເຂົ້າໃສ່ສິນ ໄຊ, ທ້າວນ້ອຍເອົາດາບສະກັດຄົມຂວານຂອງຍັກຈົນກຸມພັນ ຟັ້ງຕົກ ຈາກຊ້າງກິ້ງໄປຫລາຍສິບວາ. ມັນລຸກຂຶ້ນເອົາມືຕົບເອິກຕົນເອງ ຢູ່ຕຸບໆ ແລ້ວບອກໃຫ້ຂຸນຍັກຄືໄອຍຸເວດ ແລະ ວັນລຸວາ ຍົກກຳລັງ ເຂົ້າຕະລຸມບອນ. ສອງຂຸນຍັກປະຕິຍານວ່າຈະສູ້ແບບຖະຫວາຍຊີວິດ ເພື່ອກຽດສັກສີຂອງກຸມພັນ, ພອກມັນໄສ່ຊ້າງປີ້ນຊ້າຍປີ້ນຂວາ ເພື່ອ ກັນບໍ່ໃຫ້ທະຫານຫນີທັບ ແລ້ວສັ່ງໃຫ້ກຳລັງທະຫານລູ່ເຂົ້າມາຈົນມືດ ອື້ຕື້. ສິນໄຊເວົ້າກັບສີໂຫວ່າ ບັ້ນຮົບເທື່ອນີ້ເອົາເປັນເອົາຕາຍເປັນ ບັ້ນຮົບຕັດສິນ, ຕ້ອງໃຫ້ມັນສິ້ນສຸດລົງໄວໆ ເພື່ອບໍ່ ໃຫ້ແກ່ຍາວເວລາ. ແລ້ວສີໂຫກໍທະຍານເຂົ້າຫາຝູງຍັກທີ່ບັນຊາ ໂດຍໄອຍຸເວດ ໄລ່ແທງ ອຸດຕະຫລຸດ. ຝ່າຍສັງທອງກໍລຸຍຈົນມອມ ແມມ ທັງກິ້ງທັບທັງວັບຫົວ ຍັກທີ່ບັນຊາໂດຍວັນລຸວາຈົນທັບແຕກຊະນະໂນ, ວັນລຸວາທ້ອງໂປດ ໄສ້ໂລ່ອອກມາ ແລ້ວກໍຕາຍກາງສະຫນາມ, ກຸມພັນຖືດາບເຫລື້ອມ ມາບໆ ຮ້ອງໃສ່ທະຫານໃຫ້ຕະລຸມ ບອນເຂົ້າໄປ, ສິນໄຊຍິງສອນໃສ່ ຖືກກຸມພັນລົ້ມຟຸບລົງ ມັນສົ່ງສຽງຮ້ອງໂອຍຄາງ, ໄພພົນຍັກຄິດວ່າ ຫົວຫນ້າຕາຍແລ້ວ ກໍພາກັນຫນີ ຕະເຫລີດເປີດເປີງ ປະປ່ອຍກຸມພັນ ໃຫ້ດີ້ນດ່າວຢູ່ຜູ້ດຽວ. ມັນກິ້ງເກືອກໄປມາຈົນລູກສອນຫລຸດອອກ ຮູ້ເມື່ອຄືງເປັນປົກກະຕິແລ້ວ ມັນກໍທະຍານຂຶ້ນສູ່ເວຫາ ເພື່ອເບິ່ງສະ ພາບສະຫນາມຮົບ. ປາກົດວ່າໄພພົນຍັກແຕກຫນີບໍ່ເປັນລະບຽບ. ກຸມ ພັນເຫັນວ່າ ບໍ່ມີທາງຈະ ສູ້ຮົບໃຫ້ແພ້ສິນໄຊ ຈຶ່ງເສກມົນ ແລ້ວປາກົດ ຜາສາດເກີດຂຶ້ນ ພ້ອມກັບມີນາງລະຄອນອ່ອນແອ້ນງົດງາມ ຮ້ອງ ລຳຢູ່ໃນນັ້ນ, ມັນເປັນ ເລ່ກົນຂອງກຸມພັນທີ່ວາງໄວ້ ເພື່ອຈະໃຫ້ສິນໄຊ ເຂົ້າໄປໃນຜາສາດ ແລ້ວມັນກໍຈະຈັດການເຜົາ. ຄາວຫນຶ່ງ ສິນໄຊ ເລາະລຽບເບິ່ງສະຫນາມຮົບ ມາເຫັນຜາສາດທັງມີນາງລະຄອນ ເຊີນຊວນທ້າວເຂົ້າໄປ ສິນໄຊມີສະຕິລະວັງຕົວ ແລະ ພິຈາລະນາເບິ່ງ

ຄັກໆ ແລ້ວກໍຮູ້ ວ່າເປັນສິ່ງປອມແປງທີ່ຍັກເຮັດຂື້ນມາ, ທ້າວລອງ ຍິງສອນເຂົ້າໃສ່ຜາສາດກໍເລີຍພັງທະລາຍມຸ່ນອັບຍັບ.

ຍັກກຸມພັນເຫັນວ່າ ກົນອຸບາຍບໍ່ໄດ້ຜົນ ກໍເລີຍໂສສຸດ, ມັນ ຈັບດາບລູເຂົ້າໃສ່ສິນໄຊອີກ ແຕ່ສິນໄຊຕັ້ງທ່າກຽມພ້ອມຢູ່ແລ້ວ, ທ້າວຈັບສອນຊັດໃສ່ມືກຸມພັນຈົນດາບຫລຸດລົງດິນ, ກຸມພັນຕົກຢູ່ໃນ ທ່າຈົນຕາແຈ ຄືແປເຮືອນຫລຸຍາມຟົ້ນຕົກແຮງ, ມັນພະຍາຍາມປີ້ນ ສູ້ແບບຖະຫວາຍຊີວິດ ຈົນໃນທີ່ສຸດກໍຖືກດາບສິນໄຊ ຕາຍຄາສະ ຫນາມຮົບ. ຮ່າງກຸມພັນແປດເປື້ອນໄປດ້ວຍເລືອດແດງນອນຢູ່ກັບ ພື້ນດິນ ທ່າມກາງທະຫານຍັກຈຳນວນນັບບໍ່ໄຫວ ທີ່ເອົາສະຖານທີ່ ແຫ່ງນີ້ເປັນປ່າຊ້າຂອງຕົນ.

ນາງສຸມຸນທາຮ້ອງໄຫ້ສະອື້ນນຳຜົວ ນ້ຳຕາໄຫລອາບແກ້ມ ບໍ່ມີຍາມແຫ້ງ, ນາງເອົາມືລູບຮ່າງສົງກຸມພັນດ້ວຍຄວາມເປັນ ຫ່ວງອາໄລຫາ, ສິນໄຊທີ່ຢືນຢູ່ໃກ້ໆ ຊວນອາກັບຄືນເຂົ້າໄປຜາສາດ ເພື່ອພັກຜ່ອນ. ນາງລຸກຂື້ນຊ້າໆ ແລ້ວເວົ້າກັບຫລານວ່າ:

" ອາຍັງມີເລື່ອງອຸກອັ່ງເຫງົາໃຈຢູ່ອີກ ຄືວ່າອາເປັນຫ່ວງ ນຳລູກສາວ ຊື່ ສີດາຈັນ, ດຽວນີ້ ນາງໄປຢູ່ນຳຜົວທີ່ເມືອງນາກ ແຕ່ກີ້ມາຫລັງກໍໄດ້ຕິດຕໍ່ພົວພັນກັນເປັນປະຈຳ, ແຕ່ບັດນີ້ ພໍ່ກໍມາ ຕາຍ ອາເອງຊ້ຳຊິກັບຄືນໄປເມືອງເປັງຈານ, ສີດາຈັນກໍຕ້ອງຖືກ ຕັດຂາດຈາກພີ່ຈາກນ້ອງ, ເຮັດແນວໃດຈຶ່ງຊິຕິດຕໍ່ຖາມຂ່າວຄາວ ກັນໄດ້, ອາຊິບໍ່ມີໂອກາດພົບພໍ້ກັບລູກອີກແລ້ວຕໍ່ໄປນີ້..."

ສິນໄຊເວົ້າວ່າ: " ຂໍອາຢ່າໄດ້ເປັນທຸກກັງວົນເລີຍ, ຫລານ ອາສາເຮັດທຸກຢ່າງທີ່ອາຕ້ອງການ, ຂໍເວລາສາມມື້ເທົ່ານັ້ນ ຫລານ ຊິໄປນຳເອົານາງຄືນມາໃຫ້ໄດ້."

ສິນໄຊອ້າຍໜ້າໄປເວົ້າກັບສີໂຫວ່າ : ບັດນີ້ ພວກເຮົາຜາບຍັກລົງໄດ້ຢ່າງຮາບຄາບແລ້ວ ໃຫ້ອ້າຍກັບຄືນໄປຫາພວກ ອ້າຍທັງຫົກກ່ອນ, ນ້ອງເອງຊິໄດ້ລົງໄປຍັງພື້ນມະຫາສະໝຸດ ເພື່ອນຳເອົາພີ່ນ້ອງຂອງພວກເຮົາ ຊື່ ນາງສີດາຈັນ .

ສີໂຫສັ່ງລາແລ້ວກໍທະຍານຂຶ້ນສູ່ເວຫາ. ສິນໄຊ ສັງທອງ ແລະ ອາສຸມຸນທາ ພາກັນປິ່ນຫລັງໃຫ້ສະໜາມຣົບທີ່ເຕັມໄປດ້ວຍຊາກຍັກ ແລ້ວຄືນສູ່ຜາສາດ.

ຄືນນັ້ນ ສຸມຸນທາ ສະອື້ນໄຫ້ຮ່ຳໄຮຫາຜົວຕະຫລອດຄືນ.

24 / VII
ຫ້າມຈຳໜ່າຍ

# ໄປເມືອງນາກ

ສິນໄຊ ຄອບລາອາສຸມຸນທາ ແລ້ວກໍເດີນທາງໄປຍັງເມືອງນາກ ຊຶ່ງຢູ່ໃຕ້ມະຫາສະໝຸດ. ສັງທອງລົງໄປໃນນ້ຳກ່ອນ, ປາກົດວ່ານ້ຳຍະອອກເປັນຫົນທາງອັນຍາວຢຽດ ແລ້ວທ້າວທັງສອງ ກໍພາກັນໄຕ່ໄປຕາມທາງຢ່າງສະດວກສະບາຍ. ເມື່ອໄປຮອດເມືອງນາກ ສິນໄຊເຂົ້າໄປພົບກັບເສນາຜູ້ໃຫຍ່ຂອງພະຍານາກ ແລະ ແຈ້ງຈຸດປະສົງວ່າ ຢາກມາຫລິ້ນ**ໝາກສະກາ** ສູ້ກັບພະຍານາກລອງເບິ່ງ ເພາະມີຂ່າວເລົ່າລືກັນວ່າ ພະຍາເມືອງນີ້ຫລິ້ນໝາກສະກາເກັ່ງເປັນຍອດ. ເສນານຳເອົາຄວາມໄປແຈ້ງຕໍ່ພະຍາວະລຸນນະລາດ ຜູ້ເປັນເຈົ້າຄອງເມືອງແຫ່ງໃຕ້ມະຫາສະໝຸດ, ພະຍາອົງນີ້ ສົນໃຈເປັນພິເສດທີ່ໄດ້ຍິນວ່າ ເດັກນ້ອຍຈາກແດນໄກ ມີຄວາມອາດຫານທີ່ຈະມາຫລິ້ນໝາກສະການຳພະອົງ, ແລ້ວພະຍາກໍສັ່ງໃຫ້ເສນາພາເອົາທ້າວນ້ອຍເຂົ້າເຝົ້າທີ່ຜາສາດ. ຕາມທາງມຸ່ງສູ່ທ້ອງພະໂຮງ ຊາວນາກທັງຍິງທັງຊາຍແປງເພດເປັນມະນຸດ ແລ້ວພາກັນມາຫຸ້ມເບິ່ງສິນໄຊ ກັບສັງທອງດ້ວຍຄວາມຊື່ນຊົມດີໃຈ ເພາະສິນໄຊ ແຕ່ງຊຸດເຕັມຍົດ ໜ້າຕາສົດໃສວາດຍ່າງເປັນສະຫງ່າ. ທ້າວໄປ ປາກົດຕົວຕໍ່ໜ້າພະຍານາກ ໂດຍເອົາມືຖືຫອຍສັງວາງລົງຕໍ່ໜ້າ ເພາະຕອນນີ້ ສັງທອງແປງເພດເປັນຫອຍສັງທຳມະຊາດ. ສິນໄຊ ເລົ່າວ່າ ທີ່ຕົນໄດ້ມາຮອດມາເຖິງແຫ່ງນີ້

---

**ສະກາ :** ການລະຫລິ້ນຢ່າງໜຶ່ງ ເທິງແຜ່ນກະດານທີ່ມີ 24 ຕາຄ້າຍກັບການຫລິ້ນໝາກດາມ ຫລືໝາກເສິກ



ກໍຍ້ອນວ່າ ພະຍາພໍ່ສັ່ງໃຫ້ ໄປສືບຫານ້ອງສາວ ຊື່ວ່າ ສຸມຸນທາ ຊຶ່ງຍັກກຸມພັນ ໄດ້ໄປຫລອນລັກເອົາແຕ່ເຫິງນານແລ້ວ, ຫລັງຈາກທີ່ໄດ້ພົບພໍ້ກັບອາສຸມຸນທາ ແລ້ວຝ່າຍອາຊໍ້າບອກວ່າມີລູກສາວ ຊື່ວ່າ ສີດາຈັນ ຊຶ່ງເປັນມະເຫສີຂອງ ພະຍາຢູ່ເມືອງໃຕ້ມະຫາສະໝຸດພີ້ ຈຶ່ງໄດ້ນໍາມາຢ້ຽມຢາມຖາມ ຂ່າວ ແລະ ຫວັງຂອດໄມຕີກັບເມືອງນີ້ໄວ້ ເພື່ອວ່າໃນອະນາຄົດຈະ ໄດ້ຕິດຕໍ່ທ່ອງທ່ຽວຫາກັນ.

ພະຍານາກກ່າວຕ້ອນຮັບສິນໄຊ ດ້ວຍຄວາມປິຕິຍິນດີ ແລ້ວຖາມວ່າ : "ເສນາບອກເຮົາວ່າ ໂຕຢາກຫລິ້ນໝາກສະກາກັບເຮົາແມ່ນບໍ? ໂຕຄືຊິເກັ່ງຫລາຍເນາະ !"

ສິນໄຊ: "ຂ້ານ້ອຍໄດ້ຍິນຊື່ສຽງວ່າ ພະຍາຫລິ້ນເກັ່ງຫລາຍຈຶ່ງຢາກມາລອງເບິ່ງ, ຕາງມາຮຽນຮູ້ເອົາປະສົບການ ກໍພຽງເທົ່ານັ້ນ."

ພະຍານາກ : "ແລ້ວ ໂຕຊິເອົາຫຍັງມາຕັ້ງເປັນຄ່າພະນັນລະ?"

ສິນໄຊ : "ຂ້ານ້ອຍມີຫອຍສັງ, ສອນ ແລະ ດາບ ເປັນຄ່າພະນັນ."

ພະຍາກນາກ : "ສິ່ງຂອງເຫລົ່ານີ້ ມີລິດເດດແນວໃດ ?"

ສິນໄຊ : "ແລ້ວແຕ່ພະຍາຈະຄຶດເອົາ, ຄືພະຍາຄຶດສິ່ງໃດກໍຈະໄດ້ສິ່ງນັ້ນ, ຝ່າຍພະຍາເດ ຈະເອົາສິ່ງໃດເປັນຄ່າພະນັນ?"

ພະຍານາກ : "ເຮົາເອົາເມືອງເປັນຄ່າພະນັນ."

ພະຍານາກ ເວົ້າດັ່ງນີ້ ເພາະເຊື່ອໝັ້ນຕົນເອງວ່າ ຈະເປັນຝ່າຍແພ້ ແລະ ຫວັງຢ່າງຍິ່ງວ່າ ຈະໄດ້ຄອບຄອງສິ່ງຂອງສາມ ຢ່າງນັ້ນ.

ການຫລິ້ນໝາກສະກາເລີ່ມຕົ້ນຂຶ້ນ ໂດຍເສນາເອົາແປ້ນໝາກສະກາມາຕັ້ງກາງເຄິ່ງລະຫວ່າງ ພະຍານາກກັບສິນໄຊ. ການ

ຍ້າຍລູກສະກາດຳເນີນໄປຢ່າງເຄັ່ງຂຶມ, ເວລາຜ່ານໄປສິນໄຊຍ້າຍລູກສະກາໄດ້ຢ່າງຖືກຈຸດ ແລະ ຢູ່ໃນທ່າເໜືອກວ່າ, ພະຍານາກຕົກຢູ່ໃນທ່າເສຍແຕ້ມ ແລະ ມີສີໜ້າກະວົນກະວາຍ, ແລ້ວໃນທີ່ສຸດສິນໄຊກໍເປັນຝ່າຍແພ້ໃນກະດານທີໜຶ່ງ. ການຫລິ້ນຕັ້ງຕົ້ນໃໝ່ ອັນເປັນກະດານທີສອງ ແລະ ຕໍ່ມາ ກໍແມ່ນກະດານທີ ສາມ, ປາກົດວ່າ ສິນໄຊເປັນຝ່າຍແພ້ທັງໝົດ.

ພະຍານາກ ຜູ້ເສຍພະນັນມີໜ້າຕາບໍ່ເບີກບານ ຈົ່ມພຸມພໍາວ່າ: "ກຳເວນມາຮອດແລ້ວ, ກູເສຍບ້ານເສຍເມືອງແລ້ວບາດນີ້!"

ພະອົງຫັນໄປເວົ້າກັບໝູ່ເສນາວ່າ : "ເຮົາເຫັນວ່າ ແມ່ນເດັກນ້ອຍ ຈຶ່ງໄດ້ເອົາເມືອງເປັນຄ່າພະນັນ, ເທື່ອນີ້ ໂຊກບໍ່ເປັນຂອງເຮົາແລ້ວ. ເຮົາຕົກຕ່ຳເສຍບ້ານເມືອງແລ້ວ ເສນາເອີຍ."

ພວກເສນາມຸນຕີ ແລະ ບໍລິວານທັງຫລາຍເວົ້າວ່າ: "ອັນເດັກນ້ອຍລ້າໆ ບໍ່ໃຫ້ຫຍັງມັນເລີຍ ກໍຊິມີຫຍັງເກີດຂຶ້ນ! ມັນມາຕົກຢູ່ທ່າມກາງພວກເຮົາຊາວນາກ ມັນເຮັດຫຍັງພວກເຮົາບໍ່ໄດ້ດອກ"

ສິນໄຊໄດ້ຍິນດັ່ງນັ້ນ ກໍເວົ້າວ່າ: "ຖ້າພະຍາບໍ່ມອບເມືອງໃຫ້ ຂ້ານ້ອຍ ກໍຂໍເອົາແຕ່ນາງສີດາຈັນຄືນເມືອເທົ່ານັ້ນ."

ປາກົດວ່າ ຄຳເວົ້າອັນນີ້ ເຮັດໃຫ້ພະຍານາກໂມໂຫແຮງ ເພາະເປັນການປຽບຍ່ຳສັກສີ, ເປັນຄຳເວົ້າທີ່ສະຫາວ ບໍ່ຢຳເກງກັນເລີຍ.

" ເນຍບອນຮຽງຂ້າງກູແທ້ໆ ມຶງຊິມາຍາດເອົາໄປເປັນຊູ້ຊັ້ນຫວະ ! ນີ້ສູ ເອົາມັນໄປຂັງຄອກໄວ້ !" ພະຍານາກສັ່ງບອກເສນາ.

ແລ້ວເສນານາກ ກໍແລ່ນຫຸ້ມມາ ຫວັງຈະຈັບກຸມຮັດກັຽວສິນໄຊ

ໃຫ້ຕາຍກັບທີ່, ສິນໄຊຈຳຕ້ອງປ້ອງກັນຕົວ ຈຶ່ງຍິງສອນໄປໃສ່ເຮັດ ໃຫ້ພວກນາກຕາຍຢຽດຄຶ່ງນຶ່ງ, ພາຍໃນຫໍຄຳຂອງພະຍານາກເກີດ ສັບສົນວຸ່ນວາຍ, ພວກນາກທີ່ເຫລືອຕາຍ ແລ່ນສວ່ານສົນບໍ່ເປັນລະ ບຽບ, ສິນໄຊອອກຈາກຫໍຄຳໄປທີ່ສະໜາມໄຊເຝົ້າ ສັງເກດເບິ່ງສະ ພາບວຸ່ນວາຍ ແລະ ລະວັງຕົວ ເພື່ອບໍ່ໃຫ້ໄດ້ຮັບອັນຕະລາຍ.

ພະຍານາກຮຽກລະດົມພົນ ໂດຍເລືອກເອົາຂຸນນາກໂຕເກັ່ງກ້າ ແລ້ວແຈກວ້າງໃຫ້, ຕໍ່ໄປພວກຂຸນນາກ ກໍຈັດກຽມກຳລັງ ເປັນວຸ່ນໆ ໂດຍເອີ້ນເອົາພວກງູພິດ, ພວກເງືອກທີ່ພົ່ນໄຟແດງອອກຈາກປາກ ມາໂຮມກັນຕັ້ງຫລວງຫລາຍ, ຫລຽວໄປທາງໃດ ເຫັນແຕ່ເກັດເຫລື້ອມ ເປັນແສງຍິບຍັບ. ສ່ວນພະຍານາກ ກໍສະ ແດງລິດເດດເສກນົນ ເກີດ ມີຫລາຍຫົວຫອນແດງຮອນໆ ຍໍຄໍຂຶ້ນພົ້ນ ນາກໂຕອື່ນໆ, ຕໍ່ມາ ກອງ ທັບນາກ ກໍອອກສູ່ສະໜາມຮົບ.

ສິນໄຊກັບສັງທອງ ກຽມຕົວສູ້ແບບຖະຫວາຍຊີວິດ ເພາະຝ່າຍ ຕົນບໍ່ມີຄວາມຜິດຫຍັງ, ຫາກແຕ່ຖືກພະຍານາກ ສໍ້ໂກງແບບ ດ້ານໆ, ເມື່ອກອງທັບນາກມາຮອດໃກ້ ສັງທອງກໍເອົ້າຕະລຸມ ບອນໂດຍກິ້ງທັບ ທັງວັບນາກຈົນຕົວແປຕາຍເດຍລະດາດ, ແຮງຕາຍ ນາກກໍແຮງ ຫລັ່ງໄຫລ ມາຢ່າງບໍ່ຂາດສາຍ ທັງເອົາຫາງຟາດ ທັງພົ່ນອາຍພິດ ຮ້ອນປານ ໄຟ, ແຕ່ສິນໄຊບໍ່ຫວັ່ນໄຫວ ບໍ່ທໍ້ຖອຍແຕ່ຢ່າງໃດ, ທ້າວຍິງ ສອນໄປໃສ່ເກີດແສງແມບເຫລື້ອມຮ້ອນແຮງ ແລະ ລວກໄໝ້ພວກ ນາກຕາຍນັບບໍ່ໄຫວ. ພະຍານາກ ສັ່ງໃຫ້ໝູ່ ນາກລຸຍເອົ້າໄປຕຶກໆ, ກອງທັບນາກບຽດກັນມາຈົນລັບທິບ ຫອນແດງຂ້ອງຊຸບລົບ, ແຕ່ ແລ້ວຫອນແດງໆ ທີ່ເຕັມທົ່ວສະໜາມນັ້ນ ກໍຍຸບຍອບລົງ ເມື່ອລູກສອນ ພຸ່ງເອົ້າໃສ່, ລູກສອນລອຍດຸ່ງຈາກ ບ່ອນໜຶ່ງແລ້ວໄປສູ່ອີກບ່ອນໜຶ່ງ ຕາມໃຈບັນຊາຂອງຜູ້ຍິງສອນ. ພວກນາກນອນຕາຍທັບກັນຈົນບໍ່ມີ ບ່ອນຫວ່າງ, ພວກທີ່ເຫລືອຕາຍ ກໍແລ່ນອີເລີເປີເສີໄປຫາພະຍານາກ

ຜູ້ຊຶ່ງພວມຢູ່ໃນອາການຮ້ອນ ຮົນກະວົນກະວາຍ ເພາະເຫັນທ່າວ່າຈະສູ້ບໍ່ໄຫວແລ້ວ. ຂຸນນາກ ບອກພະຍານາກວ່າ ໝົດກຳລັງທີ່ຈະ ຕໍ່ສູ້ຕໍ່ໄປແລ້ວ ມີທາງດຽວ ທີ່ຈະລອດຊີວິດຄື ຫລົບໜີໄປລີ້ຢູ່ຕາມຮ່ອມຫ້ວຍ ຫລື ຫລືບຫີນ ໃນປ່າດົງວົງກົດ. ພະຍານາກ ນ້ຳຕາພັງຍ່າວ ເພາະພວກຂຸນນາກ, ພວກມະຫາດເລັກ ຕະຫລອດພວກນາງສະໜົມ ພາກັນແຕກຊະກະຈັດກະຈາຍ. ໃນທີ່ສຸດ ພະຍາວະລຸນນະລາດ ຜູ້ປົກຄອງເມືອງນາກກໍຍອມຈຳນົນ ໂດຍຂໍມອບຕົວຕໍ່ສິນໄຊ ດ້ວຍຄວາມນອບນ້ອມຢຳເກງ.

ພະຍານາກກ່າວວ່າ : "ໂດຍໃຫ້ເປັນໄປຕາມຈຸດປະສົງຂອງທ່ານ ຕໍ່ໄປນີ້ ໃຫ້ນາງສິດາຈັນ ຢູ່ໃນຄວາມເບິ່ງແຍງຂອງທ່ານ. ເຫລົ່າເສນາມຸນຕີທີ່ຍັງເຫລືອພ້ອມທັງໄພ່ພົນທັງໝົດນີ້ ຂໍມອບໃຫ້ເປັນຂ້າໃຊ້ຂອງທ່ານ, ສົມບັດອັນໃດທີ່ມີຢູ່ໃນເມືອງນາກທັງໝົດ ຂ້ານ້ອຍຂໍມອບແກ່ທ່ານທຸກປະການ."

ສິນໄຊເວົ້າວ່າ : "ເຮົາບໍ່ໄດ້ຫວັງຈະມາຂົ່ມເຫງ ຫລື ປອງຮ້າຍຕໍ່ຜູ້ໃດ, ເຮົາມາຂໍຫລັ້ນໝາກສະກາ ເພື່ອລອງເສັງກັບທ່ານ ແຕ່ທ່ານບໍ່ແພ້ ກໍເລີຍໃຈຮ້າຍ, ແນວໃດກໍຕາມ ການທີ່ມາເຫັນກັນເທື່ອດຽວແລ້ວຮັກກັນໂລດນັ້ນ ບໍ່ໝັ້ນຄົງເທົ່າໃດດອກ, ຊັງກັນກ່ອນແລ້ວພາຍລຸນມາຈຶ່ງຮັກກັນນັ້ນ ໝັ້ນຄົງດີ. ຕໍ່ໄປນີ້ ສອງຝ່າຍພວກເຮົາຈະຕິດຕໍ່ພົວພັນກັນ ໃຫ້ແໜ້ນແກ່ນຍິ່ງຂຶ້ນ, ເຮົາມອບໃຫ້ທ່ານເປັນພະຍາຄອງເມືອງສືບຕໍ່ໄປ..."

ສິນໄຊ ໄດ້ຖາມເຖິງຮີດຄອງແຕ່ດັ້ງເດີມ ມີແນວໃດແດ່, ຝ່າຍພະຍານາກບອກວ່າ ຕົນເປັນຜູ້ໂງ່ຈ້າ ເພາະໄດ້ປະລະຮີດເກົ່າ ຄອງເດີມເສຍແລ້ວ, ນັບແຕ່ເປັນພະຍາແທນພໍ່ເປັນຕົ້ນມາ ບໍ່ຮູ້ອັນໃດມັນສູງສົ່ງ ມັນຄ້ຳຄູນ. ດັ່ງນີ້ ສິນໄຊ ຈຶ່ງສັ່ງສອນພະຍານາກ ກ່ຽວກັບວາດວິທີດຳລົງຊີວິດອັນດີງາມ.

ສິນໄຊເວົ້າວ່າ : ... ເຮົາຈັກແຕ່ງຕັ້ງທ່ານໃຫ້ເປັນພະຍາຄອງເມືອງສືບຕໍ່ໄປ. ປະຊາລາສະດອນທັງຫມົດ ປຽບຄືຮາກຕົ້ນ ໄມ້, ພວກເສນາມຸນຕີ ປຽບຄືລຳຕົ້ນໄມ້, ພວກພະນັກງານທົ່ວໄປປຽບຄືກິ່ງງ່າຕົ້ນໄມ້, ສ່ວນພະຍາຫລື ກະສັດ ປຽບຄືຍອດຕົ້ນໄມ້, ຕົ້ນໄມ້ນັ້ນ ຖ້າຮາກບໍ່ຫມັ້ນແກ່ນແລ້ວ ຕ້ອງຕາຍແນ່ນອນ, ການປົກຄອງບ້ານເມືອງ ກໍປຽບຄືຕົ້ນໄມ້ນັ້ນເອງ.

ປະການຫນຶ່ງ ເມື່ອອອກນັ່ງກາງທີ່ປະຊຸມເສນາມຸນຕີ ຕ້ອງເຮັດວາດຊົງໃຫ້ຄ່ຽມຄົມ ສະຫງ່າອົງອາດ, ໃຫ້ຮີບສືບສວນຕັດສິນບັນຫາ ທີ່ເສນາມຸນຕີຍົກຂຶ້ນມາ ທັງນີ້ ເພາະມັນກ່ຽວຂ້ອງກັບຜົນປະໂຫຍດຂອງປະຊາລາສະດອນ, ຢ່າໃຫ້ເຂົາເຈົ້າຕ້ອງພົບບັນຫາເຂົ້າຂາດແລງຂາດງາຍ, ປະຊາລາສະດອນ ປຽບຄືລູກຂອງເຮົາ, ຜູ້ໃດເຮັດຜິດຮີດຜິດຄອງ ຢ່າປ່ອຍຕາມໃຈ ຈົ່ນເອົາລະເຫລີງໃຈຕ້ອງເອົາມາບອກສອນ. ຜູ້ໃດມີຄຸນງາມຄວາມດີ ຕ້ອງເອົາລາງ ວັນໃຫ້ ຫລືເລື່ອນຍົດ ເລື່ອນຊັ້ນໃຫ້ສົມຄູ່ກັບຜົນງານນັ້ນ, ໃຫ້ສັງຊອມເບິ່ງຈົນຮູ້ແຈ້ງວ່າຜູ້ໃດເຮັດດີ ຜູ້ໃດເຮັດຊົ່ວ, ຢ່າຕີລາຄາວ່າ ສະເຫມີກັນຫມົດ, ຢ່າເຮັດຕາມໃຈມັກ ຂອງພີ່ນ້ອງ ໂຄດວົງຈົນໂພດໄປ ເພາະຈະເສຍຜົນປະໂຫຍດຂອງສ່ວນລວມ ແລ້ວຊິບໍ່ເປັນບ້ານ ເປັນເມືອງ.

ຮອດລະດູເດືອນຫົກ ໃຫ້ເລາະລຽບເບິ່ງທ້ອງຖິ່ນຕ່າງໆ, ເມື່ອເຫັນພວກແມ່ຮ້າງ ນາງຫມ້າຍ ຄົນທຸກຂະຫມອດ ສະພັດສະພອຍໃຫ້ສົງເຄາະລ້ຽງເກືອ.

ຄົນທີ່ຄວນຫລີກເວັ້ນຄື : ຄົນບ້າເມົານຳແຕ່ການຫລິ້ນ, ຄົນຂີ້ຄ້ານ ນອນບໍ່ຮູ້ຈັກຄ່ຳຈັກເວັນ, ຄົນມັກຕົວະລ່າຍຫລອກຕົ້ມເອົາສິ່ງຂອງຜູ້ອື່ນ, ຄົນທີ່ເປັນນັກເລງອັນທະພານ ບໍ່ມີເຮືອນຊານແນ່ນອນ.

ປະກາບຫນຶ່ງ ໃຫ້ຫລີງຫາ**ອົນຕາຍ** ທີ່ຈະເກີດຂຶ້ນ, ຈົ່ງກຳຈັດເສຍແຕ່ຫົວທີ ຢ່າໃຫ້ລຸກລາມໃຫຍ່ໂຕ. ໃຫ້ຈັດແຈງປ້ອງກັນຮັກສາເມືອງໄວ້ຄົບທັງແປດດ້ານ, ຊັບສິນຂອງປະເທດນັ້ນ ແມ່ນດິນນາອັນກວ້າງຂວາງ, ຮັກສາຊັບສິນໄວ້ໄດ້ ປະເທດກໍຮຸ່ງເຮືອງຫມັ້ນຄົງ, ດັ່ງນີ້ໃຫ້ ຈັດແຈງແຕ່ງຕັ້ງຄົນໃຫ້ສົມຍົດສັກ ໃຫ້ສົມກຽດ, ໃຫ້ຄືດວ່າພວກຂຸນເສນາມຸນຕີ ປຽບຄືຊ້າງສານ, ກະສັດ ຫລື ພະຍາຜູ້ເປັນເຈົ້າແຜ່ນດິນປຽບຄືຄວານຊ້າງ, ເມື່ອພວກຂຸນເສນາມຸນຕີ ໄດ້ຮັບຍົດສັກ ຄາດຄຽນສາຍໄຫມອັນເປັນສາຍສະພາຍຍົດສັກແລ້ວ ເມື່ອເຂົ້າສູ່ສົງຄາມກໍສາມາດຜາບແພ້ສັດຕູ, ໃຫ້ຫມັ່ນສົ່ງຂ່າວຫຽວໄປຢ້ຽມຢາມຜູ້ທີ່ ເປັນທ້າວຂຸນ ຫລືພະຍາທີ່ຄອງເມືອງຕ່າງໆ. ກະສັດອົງໃດຫ້າງຫາອາວຸດແຮໄວ້ ແລະ ມີກຳລັງພົນກຽມສູ້ຮົບໄວ້ທຸກເວລາ ກະສັດອົງນັ້ນກໍມີຜູ້ຢຳເກງ, ສ່ວນຂ້າ ເສີກກໍຫລີກເວັ້ນໄປຫ່າງໄກ.

ຄວນແພງສິນທຳຍິ່ງກວ່າລູກເມຍ, ສັດຈະທຳ ຍິ່ງເປັນສິ່ງລະອຽດອ່ອນ ກໍຄວນແພງຍິ່ງກວ່າເນື້ອຄີງຂອງຕົນ...

ສິນໄຊ ສັ່ງສອນພະຍານາກຫລາຍສິ່ງຫລາຍແນວ ແລ້ວມອບໃຫ້ຄອງເມືອງນາກສືບຕໍ່ໄປ. ຕໍ່ມາ ສິນໄຊກໍພານາງສີດາຈັນ ກັບຄືນໄປຫາແມ່ ໂດຍມີໄພ່ພົນຊາວນາກແຫ່ແຫນໄປສົ່ງຕະຫລອດທາງ.

## ນາງສີດາຈັນ ພົບພໍ່ແມ່

ຄະນະຂອງສິນໄຊ ເດີນທາງຈາກເມືອງນາກ ຄືນມາຮອດບ່ອນທີ່ນາງສຸມຸນທາຄອງຖ້າຢູ່ ອັນເປັນເຂດແດນຍັກ. ນາງສີດາຈັນໄດ້ພົບ ພໍ່ແມ່ ຫລັງຈາກພັດພາກກັນໄປດົນນານ, ທັງສອງກອດຈູບ

---

**ອົນຕາຍ :** ອັນຕະລາຍ, ເຫດຮ້າຍທີ່ພາໃຫ້ເສຍຊັບສິນ ຫລື ເສຍຊີວິດ.



ດົນກັບດ້ວຍຄວາມຮັກອັນດູດດື່ມ ແລະ ເວົ້າລົມກັນເຖິງຄວາມເກົ່າຄວາມຫລັງ ແລ້ວກໍສະອື້ນໄຫ້ນ້ຳຕາໄຫລດ້ວຍຄວາມຕື້ນຕັນໃຈ.

ນາງສຸມຸນທາ ເວົ້າວ່າ: "ແມ່ບໍ່ຄອງວ່າ ຊິໄດ້ເຫັນຫນ້າ ລູກອີກຈົນເທົ້າມື້ຕາຍ, ໄຂແດ່ແຕ່ມີສິນໄຊມາຊ່ວຍ, ບໍ່ຮູ້ວ່າສິນໄຊຂໍເອົາລູກຄືນມາໂດຍດີ ຫລື ວ່າໄປສູ້ຮົບຕົບຕີກັນ ຈົນບ້ານເມືອງຂຸ່ນມົວ"

ນາງສີດາຈັນເລົ່າເຫດການ ຕາມຄວາມເປັນຈິງສູ່ແມ່ຟັງຫມົດທຸກແນວ, ນາງເວົ້າກັບແມ່ວ່າ: "ນັບແຕ່ພັດພາກຈາກແມ່ໄປລູກເປັນທຸກທີ່ສຸດ, ລູກດີໃຈຫາອັນປຽບບໍ່ໄດ້ ທີ່ໄດ້ກັບມາຫາແມ່ ອີກ. ບັດນີ້ ອ້າຍສິນໄຊຊິພາເມືອເມືອງເປັງຈານ ໄປອາໄສເພິ່ງ ບຸນລຸງພຸນແມ່ນບໍ ?"

ນາງສຸມຸນທາ ມີສີຫນ້າປ່ຽນໄປ ເພາະເຫັນຫນ້າລູກສາວ ແລ້ວກໍຄິດຫ່ວງອາໄລຜົວ ເພາະຍັງບໍ່ໄດ້ມ້ຽນສາບສົ່ງສະການເທື່ອ, ນາງເວົ້າກັບລູກຊ້າໆວ່າ: "ບັດນີ້ ພໍ່ຂອງລູກ ໄດ້ຕາຍຈາກ ພວກເຮົາໄປແລ້ວ ແຕ່ຍັງບໍ່ທັນໄດ້ເຮັດພິທີສົ່ງສະການເທື່ອ, ລູກຈົ່ງເວົ້ານຳສິນໄຊໃຫ້ຈັດພິທີ ໃຫ້ຖືກຕ້ອງສາກ່ອນ. ມັນເປັນໂອກາດສຸດທ້າຍ ທີ່ລູກຈະເຮັດແນວໃດແນວຫນຶ່ງ ເພື່ອຕອບບຸນແທນຄຸນ ພໍ່".

ນາງສີດາຈັນ ໄດ້ບອກອ້າຍຕາມທີ່ແມ່ສັ່ງ ທັງເວົ້າລົມນຳສິນໄຊ ກ່ຽວກັບດິນແດນແຫ່ງນີ້ ວ່າເປັນຂອບແດນເມືອງຂອງພໍ່, ແຕ່ດຽວນີ້ ເສນາມຸນຕີ ຂຸນຍັກທັງຫລາຍໄດ້ຕາຍຫມົດແລ້ວ, ນາງ ຂໍຮ້ອງນຳອ້າຍ ໃຫ້ເຮັດທຸກສິ່ງທຸກຢ່າງ ເພື່ອໃຫ້ເມືອງຍັກກັບເມືອງຄົນ ມີສາຍໄນຕີທ່ອງທ່ຽວເຖິງກັນ ເພື່ອວ່າຂອບແດນເມືອງຄົນຈະໄດ້ຂະຫຍາຍກວ້າງອອກໄປໃນພາຍຫນ້າ.

ສິນໄຊຮັບປາກວ່າ ຈະຟື້ນຄືນເຊື້ອສາຍຂອງຍັກກຸມພັນ ເພື່ອໃຫ້ມີຜູ້ສືບຕໍ່ປົກຄອງເມືອງຍັກຕໍ່ໄປ. ແລ້ວສິນໄຊກໍຈັດການເຕົ້າໂຮມພວກຍັກ ທີ່ເຫລືອຕາຍ ແລະ ຖືໂອກາດນີ້ ບອກກັບໄພ່ພົນຍັກວ່າຕົນບໍ່ມີເຈດຕະນາຈະກໍ່ກຳທຳເວນຕໍ່ຜູ້ໃດ ແຕ່ເຫດການບັງຄັບເລີຍ ພາໃຫ້ບ້ານເມືອງມົວຫມອງ. ສ່ວນຍັກໄວຍຸເວດ ຜູ້ເປັນ ຫລານຊາຍຂອງກຸມພັນ ກໍນຳພາໄພ່ພົນຍັກເຫລົ່ານີ້ ເຂົ້າຂາບໄຫວ້ ແລະ ຂໍອະໄພຍະໂທດ ນຳສິນໄຊ ດ້ວຍຄວາມນອບນ້ອມຄາລະວະ. ສິນໄຊລົມກັບພວກຍັກດ້ວຍຄວາມເວົ້າຈົບງາມ ທັງເວົ້າໃຫ້ກຳລັງ ໃຈພວກເຂົາວ່າ ຈົ່ງເຊົາໂສກເສົ້າເສຍໃຈໃນເຫດການທີ່ຜ່ານມາ ແລ້ວມາພາກັນກະກຽມພິທີ ສົ່ງສະການຍັກກຸມພັນ ທີ່ເຄີຍມີບຸນຄຸນ ຕຸ້ມຫອມປົກປ້ອງໄພ່ພົນຍັກທັງຫລາຍໃນເມື່ອກ່ອນ.

ແລ້ວການສົ່ງສະການຍັກກຸມພັນ ກໍດຳເນີນໄປຢ່າງສົມກຽດ. ທີ່ພະເມນໃຫຍ່ທີ່ບັນຈຸສົບກຸມພັນ ໄດ້ຮັບການປະດັບປະດາຢ່າງວິດງາມ ມີທຸງທິວປັກອ້ອມ, ສຽງກອງມະໂຫລະທຶກດັງນີ່ນັນ ຂະນະທີ່ຂະບວນແຫ່ເຄື່ອນອອກໄປສູ່ປ່າເຮ່ວ ໂດຍມີພົນຍັກຖືດາບແຫ່ເປັນສາຍຍາວຢຶດ. ນາງສຸມຸນທາ ແລະ ນາງສີດາຈັນ ຖືທຸງຍາວອອກຫນ້າຫມູ່ດ້ວຍອາການໂສກເສົ້າຫມົ່ນຫມອງ, ເມື່ອຮອດ ປ່າເຮ່ວ ແລະ ຕັ້ງທີ່ພະເມນໄວ້ເປັນທີ່ຮຽບຮ້ອຍແລ້ວ ນາງສຸມຸນທາ ແລະ ລູກສາວກໍປົດຜ້າອອກເອົານ້ຳຫອມຫົດສົງ ສົບກຸມພັນ ທັງແນມເບິ່ງດ້ວຍອາການສະຫງົບ. ນາງສຸມຸນທາເວົ້າສັ່ງວ່າ: "ໃຫ້ເຈົ້າໄປເກີດຢູ່ເທິງຟ້າເທິງສະຫວັນພຸ້ນ, ຢ່າໄດ້ມາວົນວຽນ ເກືອກກົ້ງຢູ່ນຳຫມູ່ຍັກອີກ..." ຕໍ່ມານາງສຸມຸນທາຢາດນ້ຳລົງໃສ່ ແຜ່ນທໍລະນີ ໂດຍກ່າວຄຳອະທິດຖານເຖິງຜົວເປັນຄັ້ງສຸດທ້າຍ, ຫລັງຈາກນັ້ນ ກໍມີການ**ຈູດບັ້ງໄຟມ້າ** ສຽງ

---

**ບັ້ງໄຟມ້າ:** ບັ້ງໄຟນ້ອຍໃຊ້ຈູດເຜົາສົບ ໂດຍໃຫ້ແລ່ນໄປຕາມສາຍ
ຜຽກທີ່ເນັ່ງຈາກບ່ອນຈູດເຂົ້າສູ່ເມນບັນຈຸສົບ.

ດັງຜ່າດ ! ບັ້ງໄຟແລ່ນໄປຕາມສາຍຜຽກທີ່ເນັ່ງໄວ້ ໄປກະທົບທໍ່ພະເນມ ແລ້ວເກີດໄຟລຸກວົບໄຫມ້ເປັນແປວຮ້ອນແຮງ.

ກຸມພັນຕາຍດັບສູນໄປແລ້ວ ເຫລືອໄວ້ແຕ່ກະດູກທີ່ປ່າເຮ່ວແຫ່ງນັ້ນ.

ຫລັງຈາກພິທີສົ່ງສະການຍັກກຸມພັນແລ້ວ ສິນໄຊກໍ່ສືບຫາຜູ້ທີ່ຢູ່ໃນຖານະຈະເປັນພະຍາຄອງເມືອງ ຜູ້ຕໍ່ໄປ, ປາກົດວ່າຍັງມີອ້າຍຄີງຂອງກຸມພັນຜູ້ຫນຶ່ງ ຊື່ວ່າ ພັນນຸລາ ຜູ້ຊຶ່ງນອນຫລັບບໍ່ຕື່ນຈັກເທື່ອແຕ່ດົນມາແລ້ວ ຢູ່ໃນຜາສາດແຫ່ງຫນຶ່ງ. ໄວຍຸເວດບອກວ່າ ບໍ່ມີໃຜສາມາດປຸກໃຫ້ພັນນຸລາ ຕື່ນຂຶ້ນມາໄດ້, ດັ່ງນີ້ສິນໄຊ ຈຶ່ງຍິງສອນໄປປຸກ ຈົນພັນນຸລາລຸກພະເວີພະວາຂຶ້ນມາ ເພາະລູກສອນໄປແຍ່ເຂົ້າຮູຫູ. ທໍາອິດພັນນຸລາໃຈຮ້າຍທີ່ຖືກລົບກວນຍາມຫລັບນອນ ແລະ ເມື່ອຕື່ນຂຶ້ນມາແລ້ວຊາບວ່າ ກຸມພັນໄດ້ເສຍຊີວິດ ຍ້ອນສູ້ຮົບກັບສິນໄຊທີ່ມານໍາເອົາອາຄືນເມືອ ພັນນຸລາກໍ່ແຮ່ງໂມໂຫ ແລະ ກ່າວວ່າຈະແກ້ແຄ້ນແທນນ້ອງຊາຍໃຫ້ໄດ້, ແຕ່ໄພ່ພົນຍັກບອກວ່າສິນໄຊມີລິດເດດເກັ່ງກ້າຫລາຍ, ກອງທັບຍັກຕາຍເປັນລ້ານໆ ໃນສົງຄາມທີ່ຜ່ານມາ, ຂຸນຍັກຜູ້ເຂັ້ມແຂງກໍ່ຕາຍເກືອບຫມົດລວມທັງກຸມພັນ, ດຽວນີ້ສິນໄຊ ຢາກໄດ້ຜູ້ເປັນເຊື້ອສາຍດຽວກັບກຸມພັນ ເພື່ອຄອງເມືອງຍັກຕໍ່ໄປ, ດັ່ງນີ້ ຈຶ່ງມີແຕ່ຍອມຮັບ ແລະ ຍອມອ່ອນນ້ອມ ຕໍ່ທ້າວດີກວ່າຈະໄປສູ້ຮົບກັນອີກ.

ພັນນຸລາຫລຽວໄປອ້ອມຕົວ ເຫັນໄພ່ພົນຍັກເຫລືອພຽງຫນ້ອຍດຽວ. ເມື່ອຕື່ນຈາກນອນຫລັບອັນຍາວນານ ເຂົາກໍ່ມາຮູ້ແຈ້ງສະພາບທີ່ເປັນຈິງຫລາຍຂຶ້ນ, ເຂົາຄຶດທວ່າຢູ່ຂະນະຫນຶ່ງ ແລ້ວກໍ່ຕັດສິນໃຈໄປພົບສິນໄຊ ເພື່ອຂໍອ່ອນຍອມ ແລະ ຂໍປະຕິບັດຕາມຈຸດປະສົງຂອງທ້າວນ້ອຍຜູ້ເກັ່ງກ້າ.

ແລ້ວທຸກສິ່ງທຸກຢ່າງກໍດຳເນີນໄປຢ່າງຮຽບຮ້ອຍ. ສິນໄຊຊື່ນຊົມຍິນດີ ທີ່ພັນນຸລາຖືທຽນເຂົ້າມາຂາບໄຫວ້, ແລ້ວ ທ້າວກໍສັ່ງສອນຜູ້ທີ່ຈະເປັນພະຍາຄອງເມືອງຍັກສືບຕໍ່ຈາກກຸມພັນ ໃຫ້ຮູ້ຈັກຮີດບ້ານຄອງເມືອງ ຮູ້ຈັກສິນທຳອັນຈະນຳໄປສູ່ຄວາມຈະເລີນ ແລະ ພາປະຊາລາສະດອນຢູ່ເຢັນເປັນສຸກຕະຫລອດການະນານ.

ພາຍຫລັງເຮັດພິທີສົ່ງສະການຍັກກຸມພັນ ແລະ ຕັ້ງພັນນຸລາເປັນພະຍາຄອງເມືອງຍັກ ສືບຕໍ່ໄປແລ້ວ ສິນໄຊກໍພາອາສຸມຸນທາ ແລະ ນາງສີດາຈັນເດີນທາງກັບຄືນໄປບ່ອນທີ່ທ້າວທັງຫົກກັບສີໂຫຄອງຖ້າຢູ່.

## ສິນໄຊຖືກປອງຮ້າຍ

ການເດີນທາງຜ່າປ່າດົງ ທີ່ມີດອກໄມ້ບານເຮືອງເຮື່ອ ທ່າມກາງສຽງນົກຮ້ອງດົງກ້ອງໄພ ຜ່ານໄປເຈັດວັນ ຄະນະຂອງສິນໄຊກໍມາຮອດບ່ອນທີ່ທ້າວທັງຫົກຄອງຖ້າຢູ່. ສີໂຫ ແລະ ທ້າວທັງຫົກຕ້ອນຮັບສິນໄຊ ອາສຸມຸນທາ ແລະ ນາງສີດາຈັນ ດ້ວຍຄວາມຕື່ນເຕັ້ນຍິນດີເປັນຢ່າງຍິ່ງ ໂດຍສະເພາະທ້າວທັງຫົກນັ້ນ ເຫັນວ່າການພາເອົານາງທັງສອງກັບຄືນມາໄດ້ ເປັນຄວາມສຳເລັດທີ່ພວກເຂົາເຄີຍຄິດ ວ່າ ບໍ່ອາດເປັນໄປໄດ້ ດັ່ງນັ້ນພວກເຂົາຈຶ່ງດີໃຈເອົາແທ້ເອົາວ່າ, ແຕ່ໃນຂະນະທີ່ໜ້າຕາສະແດງຄວາມປິຕິຍິນດີນັ້ນ ໃນໃຈພວກເຂົາຊ້ຳອິດສາບັງບຽດສິນໄຊຢ່າງຮຸນແຮງ. ສ່ວນສິນໄຊຖືວ່າ ທ້າວທັງຫົກເປັນລູກຮ່ວມພໍ່ດຽວກັນກັບຕົນ ແລະ ການທີ່ຕົນໄດ້ຊ່ອຍເຫລືອພວກອ້າຍ ໃນເລື່ອງສະໜອງຕາມຈຸດປະສົງຂອງພະຍາພໍ່ນັ້ນ ເປັນພຽງການເສຍສະຫລະເລັກໆ ນ້ອຍໆ, ທ້າວຈຶ່ງກ່າວດ້ວຍຄວາມບໍລິ

ສຸດໃຈວ່າ : "ບັດນີ້ຂ້ອຍໄດ້ໄປນຳ ເອົາອາສຸນຸນທາ ພ້ອມດ້ວຍນາງສີດາຈັນ ມາໄດ້ແລ້ວ ໃຫ້ພວກອ້າຍຕຸ້ມຫອມເບິ່ງແຍງເພິ່ນທັງສອງ ແລະ ພາໄປສົ່ງຮອດພະຍາພໍ່, ສ່ວນຂ້ອຍຊິແຍກໄປຕ່າງຫາກ ເພື່ອໄປຫາແມ່ທີ່ຄອງຖ້າຢູ່ກາງປ່າ."

ແຕ່ທ້າວທັງທົກ ຂໍຮ້ອງໃຫ້ສິນໄຊ ເປັນຜູ້ພາທາງໄປສົ່ງໃຫ້ຫອິດຈາກປ່າຊ້າງດົງເສືອກ່ອນ ເພື່ອຮັບປະກັນບໍ່ໃຫ້ເກີດເຫດຮ້າຍໃດໆ. ສິນໄຊຕົກລົງ ແລະ ບອກໃຫ້ສີໂຫຟ້າວແຍກໄປຫາແມ່ ກັບປ້າກ່ອນ, ສ່ວນສັງທອງລ່ວງໜ້າໄປກ່ອນຕາມເຄີຍ. ທ້າວ ທັງທົກຮູ້ວ່າສິນໄຊເປັນຜູ້ເກັ່ງກ້າສາມາດຜາບແພ້ພວກຍັກ ພວກມານຮ້າຍຕ່າງໆ ຈົນສາມາດເອົາອາສຸນຸນທາຄືນມາໄດ້ດັ່ງນີ້, ແນ່ນອນສິນໄຊຈະເປັນຈຸດລວມຂອງທຸກຄົນ, ພະຍາພໍ່ຕ້ອງຮັກ ແລະ ເຊື່ອໝັ້ນໃນສີມືຂອງສິນໄຊ, ເສນາມຸນຕີທັງຫລາຍ ໃນເມືອງ ເປັງຈານຈະຕ້ອງເຄົາລົບຢຳເກງທ້າວຜູ້ດຽວ, ປະຊາລາສະດອນຈະຮັກທໍ່ຖະໜອມແພງແຕ່ສິນໄຊ, ສ່ວນພວກທ້າວທັງທົກເອງ ຈະໝົດຄວາມສຳຄັນ ແລະ ຈະບໍ່ມີຜູ້ໃດເອົາໃຈໃສ່ແທນແທ່ ດັ່ງນີ້ ພວກເຂົາຈຶ່ງວາງແຜນການກຳຈັດສິນໄຊໃຫ້ດັບສູນໄປ.

ການເດີນທາງດຳເນີນຕໍ່ໄປອີກ ຈົນໄປຮອດບ່ອນນ້ຳຕົກຕາດໃຫຍ່ທີ່ມີສຽງດັງໂຫມໆ, ນ້ຳເປັນຟອງຟາດຟົ້ງສົ່ງອາຍນ້ຳເປັນຄືຄວັນໝອກກຸ້ມໄປທົ່ວບໍລິເວນ, ບັນຍາກາດຊຸ່ມຊື່ນເຢັນສະບາຍ, ດັ່ງນີ້ ຄະນະເດີນທາງຈຶ່ງປົງສິ່ງຂອງລົງທີ່ພະລານຫີນ ພາກັນເຊົາເມື່ອຍເອົາແຮງ. ທ້າວທັງທົກຊວນສິນໄຊລົງອາບນ້ຳ ໂດຍພາກັນໄປຍັງໂຂດຫີນ ຊຶ່ງຢູ່ຫ່າງອອກໄປ. ບ່ອນນີ້ ກະແສນ້ຳໄຫລລູ່ລົງແປວດ້ວຍຄວາມໄວທີ່ຮຸນແຮງ ແລະ ລົງສູ່ເບື້ອງລຸ່ມ ຊຶ່ງເຫັນຍອດຕົ້ນໄມ້ຄືດັ່ງວ່າຍອດຫຍ້າຕິດຢູ່ພື້ນດິນ, ມີສຽງອຶງຄະນຶງດັງໄປທົ່ວບໍລິເວນ ຄືດັ່ງວ່າທໍລະນີຈັບປວດແລ້ວໂອຍຄາງ ເພາະຖືກກະແສນ້ຳທັ່ງໃສ່ຢ່າງບໍ່



ອິດຖູນາມານັບແສນນັບລ້ານປີ. ໂຂດຫີນຕ້ອງຂອດກິ່ວເປັນຮ່ອງເປັນຮູ ຍ້ອນນໍ້າໄຫລເຊາະວັນ ແລ້ວວັນເລົ່າ.

ຂະນະທີ່ອາບນໍ້າຕາມສະບາຍຢູ່ນັ້ນ ສິນໄຊກໍຖືກທ້າວທັງທົກຊຸກລົງແປວນໍ້າ ທີ່ໄຫລທັ່ງຊຸເອົາທ້າວຕົກລົງເຫວເລິກຢ່າງປຸບປັບໄວວາ, ມີແຕ່ຟ້າເທົ່ານັ້ນ ທີ່ທັນຮູ້ເຫັນເປັນພະຍານ.

ນາງສຸມຸນທາ ແລະ ນາງສີດາຈັນ ນັ່ງຢູ່ແຄມຝັ່ງ ພວມກິນໝາກໄມ້ ທີ່ຫາເກັບມາໄດ້ຈາກຕົ້ນແຄມປ່າ ທັງໃຈກໍຄຶດເລື່ອນລອຍ. ພວກນາງພວມຄິດເຖິງວັນເວລາທີ່ຕົນເອງ ໄປຮອດເມືອງເປັງຈານທັງແວດລ້ອມໄປດ້ວຍຜູ້ຄົນທີ່ເຄີຍຮັກແພງ ແລະ ຫລັງຈາກພັດພາກກັນໄປດົນນານ ກໍໄດ້ກັບຕ່າວມາພົບພໍ້ກັນອີກ. ແຕ່ຄວາມຄຶດອັນເຕັມໄປດ້ວຍຄວາມຍິນດີ ຄວາມຕື່ນເຕັ້ນນັ້ນ ກໍຢຸດຊະງັກລົງທັນໃດ ເມື່ອທ້າວທັງທົກມາບອກວ່າ ສິນໄຊຕົກເຫວຈົມນໍ້າລັບຫາຍໄປແລ້ວ. ນາງສຸມຸນທາກັບລູກສາວພາກັນຮ້ອງໄຫ້ຮໍ່າໄຮ ຢ່າງໜ້າເວທະນາ.

"ເອົາອາຖິ້ມລົງນໍ້າໃຫ້ຕາຍໄປນຳກັນຊໍ້າສາ, ບໍ່ມີສິນໄຊ ຊີວິດອາກໍກະວັ່ງກະເວ, ໂອຍເວນກຳອີ່ຫຍັງຈິ່ງຈຳໃຫ້ພັດພາກຈາກກັນແບບນີ້..." ສຸມຸນທາຈົ່ມທຸກ.

ທ້າວທັງທົກເວົ້າວ່າ : "ມັນເປັນໄປຕາມໂຊກຊາຕາຂອງລາວເອງ ແນວໃດກໍຕາມ ສິນໄຊຕາຍແລ້ວ ກໍຍັງມີເຊື້ອພີ່ເຊື້ອນ້ອງອີກ, ພວກຫລານເອງກໍ່ຕັ້ງທົກຄົນ, ຊິໄປເສຍດາຍລາວຫຍັງກະດໍ້."

ຄຳເວົ້າຂອງທ້າວທັງທົກ ເປັນທີ່ໜ້າສົງໄສ ພາໃຫ້ນາງສຸມຸນທາຄິດວ່າ ພວກເຂົາຕ້ອງຮ່ວມຫົວກັນກຳຈັດສິນໄຊ ເພື່ອຫວັງຜົນປະໂຫຍດສຳລັບພວກເຂົາເອງໃນພາຍໜ້າ, ນາງບໍ່ຢາກເຊື່ອວ່າ ສິນ

ໄຊ ໄດ້ຕາຍຈາກໂລກນີ້ໄປແລ້ວ. ດັ່ງນີ້ ນາງຈຶ່ງເອົາ ສິ່ງຂອງ ສາມຢ່າງໄປສ່ຽງໄວ້ ຄືເອົາປັກປິ່ນເກົ້າ, ຊອງ ແລະ ຜ້າສະໄບ ແຊ່ວນໃສ່ຄັນ ແລ້ວປັກໄວ້ທີ່ແຄມນ້ຳ, ນາງອະທິດຖານວ່າ ຖ້າສິນໄຊຍັງມີຊີວິດຢູ່ ຂໍໃຫ້ພະອິນ ແລະ ສິ່ງສັກສິດທັງປວງ ຈົ່ງດົນບັນດານ ໃຫ້ມີຜູ້ໄປພົບເຫັນແລ້ວ ນຳສິ່ງຂອງສາມຢ່າງໄປສົ່ງ ຄືນແກ່ນາງ, ຖ້າຫາກສິນໄຊຕາຍແທ້ ກໍຂໍໃຫ້ສິ່ງຂອງດັ່ງກ່າວສູນຫາຍໄປເລີຍ. ນາງຈົ່ມພຸມພຳສະອື້ນຮ່ຳໄຮຫາສິນໄຊບໍ່ມີຍາມເຊົາຈົນທ້າວທັງຫົກບໍ່ພໍໃຈ, ພວກເອົາໃຊ້ວາຈາບໍ່ສຸພາບ ເລັ່ງໃຫ້ນາງກັບລູກສາວອອກ ເດີນທາງຕໍ່ໄປ.

"ມົວໄຫ້ນຳກັນຢູ່ຈັ່ງຊີ້ ໄປບໍ່ຮອດໃສເດີ! ຮ້ອງໄຫ້ຈັ່ງໃດ ມັນກໍບໍ່ຄືນມາຫາດອກ. ໄປຮີບໄປ ! "ພວກທ້າວເວົ້າໃສ່ອາກັບລູກສາວ .

ແລ້ວການເດີນທາງ ດ້ວຍຄວາມທຸກໂສກຂອງນາງສຸມຸນທາ ແລະ ລູກສາວກໍດຳເນີນຕໍ່ໄປດ້ວຍຄວາມອິດອ່ອນໝົດກຳລັງໃຈ ໂດຍມີທ້າວທັງຫົກພາທາງແກມບັງຄັບໄປ, ບາງເທື່ອ ນາງ ສີດາຈັນ ກໍຖືກຄວັກເຂີ່ຍຈາກມືຈັງໄຮຂອງພວກທ້າວ ທີ່ສວຍໂອກາດຍາມບຸປ່າໝັ້ນດົງ.

ນາງ ສີດາຈັນ ເວົ້າຈົ່ມກັບແມ່ວ່າ: "ເປັນຕາຊັງພວກນີ້ນ່າແມ່, ປານໃດຈຶ່ງຊິຮອດບ້ານເມືອງຂອງລຸງ, ລູກຮູ້ສຶກທໍລະ ມານທັງກາຍທັງໃຈ."

ນາງສຸມຸນທາຄ່ອຍໆ ເວົ້າອອຍລູກ ແລະ ເວົ້າໃຫ້ກຳລັງໃຈ ວ່າອີກບໍ່ເຫິງ ບໍ່ດົນກໍຈະຮອດທີ່ໝາຍແລ້ວ.

# ນາງສຸມຸນທາ ກັບຄືນສູ່ເປັງຈານ

ກາໂຕໜຶ່ງບິນມາ ຈັບຍອດຊໍ່ຟ້າຜາສາດຂອງພະຍາກຸສະລາດ ແລ້ວສົ່ງສຽງຮ້ອງດັງລ້າຍໆ ຄືວ່າ " ນາງມາ ! ນາງມາ ! " ພະຍາໄດ້ຍິນແລ້ວ ກໍຄິດຫານາງສຸມຸນທາໂລດ ພ້ອມດຽວກັນກໍຮູ້ສຶກວ່າ ຕາສະເມັ່ນຍິບໆ ຢູ່ເບື້ອງຊ້າຍ ອັນເປັນລາງສັງຫອນວ່າ ຈະມີຂ່າວດີໃນໄວໆນີ້.

ໃນເວລາດຽວກັນນີ້ ທ້າວທັງທົກໄດ້ພານາງສຸມຸນທາ ແລະ ນາງສີດາຈັນ ມາຮອດເມືອງທົ່ງ ອັນເປັນເມືອງດ່ານໜ້າຂອງ ເມືອງເປັງຈານ. ທ້າວທັງທົກ ບອກເຈົ້າເມືອງວ່າ ພວກຕົນໄປສູ້ຮົບຕົບຕີກັບພະຍາຍັກ ແລະ ພະຍານາກຈົນສຳເລັດມີໄຊແລ້ວ ເອົານາງທັງສອງນີ້ຄືນມາ ຕາມຄຳສັ່ງຂອງພະຍາກຸສະລາດ ຜູ້ເປັນພໍ່, ບັດນີ້ໃຫ້ເຈົ້າເມືອງທົ່ງສົ່ງຄົນ ໄປບອກທາງເມືອງເປັງຈານ ເພື່ອໃຫ້ ຈັດຂະບວນມາຮັບເອົາ, ໃນເວລາດຽວກັນ ກໍໃຫ້ແຕ່ງແປງສາລາໃຫຍ່ ເພື່ອເປັນບ່ອນພັກເຊົາຂອງພວກທ້າວເອງ, ແລະ ໃຫ້ຈັດບ່ອນຢູ່ແກ່ນາງສຸມຸນທາກັບລູກສາວໄວ້ຕ່າງຫາກ ໂດຍໃຫ້ຢູ່ບ່ອນລັບບັງທັງນີ້ເພື່ອບໍ່ໃຫ້ຄົນອື່ນໆ ເຂົ້າໄປໃກ້.

" ນາງສຸມຸນທາ ໄປຢູ່ນຳຍັກດົນຫລາຍ ຈິດໃຈກໍປ່ຽນລ້າຍຄືພວກຍັກພວກຜີ ບໍ່ຄືມະນຸດທຳມະດາ, ສ່ວນນາງສີດາຈັນ ຜູ້ສືບເຊື້ອສາຍມາຈາກຍັກ ກໍບໍ່ຕ່າງກັບແມ່ ຄືເວລາຫລຽວເຫັນຄົນອື່ນໆ

ແລ້ວທັງສອງຄືຈັ່ງວ່າ ເຫັນຕ່ອນຊີ້ນຕ່ອນປາ. ດັ່ງນີ້ ໃຫ້ທຸກຄົນລະວັງຢ່າເຂົ້າໄປໃກ້ ຢ້ານໄດ້ຮັບອັນຕະລາຍ !" ທ້າວທັງທົກອະທິບາຍ.

ເຈົ້າເມືອງທົ່ງປະຕິບັດ ຕາມຄຳສັ່ງຢ່າງນອບນ້ອມ ເພາະເກງກົວລິດເດດ ແລະ ຫວັງເພິ່ງບຸນບາລະມີ ທີ່ພວກທ້າວເປັນລູກພະຍາເມືອງເປັງຈານ ດັ່ງນີ້ ຂຸນນໍລະໂຊດ ເສນາຄົນສຳຄັນ ຈຶ່ງໄດ້ຮັບຄຳສັ່ງ ໃຫ້ຂີ່ມ້າເລັ່ງໄປຍັງເມືອງເປັງຈານເພື່ອສົ່ງຂ່າວ. ຂຸນນໍລະໂຊດ ຂີ່ມ້າລ່ວງເຖິງສະໜາມຫລວງ ແລ້ວກໍເຂົ້າໄຫວ້ພະຍາກຸສະລາດ ທີ່ທ້ຳຄຳ ແລະ ແຈ້ງຂ່າວເລື່ອງທີ່ທ້າວທັງທົກໄປຜາບແພ້ສັດຕູໝູ່ມານ ແລ້ວເອົານາງສຸມຸນທາ ພ້ອມດ້ວຍລູກສາວຊື່ສີດາຈັນກັບຄືນມາ, ດຽວນີ້ ພວມພັກເຊົາຢູ່ເມືອງທົ່ງ. ພະຍາກຸສະ ລາດ ຕື່ນເຕັ້ນດີໃຈເປັນຢ່າງຍິ່ງ ທີ່ຂ່າວຕາມທີ່ກາຣ້ອງບອກນັ້ນ ຈະກາຍເປັນຄວາມຈິງ. ພະອົງຟ້າວບອກເສນາອາມາດໃຫ້ຈັດແຈງ ແຕ່ງຂະບວນໄປຕ້ອນຮັບຢ່າງສົມກຽດ. ຂ່າວນີ້ດັງໄປທົ່ວເມືອງເປັງຈານ, ໄພ່ຟ້າປະຊາກອນ ພາກັນເບີກບານມ່ວນຊື່ນ ເພາະຈະໄດ້ເຫັນໜ້ານາງສຸມຸນທາຜູ້ເປັນມິ່ງເມືອງອີກ ຫລັງຈາກພັດ ພາກຈາກໄປດົນນານ. ພວກມະເຫສີ ທີ່ເປັນແມ່ຂອງທ້າວທັງທົກກໍດີໃຈຫາອັນປຽບບໍ່ໄດ້ ທີ່ລູກຊາຍຂອງພວກຕົນ ໄປປະຕິບັດໜ້າທີ່ຕາມຄຳສັ່ງຂອງພະຍາຜູ້ເປັນພໍ່ຈົນສຳເລັດກັບຕາວຄືນມາ. ພວກນາງຈັດເອົາເຄື່ອງນຸ່ງຢ່າງດີທີ່ໃຊ້ສຳລັບລາຊະພິທີໄປໃຫ້ ລູກຊາຍນຸ່ງ ເພື່ອໃຫ້ສົມກຽດ ແລະ ເປັນສະຫງ່າລາສີໃນເວລາເຂົ້າ ສູ່ເມືອງເປັງຈານ.

ການກະກຽມຂະບວນໄປຕ້ອນຮັບ ດຳເນີນໄປຢ່າງຟົດຟື້ນ ຄືດັ່ງປາງບຸນໃຫຍ່. ພະຍາກຸສະລາດສັ່ງໃຫ້ຈັດແຕ່ງກວຽນຄຳຫຽມດ້ວຍມ້າໄປຮັບນາງທັງສອງ, ຈັດຊ້າງ ແລະ ມ້າໃຫ້ພຽງພໍ ໂດຍມອບໃຫ້ຂຸນຫລວງມະຫາເສນາ ນຳພາຂະບວນໄປ. ເມື່ອທຸກສິ່ງທຸກຢ່າງພ້ອມແລ້ວ ຂະບວນກໍອອກເດີນທາງແຕ່ເຊົ້າ, ມີມະເຫສີທັງທົກຮ່ວມເດີນ

ທາງໄປດ້ວຍ, ນອກນັ້ນ ກໍມີບໍລິວານ ທີ່ເຄີຍຮັບໃຊ້ໃກ້ຊິດຂອງນາງ
ສຸມຸນທາ, ຕະຫລອດທັງປະຊາລາສະດອນ ຈຳນວນຫລວງຫລາຍ
ທີ່ຢາກເຫັນໜ້າເຫັນຕາຜູ້ເປັນມິ່ງເມືອງ.

ເມື່ອໄປຮອດເມືອງຫົງ ຂຸນຫລວງມະຫາເສນາ ກໍໄດ້ຟັງເລື່ອງ
ລາວທີ່ບໍ່ເປັນມຸງຄຸນ ຈາກປາກຂອງທ້າວທັງທົກ ຢ່າງບໍ່ຄາດຄິດມາ
ກ່ອນ ໂດຍສະເພາະເລື່ອງທີ່ວ່າ ນາງສຸມຸນທາກັບລູກສາວມີຈິດໃຈ
ເປັນຄືຍັກ ທັງບໍ່ຢາກກັບຄືນສູ່ບ້ານເກົ່າເມືອງເດີມ. ພວກທ້າວເວົ້າວ່າ
ຈຳເປັນໄດ້ບັງຄັບໜີບເຕັງ ແລະ ເຮັດທຸກວິທີທາງ ເພື່ອໃຫ້ພວກ
ນາງທັງສອງມານຳ. ທັງແມ່ ແລະ ລູກຄືນມາດ້ວຍຄວາມຂືນອົກ
ຂືນໃຈ, ດັ່ງນີ້ໜ້າຕາຈຶ່ງບໍ່ເບີກບານ ມີແຕ່ຫງ່ອມ ເຫງົາຢູ່ຕະຫລອດ
ເວລາ.

ແນວໃດກໍຕາມ ເມືອງຫົງກໍຢູ່ໃນບັນຍາກາດ ຂອງປາງບຸນ
ໃຫຍ່ ເພາະມີແຂກສຳຄັນມາພັກແຮມ. ເຈົ້າເມືອງຫົງໄດ້ສົ່ງຂ່າວ
ໄປຍັງເມືອງຕ່າງໆ ທີ່ເປັນເມືອງໜ້າດ່ານຢູ່ໃກ້ຄຽງ. ແຕ່ລະເມືອງ
ກໍໄດ້ສົ່ງໄພ່ພົນມາຊ່ວຍປຸກສາລາ ແລະ ນຳເຂົ້າປາອາຫານມາປະ
ກອບສ່ວນໃນພິທີຕ້ອນຮັບແຂກເມືອງ. ພວກເຈົ້າເມືອງໄດ້ນຳເຄື່ອງ
ບັນນາການ ມາມອບໃຫ້ທ້າວທັງທົກ ເພື່ອສະແດງຄວາມຈົງຮັກພັກດີ.
ບັນຍາກາດເມືອງຫົງຟົດຟື້ນ ເປັນທີ່ຕື່ນຕາຕື່ນໃຈ ຢ່າງບໍ່ເຄີຍເປັນ
ມາກ່ອນ, ສຽງເສບມະໂຫລີ ສຽງຂັບລຳດັງສະນັ່ນໄປທົ່ວເມືອງ.

ຂຸນຫລວງມະຫາເສນາ ພະຍາຍາມປະຕິບັດໜ້າທີ່ຢ່າງຮອບ
ຄອບທີ່ສຸດ ເພື່ອບໍ່ໃຫ້ແຕະຕ້ອງຈິດໃຈຝ່າຍໃດຝ່າຍໜຶ່ງ ໂດຍສະ
ເພາະບໍ່ໃຫ້ເສຍບັນຍາກາດ ທີ່ເມືອງຫົງພວມເບີກບານມ່ວນຊື່ນ ໃນ
ການຕ້ອນຮັບແຂກເມືອງ. ເພິ່ນຮັບຟັງການບອກເລົ່າຂອງທ້າວທັງ
ທົກ ແລະ ພ້ອມດຽວກັນກໍປະຕິບັດຕົນຕໍ່ນາງສຸມຸນທາ ຢ່າງບໍ່ມີອັນບົກ

ພ່ອງຕາມທີ່ໄດ້ຮັບມອບຫມາຍ ຈາກພະຍາກຸສະລາດ. ທຸກສິ່ງທຸກຢ່າງດຳເນີນໄປດ້ວຍຄວາມຮຽບຮ້ອຍ, ແລ້ວການເດີນທາງກັບຄືນສູ່ເມືອງເປັງຈານກໍເລີ່ມຕົ້ນ ເມື່ອຕາເວັນຂຶ້ນພົ້ນພູໃນມື້ຖັດມາ. ທ້າວທັງທົກຂີ່ນຂີ່ຊ້າງ, ນາງສຸມຸນທາ ກັບ ນາງສີດາຈັນ ຂຶ້ນຂີ່ກວຽນ ຄຳ ແລ້ວຂະບວນແຫ່ກໍເຄື່ອນອອກຈາກເມືອງທົ່ງເປັນແຖວຍາວຢືດທ່າມກາງສຽງຊໍ ສຽງຊຸງ ສຽງກອງ ດັງລະງົມ ປະສົມດ້ວຍສຽງຮ້ອງສົ່ງຂອງຊາວເມືອງທົ່ງ ທີ່ມາອັ່ງອໍຢູ່ສອງຂ້າງທາງ.

ຂະນະເດີນທາງ ນາງສຸມຸນທາ ບໍ່ມີຄວາມສະຫງົບໃນຈິດໃຈ, ຄິດຢ່າງຫນຶ່ງ ນາງກໍດີໃຈທີ່ຈະໄດ້ພົບພໍ່ພະຍາກຸສະລາດ ຜູ້ເປັນອ້າຍທີ່ຍາມໃດກໍ່ເປັນຫ່ວງນຳຕົນ, ຄິດຢ່າງຫນຶ່ງກໍຮູ້ສຶກຫນັກອົກຫນັກໃຈເພາະມີບັນຫາບໍ່ລົງຮອຍກັບທ້າວທັງທົກ, ບໍ່ຮູ້ວ່າພະຍາກຸສະລາດ ຈະເຫັນເປັນແນວໃດ, ສິນໄຊຜູ້ຊຶ່ງນາງຫວັງເພິ່ງ ຊໍ້າພັດຕົກນ້ຳສາບສູນໄປ ແລ້ວ. ສ່ວນ ນາງສີດາຈັນ ກໍບໍ່ເຊື່ອຫມັ້ນ ໃນອະນາຄົດຂອງຕົນ, ນາງມີຄວາມອຸກອັ່ງ ແລະ ຈົ່ມກັບແມ່ວ່າ: "ພວກເຮົາຊິໄປເພິ່ງໃຜທີ່ແມ່, ຈັ່ງໃດພວກເຂົາທັງທົກກໍຕ້ອງເວົ້າສັບສໍ່ລຸງວ່າ ລູກນີ້ເປັນເຊື້ອແນວຍັກ ຈິດໃຈເປັນຍັກ ແລ້ວລຸງກໍຊິບໍ່ເບິ່ງບໍ່ແຍງ, ຊິປ່ອຍລູກໃຫ້ຢູ່ໂດດດ່ຽວ ຕັດຂາດຈາກພີ່ຈາກນ້ອງ."

ນາງສຸມຸນທາໄດ້ຍິນດັ່ງນັ້ນ ກໍ່ຮູ້ສຶກສະດຸ້ງໃຈ ແລະ ເວົ້າອອຍລູກວ່າ: "ພວກເຮົາເປັນເຊື້ອແນວຂອງລຸງ, ເພິ່ນເອງຈະເບິ່ງແຍງຊ່ອຍຄ້ຳຊູພວກເຮົາ. ລຸງຮັກ ແລະ ເປັນຫ່ວງຫາພວກ ເຮົາ ຈຶ່ງໃຫ້ສິນໄຊໄປນຳຫາ, ຈັ່ງໃດລຸງກໍ່ຕ້ອງອຸປະກາລະພວກເຮົາໃຫ້ສົມເປັນເຊື້ອແນວກະສັດ."

ການເດີນທາງຜ່ານໄປ ຈົນຕາເວັນຄ້ອຍອ່າຍລົງແລວ, ພົນຂີ່ມ້າຄົນຫນຶ່ງຟ້າວເລັ່ງມ້າ ໄປຮອດເມືອງເປັງຈານກ່ອນ ເພື່ອແຈ້ງໃຫ້

ພະຍາຮູ້ລ່ວງໜ້າ. ພະອົງຊາບຂ່າວດ້ວຍຄວາມຊື່ນຊົມ ຍິນດີ ແລ້ວຂີ່ຊ້າງອອກໄປຕ້ອນຮັບໂດຍຕົນເອງ ທີ່ປາກປະຕູ ເມືອງ. ປະຊາລາສະດອນ ກໍພາກັນຫລັ່ງໄຫລໄປຕ້ອນຮັບຈົນຄັບຄັ່ງອົ່ງອໍ, ທຸກຄົນສະແດງຄວາມຍິນດີ ຈົນສຽງດັງຟົດສະນັ່ນ ເມື່ອຂະບວນຂອງນາງ ສຸມຸນທາຫຍັບມາໃກ້. ພະຍາກຸສະລາດໃຫ້ ຈັດແຖວຊ້າງ ແລະ ມ້າທີ່ເອ້ຢ້ອງຢ່າງສະຫງ່າງາມຄອງຖ້າຢູ່ທາງເຂົ້າປະຕູເມືອງ.

ສຽງເສບດົນຕີດັງຂຶ້ນຢ່າງແຮງ ເມື່ອນາງສຸມຸນທາມາຮອດແລ້ວພະຍາກຸສະລາດກໍຂີ່ຊ້າງອອກໄປອອນເອົາຂະບວນຂອງນາງເຂົ້າສູ່ເມືອງເປັງຈານ ມຸ່ງໜ້າສູ່ພະລາຊະວັງ. ຂະບວນແຫ່ເປັນແຖວຍາວຍືດ, ພົນກັ້ງຄັນຮົ່ມລຽນກັນເປັນແຖວ ນັບເປັນຈຳນວນພັນໆ. ພວກພົນຖືດາບຍ່າງອອກໜ້າ ແລະ ນຳຫລັງ ຄ່ອຍໆ ເຄື່ອນໄປຈົນເຖິງຜາສາດ. ທີ່ນີ້ ມີພາບາສີຖືກຈັດກຽມໄວ້ ເພື່ອເຮັດພິທີອັນເປັນສິລິມຸງຄຸນ ສຳລັບຜູ້ກັບຕ່າວຄືນມາ. ພະຍາກຸສະລາດກັບນາງສຸມຸນທາ ຂຶ້ນນັ່ງແທ່ນບັນລັງ, ນາງສີດາຈັນ ນັ່ງຕິດຂ້າງແມ່, ພວກສາວໃຊ້ພາກັນພັດວີຄໍາຢູ່ເອີບວາບ, ທ້າວທັງທົກ ນັ່ງຢູ່ຕ່າງຫາກ. ບັນດາເສນາມຸນຕີ ຕະຫລອດທັງພວກ ນາງສະໜົມ ແລະ ບໍລິວານທັງໝົດ ພາກັນນັ່ງນົບນອບເປັນຖັນ ແຖວ. ຫ້ອງກວ້າງໃຫຍ່ ປະດັບດ້ວຍແກ້ວມະນີສີສົດໃສ ເຫລື້ອມຍິບ ຍັບງາມອາດຕາ, ພື້ນປູດ້ວຍພົມລາຍເປັນດອກດວງອີຈິດ ສວຍ ງາມ, ສຽງເສບດົນຕີດັງລະງົມ. ເມື່ອໄດ້ລືກງາມຍາມດີ ພາມຜູ້ເປັນ ໜໍພອນ ກໍເລີ່ມຕົ້ນພິທີ ໂດຍກ່າວຄຳອວຍພອນວ່າ: "ບັດນີ້ ກຸມມານທັງທົກໄດ້ດັ້ນປ່າຜ່າດົງໄປນຳເອົາອາສຸມຸນທາຄືນມາຮອດບ້ານຮອດເມືອງ, ບ່າວໄພ່ລາສະດອນທັງຫລາຍ ສຸດແສນດີໃຈ ທີ່ເຈົ້ານາງຜູ້ເປັນນິ່ງແກ້ວຂວັນເມືອງ ໄດ້ກັບຕ່າວຄືນມາ, ບັດນີ້ໝົດກຳແລ້ວ, ຂໍເຊີນຂວັນກຸມມານທັງທົກ ກັບຄືນມາເປັນເຈົ້າເປັນໃຫຍ່ສືບສ້າງບ້ານເມືອງ, ຂໍໃຫ້ຂວັນເຈົ້ານາງທັງສອງກັບມາຢູ່ເນື້ອຢູ່ຄີງ ມາສະຖິດຢູ່ໃນຫໍຜາສາດ ຢ່າໄດ້ໄປເຜືອຝັນຢູ່ນຳຍັກ

ນຳເງືອກງູ ໃນຮູໃນຖ້ຳ, ສິ່ງຊົ່ວຮ້າຍໃດໆ ຢ່າມາຕ້ອງ, ຢ່າໄດ້ເຖົ້າແກ່ຊະລາ, ອາຍຸໃຫ້ຍືນຍາວຫມັ້ນ ພັນປີຄູຟ້າ, ຂໍຢ່າໃຫ້ມີຄວາມໂສກເສົ້າໂສກາໃດໆ ເທີ້ນ... "

ເມື່ອພານກ່າວສຽງສຸດລົງ ພະຍາກຸສະລາດ ກໍເວົ້າຫາ**ຜີດ້າ** ໂດຍຈິ່ມພຸມພຳວ່າ: ຂໍເຊີນຜີປູ່ຍ່າ ຜີອາຮັກທັງຫຼາຍ ຈົ່ງມາຮັບເອົາຂອງທານ, ມາປົກປ້ອງເບິ່ງແຍງເຈົ້ານາງທັງສອງ ໃຫ້ມີ ອາຍຸຫມັ້ນຍືນຍາວໄດ້ພັນປີ ປາສະຈາກໂພຍໄພ ແລະ ອັນຕະລາຍທັງປວງເທີ້ນ... " ຕໍ່ມາ ພະອົງກໍເອົານ້ຳເຫລົ້າມາຫວົດຟາຍເພື່ອຄວາມເຂັດຢ້ຳ ຕາມຄວາມເຊື່ອທີ່ສືບຕໍ່ກັນມາ.

ຫລັງຈາກນັ້ນ ພວກເສນາອາມາດ, ພວກນາງສະຫນົມ ແລະ ບໍລິວານທັງຫລາຍ ກໍຖືທຽນເຂົ້າມາຂາບໄຫວ້ ດ້ວຍຄວາມຈົງຮັກພັກດີ, ສຽງຄ້ອງສຽງກອງດັງຂຶ້ນຟົດສະນັ່ນ ຄືວ່າ ຂັບໄລ່ ຄວາມໂສກເສົ້າກັງວົນທັງປວງ ໃຫ້ຈາງຫາຍໄປຈາກໃບຫນ້າຂອງ ນາງສຸມຸນທາ ແລະ ລູກສາວ ຈົນບໍ່ເຫລືອຮ່ອງຮອຍໃຫ້ຜູ້ໃດສັງເກດ ເຫັນໄດ້. ພະຍາກຸສະລາດຢູ່ໃນອາລົມເບີກບານສຳລານໃຈ ຢ່າງບໍ່ເຄີຍເປັນມາກ່ອນ ແລະ ເຊື່ອວ່າຄວາມປາຖະຫນາອັນແຮງກ້າ ຂອງພະອົງໄດ້ຮັບການຕອບສະຫນອງ ດ້ວຍຄວາມຮຽບຮ້ອຍເປັນຢ່າງດີ ແລະ ມີມຸງຄຸນ.

---

**ຜີດ້າ :** ຜີປູ່ຍ່າ ຫລື ຜີບັນພະບຸລຸດ ຊຶ່ງເຊື່ອກັນວ່າ ເຝົ້າຮັກສາຢູ່ຕາມເຮືອນຊານ.

# ຈັບຜູ້ຄົດລ້ຽວ

ນາງສຸມຸນທາຄືນມາຢູ່ຫ້ອງເດີມຂອງຕົນ ແລະ ແວດລ້ອມແຫ່ແຫນໄປດ້ວຍບໍລິວານຮັບໃຊ້ເກົ່າ ທີ່ຍັງຈົງຮັກພັກດີຕໍ່ນາງ ຢ່າງສະເຫມີຕົ້ນສະເຫມີປາຍ, ແຕ່ຫາກວ່າ ນາງບໍ່ເບີກບານແຈ່ມໃສຄືເກົ່າມາຫລັງ ທັງນີ້ເພາະຕະຫລອດເວລາ ນາງຄິດຫ່ວງອາໄລຫາສິນໄຊ ຜູ້ທີ່ໄດ້ກອບກູ້ເອົານາງກັບຄືນມາຢູ່ບໍ່ເຊົາ. ນາງກັບລູກສາວຢູ່ໃນອາການຫງອຍເຫງົາ ນ້ຳຕາໄຫລອາບແກ້ມ ແລະ ກິນ ເຂົ້າບໍ່ລົງທັງທີ່ອາຫານຄາວ ແລະ ຫວານຖືກຈັດແຕ່ງໄວ້ຢ່າງອຸດົມສົມບູນ ໃນພານຄຳ, ບໍ່ດົນເລື່ອງນີ້ກໍດັງໄປຮອດຫູພະຍາກຸສະລາດ, ພະອົງຮູ້ສຶກສະດຸ້ງໃຈຕໍ່ບັນຫາລະອຽດອ່ອນນີ້ ແລ້ວກໍສັ່ງ ໃຫ້ທ້າວທັງຫົກເຂົ້າໄຫວ້, ພະຍາພໍ່ສໍ້ຖາມບຸດຊາຍທັງຫລາຍ ກ່ຽວ ກັບພຶດຕິກຳຕ່າງໆໃນການໄປນຳເອົາອາກັບຄືນມາ.

ພວກທ້າວເວົ້າເປັນສຽງດຽວກັນວ່າ : " ເວລາພວກລູກສູ້ຮົບກັບກອງທັບຍັກຢູ່ນັ້ນ ອາສຸມຸນທາເຂົ້າຂ້າງຜົວ ແລະ ເຮັດທຸກຢ່າງເພື່ອໃຫ້ຍັກກຸມພັນຜາບແພ້ພວກລູກ, ແຕ່ຍ້ອນບຸນບາລະມີຂອງພະຍາພໍ່ຊ່ອຍຕຸ້ມຫອມ ພວກລູກຈຶ່ງເອົາຊະນະພວກຍັກໄດ້ໃນທີ່ສຸດ, ເມື່ອກຸມພັນຕາຍແລ້ວ ອາສຸມຸນທາຊ້ຳຍັງເພື່ອຝັ້ນຫ່ວງຫາອາໄລບໍ່ຍອມຫາງໄປໃສ, ຈຳເປັນພວກລູກຕ້ອງໄດ້ຕົວະຍົວະ ຫລອກລໍ້ແກມບັງຄັບອາຈຶ່ງຍອມມານຳ. ສ່ວນຜູ້ລູກສາວນັ້ນ ກໍໄປເປັນເມຍພະຍານາກຢູ່ພື້ນນ້ຳສະຫມຸດ ພວກລູກກໍໄປເອົາມາ ຢ່າງຍາກລຳບາກ ເພາະຕ້ອງ

ສູ້ຮົບກັບພວກນາກຈົນນໍ້າສະຫມຸດຂຸ່ນມົວ. ພວກນາກບໍ່ແພ້ຈຶ່ງຍອມມອບນາງສີດາຈັນໃຫ້ພວກລູກເອົາມານໍາ, ທັງສອງແມ່ລູກນີ້ເປັນດັ່ງດຽວກັນ ຄືຈິດໃຈພວກເຂົາຍັງເຜືອຝັນຢູ່ນໍາພວກຍັກພວກນາມພຸ້ນ.

ພະຍາກຸສະລາດຮັບຟັງແລ້ວ ກໍຄຶດຫນັກ ແຕ່ບໍ່ເຊື່ອທັງຫມົດ. ພະອົງຄິດຮໍ່າເພິງຫລາຍຫລົບຫລາຍຕາວ ແລະ ເຫັນມີຂໍ້ສົງໄສຢູ່, ເມື່ອທ້າວທັງທົກຂາບລາລົງໄປແລ້ວ, ໃນເວລາຕໍ່ມາ ພະອົງກໍສັ່ງໃຫ້ນາງສຸມຸນທາກັບລູກສາວເຂົ້າໄຫວ້, ພະຍາເມືອງເປັງຈານເລົ່າຄືນຄວາມເກົ່າຄວາມຫລັງ ຄືນັບຕັ້ງແຕ່ນີ້ນ້ອງສາວ ພັດພາກຈາກໄປແລ້ວ ຕົນເອງກໍມີແຕ່ຫງ່ອມເຫງົາ ກິນເຂົ້າບໍ່ແຊບ ນອນບໍ່ຫລັບຈໍາເປັນເລີຍໄດ້ອອກເດີນທາງໄປນໍາຫານ້ອງ ແຕ່ບໍ່ພໍ້.

ພະອົງເວົ້າຕອນຫນຶ່ງວ່າ : " ພໍດີມາໄດ້ລູກຊາຍເປັນຜູ້ມີລິດເດດເກັ່ງກ້າຄື ທ້າວທັງທົກນີ້ເອງ ຈຶ່ງໃຊ້ໃຫ້ໄປນໍາເອົາອາຄືນມາ. ອ້າຍປະເອີບໃຈທີ່ສຸດ ຈົນບໍ່ມີອັນປຽບໄດ້ທີ່ນ້ອງກັບຕ່າວຄືນມາ, ມັນຄືກັບວ່າ ນ້ອງກັບອ້າຍຕາຍຈາກກັນ ແລ້ວເກີດມາພົບ ກັນອີກໃຫມ່. ທ້າວທັງທົກນີ້ ເປັນລູກຄົງທີ່ເກີດຈາກນາງທັງທົກ, ສ່ວນລູກອີກ ຈໍານວນຫນຶ່ງທີ່ເກີດຈາກມະເຫສີເອກ ແລະ ມະເຫສີ ຜູ້ຫລ້າສຸດນັ້ນອອກມາປະຫລາດຕ່າງທັງເປັນຮູບສັດ, ບັນດາເສນາອາມາດ ແລະຫມໍໂຫນບອກວ່າເຂັດຂວງ ຈຶ່ງໄດ້ໄລ່ຫນີຈາກເມືອງທັງແມ່ທັງລູກລວມກັນຫ້າຊີວິດ, ດຽວນີ້ ບໍ່ຮູ້ວ່າໄປຕົກຢູ່ ແຫ່ງໃດ. ອ້າຍຢາກຮູ້ວ່າທີ່ພວກທ້າວທັງທົກໄປສູ້ຮົບ ເພື່ອຍາດ ແຍ່ງເອົານ້ອງກັບລູກສາວກັບຄືນມານີ້ມີອັນໃດທີ່ນ້ອງຂັດຂ້ອງໃນໃຈບໍ່ ? "

ເມື່ອໄດ້ຍິນດັ່ງນັ້ນ ນາງສຸມຸນທາກັບນາງສີດາຈັນ ກໍຮູ້ສຶກລັບແລ້ນຫນັກໄຫນ້ໃນໃຈ ເພາະສິ່ງທີ່ໄດ້ຍິນນີ້ ມັນປີ້ນກັບຄວາມຈິງທັງມວນ, ແລ້ວນາງສຸມຸນທາກໍເລົ່າເລື່ອງຕາມຄວາມເປັນຈິງ ສູ່ພະຍາກຸ



ສະລາດຟັງ.

ນາງວ່າ: ຕອນຂ້ານ້ອຍ ຖືກຍັກຫລອນລັກເອົາໄປນັ້ນ ທໍາອິດກໍຄຶດວ່າມັນຊິຂ້າຊິແກງ, ແຕ່ເມື່ອໄປເຖິງເຂດແດນຍັກແລ້ວຍັກກໍຂໍເອົາເປັນເມຍ ແລະ ໃຫ້ຢູ່ໃນຜາສາດຫລັງວົດວາມ, ຕໍ່ມາກໍໄດ້ລູກສາວຊື່ສີດາຈັນ ຊຶ່ງພະຍານາກມາຂໍເອົາໄປເປັນມະເຫສີຢູ່ເມືອງໃຕ້ສະຫມຸດ.

ກ່ອນຂ້ານ້ອຍກັບລູກສາວຈະໄດ້ຕ່າວຄືນມານີ້ ແມ່ນຍ້ອນສິນໄຊ ເອົາຊີວິດເຂົ້າສ່ຽງ ດ້ວຍການຕໍ່ສູ້ຢ່າງຂ້ຽວຂາດກັບພວກຍັກພວກນາກ. ສິນໄຊບອກວ່າຕົນກັບສັງທອງ ທີ່ມານໍາກັນເປັນລູກຊາຍຂອງພະຍາເມືອງເປັງຈານ ແລະ ໄດ້ຮັບຄໍາສັ່ງຈາກພະຍາພໍ່ ໃຫ້ມານໍາເອົາອາຄືນເມືອ, ທັງສອງທ້າວນີ້ ເກີດຈາກແມ່ດຽວກັນຊື່ ນາງລຸນ. ກວ່າຊິພາກັນອອກຫວິດເມືອງຍັກ ທ້າວທັງສອງກໍໄດ້ສູ້ຣົບຕົບຕີກັບກອງທັບຍັກນັບເປັນລ້ານໆ. ຂະນະທີ່ສົງຄາມດໍາເນີນໄປຢ່າງເອົາເປັນເອົາຕາຍ ກໍມີສີໂຫມາຊ່ອຍ, ທ້າວນີ້ ເປັນລູກຂອງນາງຈັນທາ ຜູ້ເປັນມະເຫສີເອກຂອງພະອົງອ້າຍ.

ເມື່ອສົງຄາມຕໍ່ສູ້ກັບຍັກຜ່ານພົ້ນໄປຢ່າງມີໄຊ, ຂ້ານ້ອຍຂໍໃຫ້ສິນໄຊໄປນໍາເອົາລູກສາວທີ່ເມືອງນາກ, ສິນໄຊກັບສັງທອງໄປເມືອງໃຕ້ສະຫມຸດ ແລະ ໄປຫລິ້ນຫມາກສະກາກັບພະຍານາກ ເພື່ອວ່າຈະໄດ້ເອົານາງສີດາຈັນ ກັບຄືນມາໂດຍດີ. ພະຍານາກ ຫລິ້ນບໍ່ແພ້, ຊໍ້າບໍ່ຫນໍາ ຍັງຊິຈັບສິນໄຊໄວ້ອີກ, ທ້າວຈໍາເປັນຕ້ອງຕໍ່ສູ້ຈົນເມືອງໃຕ້ສະຫມຸດຂຸ່ນຫມອງ, ນາກຕາຍນັບບໍ່ໄຫວ, ພະຍານາກຈຶ່ງຍອມມອບນາງສີດາຈັນໃຫ້ມາ.

ສິນໄຊຕຸ້ມຫອມເອົາເຜືອແມ່ລູກທັງສອງ ເດີນທາງໄກຕັ້ງຫລາຍໂຍດ ຈຶ່ງມາຮອດບ່ອນທີ່ທ້າວທັງທົກກັບສີໂຫຄອງຖ້າຢູ່ກາງປ່າ ໂດຍສີໂຫເປັນຜູ້ຮັກສາຄວາມປອດໄພໃຫ້, ທ້າວທັງທົກນ້ອມໄຫວ້ສິນໄຊ ຈົນຫົວຈຸດິນ ເພາະນັບຖືໃນຄວາມເກັ່ງກ້າຂອງສິນໄຊ.

ຈາກບ່ອນນັ້ນ ທັງຫມົດຄະນະ ຈຶ່ງເດີນທາງຕໍ່ ຍົກເວັ້ນສີໂຫຊຶ່ງຂໍແຍກທາງຟ້າວໄປຫາແມ່ ຢູ່ອີກບ່ອນຫນຶ່ງຕ່າງຫາກ. ເມື່ອມາຮອດ ນ້ຳຕົກຕາດໃຫຍ່ ຄະນະກໍພາກັນພັກຜ່ອນ, ທ້າວທັງທົກຊວນສິນໄຊລົງອາບນ້ຳ, ເວລາຜ່ານໄປບໍ່ດົນ ພວກທ້າວກໍ ແລ່ນມາບອກອ້ານ້ອຍວ່າ ສິນໄຊຕົກເຫວຕາຍແລ້ວ, ອ້ານ້ອຍ ເອງກໍຍັງສົງໄສຢູ່ຈຶ່ງເອົາປັກປິ່ນເກົ້າ ຊອງ ແລະ ຜ້າສະໄບສ່ຽງ ໄວ້ທີ່ແຄມນ້ຳ ໂດຍອະທິດຖານວ່າ ຖ້າສິນໄຊຍັງມີຊີວິດຢູ່ ຂໍໃຫ້ເທບພະເຈົ້າໄປປັ້ນດົນໃຈຄົນຜູ້ມີຈິດໃຈເປັນທຳ ນຳເອົາຂອງສາມ ຢ່າງນັ້ນມາສົ່ງຄືນ...

ພະຍາກຸສະລາດໄດ້ຍິນດັ່ງນັ້ນ ກໍມີທັງຄວາມຕື່ນເຕັ້ນດີໃຈ ແລະຄວາມເສຍໃຈປົນກັນ ດີໃຈເພາະຮູ້ວ່າລູກກັບເມຍລວມກັນ ທັງຊີວິດຍັງບໍ່ທັນຕາຍ, ເສຍໃຈເພາະໄດ້ເຮັດຜິດພາດ ຍ້ອນບໍ່ຄິດ ຮິ່ນຕອງຄັກແນ່ ມົວຟັງແຕ່ຄວາມຫມໍໂຫນ ຈຶ່ງສັ່ງຂັບໄລ່ລູກກັບ ເມຍຫນີຈາກເມືອງ, ພະອົງຮູ້ສຶກກືນແຫນງປານວ່າມີໄຟສຸມຢູ່ໃນຫົວໃຈ, ແຕ່ຂະນະດຽວກັນ ພະອົງກໍ່ຮູ້ແຈ້ງສິ່ງຫນຶ່ງ ນັ້ນກໍ່ຄືທ້າວ ທັງທົກເປັນຄົນຄົດລ້ຽວຢ່າງໃຫ້ອະໄພບໍ່ໄດ້.

ພະຍາກຸສະລາດຄິດຫນັກ ແຕ່ຍັງບໍ່ໄດ້ຕັດສິນໃຈແນ່ນອນລົງໄປ ເພາະຕ້ອງຫາພະຍານຫລັກຖານມາປະກອບການພິຈາລະນາໃຫ້ຖີ່ຖ້ວນ. ສ່ວນເລີກແລ້ວ ພະອົງຄິດຫ່ວງຫາອາໄລນຳສິນໄຊ ຢູ່ບໍ່ເລີກບໍ່ແລ້ວ.

ເວລາຕໍ່ມາ ເສນາມຸນຕີພາພໍ່ຄ້ານາຍສະເພົາຈາກເມືອງຈີນ ເຂົ້າໄຫວ້. ນາຍສະເພົາເອົາຂອງສາມຢ່າງນັ້ນມາຖະຫວາຍ ແກ່ພະອົງ ໂດຍບອກວ່າຕົນໄດ້ພົບສິ່ງຂອງດັ່ງກ່າວຢູ່ແຄມນ້ຳ ໃນເວລາເດີນທາງມຸ່ງໜ້າມາຍັງເມືອງເປັງຈານ, ເຫັນວ່າມັນ ເປັນສິ່ງຂອງສຳຄັນ ອາດຈະກ່ຽວຂ້ອງກັບເຊື້ອວົງກະສັດຂອງ ເມືອງນີ້ ຈຶ່ງໄດ້ນຳມາຖະຫວາຍ. ພະຍາກຸສະລາດສັ່ງໃຫ້ນາງ ສຸມຸນທາ ເຂົ້າມາໃນຜາສາດອີກ ເພື່ອເບິ່ງຂອງສາມຢ່າງນັ້ນ, ນາງເຂົ້າມາເຫັນແລ້ວ ກໍ່ຕື່ນເຕັ້ນດີໃຈ ແລະຫລັ່ງຮ້ອງອອກມາຢ່າງລືມຄິດວ່າ : "ສິນໄຊ ຍັງບໍ່ຕາຍ! ສິນໄຊຍັງຢູ່ ! ນີ້ແມ່ນຂອງທີ່ຂ້ານ້ອຍເອົາສ່ຽວໄວ້ທີ່ແຄມນ້ຳນັ້ນແທ້ໆ, ບັດນີ້ ມີຜູ້ເອົາມາສົ່ງຄືນ ເຖິງເຮືອນເຖິງຊານ, ປານນີ້ ສິນໄຊຄົງຢູ່ບຳແມ່ທີ່ ກາງປ່າພຸ່ນ ແລ້ວ ..."

ເມື່ອມີຂໍ້ພິສູດຕື່ມດັ່ງນີ້ ພະຍາກຸສະລາດກໍເຊື່ອວ່າ ເລື່ອງທີ່ນາງສຸມຸນທາເລົ່າມານັ້ນ ແມ່ນຄວາມຈິງທຸກປະການ. ພະອົງມອບລາງວັນ ເພື່ອເປັນການສັນລະເສີນນ້ຳໃຈ ອັນສູງສົ່ງຂອງນາຍສະເພົາ, ແລ້ວແຂກຈາກແດນໄກກໍລາລົງຈາກຜາສາດໄປ.

ບັດນີ້ ພະຍາກຸສະລາດຮູ້ຈັກຄວາມຈິງແລ້ວ, ພະອົງຮູ້ສຶກຄຽດແຄ້ນເຫລືອໃຈໃຫ້ທ້າວທັງຫົກ ທີ່ມີໃຈຄິດຄົດ ໂລບລ້ຽວ ຕົວະ ຮອດພໍ່ຂອງຕົນ, ພະອົງວ່າ : "ພວກນີ້ເອງ ທີ່ຈິດໃຈເປັນຍັກ !"

ພະຍາກຸສະລາດເສຍໃຈຫລາຍ ທີ່ໄດ້ເຮັດໃຫ້ລູກເມຍຜູ້ສັດຊື່ບໍລິສຸດ ຕ້ອງລຳບາກກາກກຳ ຢ່າງແສນສາຫັດ. ວິທີດຽວທີ່ພະອົງຈະສວ່າງເຊົາຈາກຄວາມກິນແໜງ ທີ່ຝັງເລິກຢູ່ໃນອົກ ກໍຄືສັ່ງຈັບພວກທ້າວທັງຫົກ ພ້ອມທັງຜູ້ທີ່ຄິດຄົດໂລບລ້ຽວທັງໝົດ.

ແລ້ວຕໍ່ມາ ຄຸກທີ່ມີກຳແພງໜາແໜ້ນ ສັນກຳແພງມີຫລາວແຫລມຊອງຊຶບລຶບ ກໍເປັນບ່ອນກັກຂັງທ້າວທັງທຶກ ພ້ອມກັບແມ່ທັງທຶກ ລວມທັງແມ່ຢາແຝດ ແລະ ໝໍໂຫນຜູ້ກິນສິນບົນ. ພວກເຂົາຖືກລົງໂທດສັບພະທຸກໂດຍຖືກໃສ່ໂສ້ຂັງໄວ້.

## ພະຍາກຸສະລາດໄປຊອກຫາສິນໄຊ

ພະຍາກຸສະລາດຮ້ອນຮົນໃນໃຈ ເພາະຢາກໄປເຫັນລູກທັງສາມກັບມະເຫສີທັງສອງທີ່ຢູ່ໃນປ່າ. ດັ່ງນີ້ ພະອົງຈຶ່ງມອບໃຫ້ອັກຄະມະຫາເສນາຮັກສາເມືອງແທນ, ແລ້ວພະອົງ ກໍພາໄພພົນຈຳນວນຫລວງຫລາຍເຂົ້າປ່າ ເພື່ອໄປຊອກຫາສິນໄຊ, ຂະບວນເດີນທາງ ມີຊ້າງ ມີມ້າ ນັບເປັນພັນໆໂຕ, ພົນຖືດາບແຫ່ແຫນໄປເປັນແຖວຍາວຍືດ. ນາງສຸມຸນທາກັບນາງສີດາຈັນ ລວມທັງໝໍໂຫນ ແລະ ບໍລິວານນັບເປັນຮ້ອຍໆ ກໍຮ່ວມເດີນທາງໄປນຳກັນ. ເມື່ອໄປຮອດປ່າຫິມະວັນອັນເປັນບໍລິເວນທີ່ສິນໄຊສູນຫາຍໄປ ພະຍາກຸສະລາດ ກໍໃຫ້ຂະບວນເດີນທາງຢຸດພັກເຊົາ ແລ້ວສ້າງຄ້າຍພັກແຮມ ຂຶ້ນຢູ່ກາງປ່າ ເອີ້ນວ່າຄ້າຍອຽງໄຊ. ກາງຄືນມາມີ ການຄົບງັນມ່ວນຊື່ນ, ສຽງເສບມະໂຫລີດັງກ້ອງລະງົມ ໄປທົ່ວປ່າດົງດອຍ. ໝໍໂຫນກໍທວາຍເບິ່ງວ່າ ສິນໄຊຈະຢູ່ທາງທິດໃດ, ປາກົດຕາມເລກນໍ້ນັ້ນບອກວ່າ ສິນໄຊຍັງມີຊີວິດຢູ່ ແລະ ໃຫ້ຊອກຫາໄປທາງທິດເໜືອ, ດັ່ງນີ້ ຂຸນເສນາ ທີ່ຊຳນານປ່າກໍໄດ້ຮັບຄຳສັ່ງ ໃຫ້ທ່ຽວຊອກຫາໄປຈົນທຸກຮ່ອມຫ້ວຍດົງໜາ, ແຕ່ປາກົດ ວ່າບໍ່ພົບຮ່ອງຮອຍສິນໄຊເລີຍ.

ພະຍາກຸສະລາດອຸກອັ່ງກັງວົນ ເພາະຢ້ານວ່າລູກຈະຕາຍ ປະໂດຍທີ່ຕົນບໍ່ໄດ້ເຫັນໜ້າ ບໍ່ໄດ້ຊື່ນຊົມຄວາມເກັ່ງກ້າສາມາດລື່ນໂລກຂອງຜູ້ເປັນລູກເລີຍ. ພະອົງຈັດທຳ**ພະລີກຳ** ໂດຍໃຫ້ເສນາປຸກຮ້ານຂຶ້ນແລ້ວໄຕ້ທູບທຽນບູຊາ ບະບົນຫາເທບພະເຈົ້າ ໃຫ້ມາຊ່ອຍຊີ້ບອກທາງໄປຫາບ່ອນຢູ່ຂອງສິນໄຊ. ແລ້ວການຊອກຫາກໍ່ດຳເນີນຕໍ່ໄປ...

ໃນເວລາດຽວກັນນີ້ ຢູ່ອີກເບື້ອງໜຶ່ງຂອງປ່າໄພໜາ ນາງຈັນທາ ນາງລຸນກັບລູກໆ ອັນມີ ສິນໄຊ ສັງທອງ ແລະ ສີໂຫ ພາກັນພັກຜ່ອນຢູ່ໃນຜາສາດງາມອາດຕາ. ຕອນທີ່ທ້າວທັງທົກຊຸກສິນໄຊລົງເຫວນັ້ນ ພະອິນຫລິງລົງມາຍັງໂລກລຸ່ມ ເຫັນສິນໄຊ ຕົກເຫວ ຈຶ່ງມາຊ່ອຍກອບກູ້ເອົາໄວ້ທັນ ແລ້ວພາມາຫາແມ່ກັບປ້າຢູ່ບ່ອນນີ້, ສ່ວນສີໂຫກັບສັງທອງ ເດີນທາງມາຮອດກ່ອນແລ້ວ. ສິນໄຊ ເລົ່າເລື່ອງຄວາມໃຈດຳອຳມະຫິດ ຂອງທ້າວທັງທົກສູ່ທຸກຄົນຟັງ. ພະອິນໄດ້ເນລະມິດເມືອງຂຶ້ນໄວ້ໃຫ້ແກ່ທ້າຊີວິດ ທີ່ເປັນເຊື້ອວົງກະສັດຢູ່ຢ່າງສົມກຽດ ແລະ ໃສ່ຊື່ວ່າ ເມືອງຊຽງສິນ. ມີພະຍາຄຸດ, ພະຍານາກພ້ອມດ້ວຍບໍລິວານຈຳນວນຫລາຍ ເຝົ້າຮັກສາຄວາມປອດໄພໃຫ້ຢ່າງຮອບດ້ານ.

ແລ້ວຄືນໜຶ່ງ ພໍພະຈັນລອຍຂຶ້ນພົ້ນຂອບຟ້າ ສ່ອງແສງສີນວນອາບໄປທົ່ວປ່າດົງ ກໍມີສຽງຝີດສະນັ່ນດັງມາຮອດເມືອງຊຽງສິນ, ໄພ່ພົນນາກທີ່ເຝົ້າຮັກສາ ກໍເຂົ້າໄປແຈ້ງຕໍ່ສິນໄຊວ່າ ສຽງດັງສະນັ່ນແຮງປານນີ້ ຢ້ານແມ່ນຍັກເສິກສັດຕູຈາກຕ່າງແດນຍົກກຳລັງມາ. ສິນໄຊຮັບຟັງແລ້ວກໍ່ແຍ້ມຫົວທັງເວົ້າຂຶ້ນວ່າ : "ອາດຈະແມ່ນພີ່ນ້ອງ

---

**ພະລີກຳ** : ການບູຊາອຸທິດ, ການບວງສວງ



ເຊື້ອສາຍຂອງເຮົາມານຳຊອກຫາກໍເປັນໄດ້ ໃຫ້ແຕ່ງພົນຜູ້ກ້າຫານໄປສືບເບິ່ງເພື່ອຄວາມແນ່ນອນ.

ເສນານາກໂຕໜຶ່ງ ປະຕິບັດຕາມຄຳສັ່ງ ໂດຍແປງເພດເປັນຊາຍໜຸ່ມຮູບງາມ ແລ້ວໄປສືບເບິ່ງບ່ອນທີ່ມີສຽງດັງອຶງຄະນຶງ. ເມື່ອໄປຮອດບ່ອນພະລານຫີນກວ້າງໆ ກໍເຫັນແສງໄຟຮຸ່ງໄປທົ່ວບໍລິເວນ, ມີໄພ່ພົນເຕັມເດຍລະດາດ, ເສນານາກເຂົ້າໄປສອບຖາມ ຈຶ່ງຮູ້ວ່າແມ່ນພະຍາເມືອງເປັງຈານ ພາໄພ່ພົນອອກເລາະປ່າຊອກຫາ ສິນໄຊ ເພື່ອໃຫ້ກັບຄືນເມືອເມືອງ ແຕ່ຊອກບໍ່ເຫັນຈັກເທື່ອ. ເສນານາກຈຶ່ງພາພະຍາກຸສະລາດ ພ້ອມດ້ວຍບໍລິວານ ລັດປ່າຜ່າດົງ ໄປຍັງບ່ອນສິນໄຊຢູ່ເມື່ອເຂົ້າໄປໃນເມືອງຊຽງສິນ ເສນານາກກໍພາເຂົ້າໄປນັ່ງຢູ່ທີ່ **ມົນດົບ** ແລ້ວເສນານາກກໍເຂົ້າໄປເຫຼືອລາຍງານຕໍ່ສິນໄຊ.

ຢູ່ອີກຫ້ອງໜຶ່ງ ພາຍໃນຜາສາດ, ພາຍຫລັງຮູ້ຂ່າວຈາກເສນານາກແລ້ວ ສິນໄຊປຶກສາກັບແມ່ ແລະ ປ້າ ເລື່ອງການກັບຄືນເມືອເມືອງເປັງຈານ, ປາກົດວ່າທັງສອງເພິ່ນບໍ່ຂັດຂ້ອງ ຄື ເອົາແຕ່ ສິນໄຊເຫັນສົມຄວນ. ສິນໄຊຍັງປຶກສານຳພະຍາຄຸດກັບ **ພະຍານາກ** ທີ່ເປັນຜູ້ອາວຸໂສວ່າ ຄວນໃຫ້ພະຍາພໍ່ເຂົ້າມາຫາ ຫລື ວ່າຕົນເອງຄວນອອກໄປຫາເພິ່ນ. ມີການແນະນຳໃຫ້ສິນໄຊ ເປັນຝ່າຍອອກໄປຫາພໍ່ ເພື່ອສະແດງວ່າຜູ້ເປັນລູກຮູ້ຈັກຮີດຄອງອັນດີງາມ ແລະ ຮູ້ຈັກເຄົາລົບນັບຖືຜູ້ໃຫ້ກຳເນີດ.

---

**ມົນດົບ** : ເຮືອນທີ່ມີຫລັງຄາເປັນຍອດສີ່ຫລ່ຽມ
( ປ. ມັນທະປະ ).

**ພະຍານາກ** : ໝາຍເຖິງຫົວໜ້າພວກນາກທີ່ມາເຝົ້າຮັກສາ
ສິນໄຊຕອນເຂົ້າປ່າທຳອິດ.



ແລ້ວການພົບພໍ້ກັນຄັ້ງປະຫວັດສາດ ອັນສະເທືອນອາລົມ ລະຫວ່າງພໍ່ກັບລູກກໍ່ມີຂຶ້ນ. ຝ່າຍພະຍາກຸສະລາດແອດລ້ອມໄປດ້ວຍນາງສຸມຸນທາ ກັບນາງສີດາຈັນ ແລະ ບໍລິວານແຫ່ແຫນ. ຝ່າຍສິນໄຊມີສອງປ້າແມ່, ສີໂຫ, ສັງທອງ ກັບທັງພະຍາຄຸດ ພະຍານາກ. ພະຍາກຸສະລາດຮູ້ສຶກວ່າຫົວໃຈຫັກຫວານໆ ເພາະຄວາມຕື້ນຕັນໃຈຈົນນ້ຳຕາໄຫລຍ່າວໆ, ພະອົງຍອມຮັບວ່າຕົນເອົ້າໃຈຜິດໃນຄາວກ່ອນ ຍ້ອນມີຜູ້ສັບສໍ່ຫາເລື່ອງໃສ່ກັນ. ພະອົງ ວ່າ: "ບັດນີ້ ຂໍໃຫ້ລູກແລະ ນະເຫສີທັງສອງລືມສາ ເລື່ອງຄາວ ຫລັງ ທີ່ພໍ່ໄດ້ພາດພັ້ງໄປ, ດຽວນີ້ ຮູ້ແຈ້ງແລ້ວ ພໍ່ຈຶ່ງຈາກລາຊະວັງພາໄພພົນມານຳຊອກຫາ ເພື່ອໃຫ້ກັບຕ່າວຄືນເມືອງທັງຫມົດ, ໃຫ້ລູກໄປຢູ່ສືບສ້າງ ເປັນເຈົ້ານັ່ງເມືອງ."

ສິນໄຊ : "ພະຍາພໍ່ມີຄວາມປະສົງແນວນັ້ນ ກໍສົມຄວນຢູ່. ແຕ່ວ່າຢູ່ພະລາຊະວັງພຸ້ນ ກໍ່ມີພວກອ້າຍທັງຫົກຢູ່ເດ. ຂ້ານ້ອຍເອງເປັນພຽງລູກຜູ້ຫລ້າ ບໍ່ສົມຄວນຈະມາຍົກຂຶ້ນແທນພະຍາພໍ່ເລີຍ. ລູກຢ້ານວ່າຈະເກີດເຄາະເຂັນ ຈົນເຮັດໃຫ້ບ້ານເມືອງຂຸ່ນຫມອງຫລົ້ມຈົມ."

ພະຍາກຸສະລາດ : "ຖ້າລູກກັບມະເຫສີທັງສອງບໍ່ເອົາຫົວຊານຳການທີ່ພໍ່ມາຊອກຫາ ເພື່ອໃຫ້ຄືນເມືອເມືອງນີ້ແລ້ວ ພໍ່ກໍ່ຄົງຈະຕາຍມອດມ້ວຍຍ້ອນຄວາມກິນແຫນງ."

ສິນໄຊຄິດຫລົບໄປຫລົບມາຫລາຍຕ່າວ ແຕ່ກໍຍັງຢືນຢັນວ່າ : "ພະອົງພໍ່ຄວນໃຫ້ພວກອ້າຍທັງຫົກຂຶ້ນຄອງເມືອງກ່ອນ. ຂ້ານ້ອຍຢູ່ຕາມດົງຕາມປ່າຕໍ່ໄປກໍ່ໄດ້ ເພາະນັບແຕ່ນີ້ເກີດກໍດຳລົງຊີວິດຢູ່ດົງນີ້ຕະຫລອດມາ ມີສັດສາວາສິ່ງເປັນຫມູ່ເປັນເພື່ອນຫາກິນຫມາກໄມ້ຫົວມັນຕາມຍະຖາກຳໄປ."

"ພໍ່ໄດ້ສັ່ງຈັບພວກເຂົາຂັງໃສ່ຄອກແລ້ວ ເພາະພວກເຂົາເປັນຄົນຄິດລ້ຽວ, ຕົວະຮອດພໍ່ຂອງຕົນ, ດັ່ງນີ້ຈຶ່ງຕັດພໍ່ຕັດລູກກັນ ແລ້ວ." ພະຍາກຸສະລາດກ່າວແລ້ວອ້ອນວອນມາຫາມະເຫສີທັງສອງ: "ຂໍໃຫ້ນ້ອງທັງສອງກັບຄືນເມືອເມືອງເປັງຈານ, ຖ້າບໍ່ຄືນໄປອ້າຍກໍ່ມີແຕ່ຊິຂົນເຄື່ອງມາຢູ່ນຳພີ້ ເພື່ອໃຫ້ໄດ້ຢູ່ພ້ອມໜ້າມະເຫສີທັງສອງ ແລະລູກທັງສາມ, ເຖິງແມ່ນຕາຍອ້າຍກໍ່ຊິບໍ່ກິນແໜງ."

ມະເຫສີທັງສອງເວົ້າວ່າ: "ພວກຂ້ານ້ອຍທັງສອງນີ້ ຢາກໃຫ້ພະອົງຄິດຮິນຕອງເບິ່ງໃຫ້ມັນຄັກ, ພວກຂ້ານ້ອຍຮັກບູຊາພະອົງ ແລະໄດ້ອະທິດຖານນ້ອມໄຫວ້ຫາພະອິນ ເພື່ອໃຫ້ສິ່ງຜູ້ມີ ບຸນມາເກີດນຳ, ບາດລູກເປັນຕົນເປັນໂຕຂຶ້ນມາຄືດັ່ງພະອົງເຫັນຢູ່ນີ້ແລ້ວ ເຖິງຈະເປັນຮູບຮ່າງແນວໃດ ກໍ່ບໍ່ຄວນເຮັດຮ້າຍໃສ່, ບໍ່ຄວນໄລ່ໜີ..."

ພະຍາກຸສະລາດຕົກຢູ່ໃນທ່າຮັບ ເວົ້າບໍ່ໄດ້ເຕັມປາກ ຈຶ່ງມີ ແຕ່ຂໍຍອມຮັບຜິດ ແລະ ຂໍອະໄພຍະໂທດນຳມະເຫສີ ແລະ ລູກ. ນາງສຸມຸນທາທີ່ນັ່ງຢູ່ຂ້າງ ເປັນຜູ້ເວົ້າຊ່ອຍວ່າ: "ຖ້າສິນໄຊບໍ່ ເຮັດຕາມ ຄວາມປະສົງຂອງພະຍາພໍ່ແລ້ວ ເມືອງເປັງຈານທີ່ເຄີຍ ຮຸ່ງເຮືອງເຫລືອງເຫລື້ອມ ແລະ ມີຊື່ລືຊາຜາກົດໄປທົ່ວທະວີບ ກໍຈະເສົ້າໝອງເສື່ອມສະຫລາຍ ກາຍເປັນເມືອງຮ້າງຢ່າງແນ່ນອນ. ດັ່ງນີ້ ຫລານຄວນກັບຄືນເມືອເປັນເຈົ້ານັ່ງເມືອງ ເພື່ອສືບສາງ ໃຫ້ຈະເລີນຕໍ່ໄປພາຍໜ້າ, ມີແຕ່ຫລານຜູ້ດຽວເທົ່ານັ້ນ ທີ່ຈະເຮັດໃຫ້ເມືອງເປັງຈານເຂັ້ມແຂງແລະ ເປັນທີ່ເກງກົວຂອງເມືອງຕ່າງໆ ຢູ່ຕໍ່ໄປ, ຊື່ສຽງຂອງຫລານນັ້ນດັງກ້ອງໄປທົ່ວຊົມພູທະວີບແລ້ວ."

ສິນໄຊຄິດຫວຳ ຮ່ຳເພິງເບິ່ງໄປມາແລະ ເຫັນວ່າເມືອງ ຕ່າງໆທີ່ຂຶ້ນສ່ວຍຕໍ່ເມືອງເປັງຈານກໍຫລາຍ, ຖ້າມີຂ່າວວ່າ ເມືອງເປັງຈານອ່ອນກຳລັງລົງ ແນ່ນອນວ່າເມືອງສ່ວຍຕ່າງໆ ຈະເຄື່ອນໄຫວແບບ

ກະດ້າງກະເດື່ອງ ຊຶ່ງໃນຈຳນວນນີ້ ອາດມີ ເມືອງຍັກ ເມືອງນາກ ສົມທົບເຂົ້າອີກ. ທ້າວຄິດວ່າ ອາສຸມຸນທາເວົ້າມີເຫດຜົນ ຈຶ່ງຕອບຕົກລົງ. ທ້າວຂໍໃຫ້ທັງສອງແມ່ປ້າ ອະໄພຍະໂທດໃຫ້ພະຍາພໍ່, ທັງສອງມະເຫສີເຫັນດີນຳ ແລ້ວບັນຍາ ກາດກໍ່ແຈ່ມໃສຂຶ້ນ.

ຕໍ່ມາເສນາມຸນຕີທີ່ແທ່ແທນມານຳພະຍາກຸສະລາດ ກໍຍໍອັນທຽນບິລະມົນ ຍື່ນຕໍ່ສິນໄຊ, ທ້າວຮັບເອົາດ້ວຍທ່າທາງຄ່ອມຄົນ, ທຸກຄົນມີສີໜ້າເບີກບານມ່ວນຊື່ນ ພາກັນຮ້ອງສາທຸການ, ໄພ່ພົນພາກັນຫວ່ານດອກໄມ້ຫລາຍສີສັນ ຢັ່ງຢາຍເດຍລະດາດ. ມີສຽງປ່າວເຕືອນດັງໄປທົ່ວວ່າ ມື້ອື່ນນີ້ຈະມີພິທີແຫ່ສິນໄຊ ເຂົ້າສູ່ເມືອງເປັງຈານ, ເສນານາກຜູ້ໜຶ່ງໄດ້ຮັບຄຳສັ່ງດ່ວນ ໃຫ້ນຳສານໄປເຊີນຍັກພັນນຸລາ ແລະ ນາກອະລຸນນະລາດ ມາຮ່ວມພິທີແຫ່ຄັ້ງສຳຄັນນີ້ດ້ວຍ.

## ສິນໄຊຄືນເມືອເປັງຈານ

ເຊົ້າມື້ໃໝ່ ສິນໄຊຕື່ນນອນແລ້ວອອກໄປຢືນທີ່ທ່ຄອຍແນມເບິ່ງພວກສັດທັງຫລາຍ ທີ່ຢູ່ຕາມທຳມະຊາດ ອ້ອມແອ້ມຜາສາດ, ທ້າວເອົາອາຫານໃຫ້ພວກສັດກິນເປັນເທື່ອສຸດທ້າຍ ເຊັ່ນ ນົກຍູງ ນົກສາລິກາ ນົກແກ້ວ ກະຮອກ ກະແຕ ລີງ ຄ່າງ ແລະ ອື່ນໆ. ສັດໃຫຍ່ທີ່ອາໄສຢູ່ໃນປ່າອ້ອມຜາສາດກໍ່ມີຊ້າງ ເສືອ ໝີ ເມີຍ ກວາງຟານ... ສັດ ເຫລົ່ານີ້ລຸ້ນຄືສັດລ້ຽງທົ່ວໄປ ເພາະ ສິນໄຊເອົາອາຫານໃຫ້ກິນເລື້ອຍ ທັງປົກປ້ອງ ແລະ ຊ່ວຍເຫລືອ ຄາວຈຳເປັນຢ່າງທົ່ວເຖິງກັນ. ທ້າວກ່າວອຳລາສັດ ດ້ວຍຄວາມ ເປັນຫ່ວງຜູກພັນ ແລະ

ບອກໃຫ້ສັດຮັກແພງກັນ, ຢ່າບຽດບຽນ ຂົ່ມເຫັງກັນ, ແລ້ວທ້າວກໍກັບຄືນສູ່ຜາສາດ ເພື່ອກຽມອອກເດີນທາງ.

ເມື່ອຕາເວັນຂຶ້ນອ່າວສູງເປັນເວລາຍາມວາຍແລ້ວ ຂະບວນເດີນທາງກໍກຽມພ້ອມ, ສິນໄຊ ສີໂຫ ສັງທອງ ແລະ ສອງແມ່ປ້າຂຶ້ນນັ່ງເທິງ**ສະລ່ຽງ** ສີຄຳເຫລືອງເຫລື້ອມ, ສຽງກອງ ດັງຂຶ້ນຕຸ້ມໆເພື່ອປ່າວເຕືອນໃຫ້ທຸກຫມູ່ທຸກກອງອອກເດີນທາງ, ພະຍາກຸສະລາດຂີ່ຊ້າງພາຍຂອັນອອກຫນ້າໄປກ່ອນ, ຖັດມາແມ່ນ ນາງສຸມຸນທາ ກັບນາງສີດາຈັນຂີ່ຊ້າງພັງ. ຄົນຖືຄັນຮົ່ມນັບເປັນ ພັນໆ ຍ່າງເປັນແຖວ, ມີຮົ່ມສີຂາວ ສີຂຽວ ຫລຽວແຕ່ໄກຄືດອກເຫັດທີ່ເຄື່ອນໄຫວໄປໄດ້, ຂະບວນແຫ່ມີຊ້າງ ມ້າ ແລະ ໄພ່ພົນຊາວເມືອງເປັງຈານ ຍ່າງເປັນແຖວ ຍາວຈົນສຸດສາຍຕາ, ສຽງກອງຕະໂພນ ສຽງແສ່ງ ສຽງຊຸງດັງຟົດສະນັ່ນປານແຜ່ນດິນຊິເຄື່ອງ. ເຂົ້າຮ່ວມໃນຂະບວນແຫ່ກໍມີໄພ່ພົນຂອງພະຍາສິມພະລີທີ່ເປັນຊາວຄຸດ, ໄພ່ພົນຂອງພະຍານາກທີ່ມາເຝົ້າຮັກສາສິນໄຊ ຕັ້ງ ແຕ່ຕອນເຂົ້າປ່າໄລຍະທຳອິດ, ນອກນັ້ນກໍມີຍັກພັນບຸລາ ແລະ ນາກວະລຸນນະລາດ ທີ່ດ່ອນມາຕາມ ຄຳສັ່ງໃນສານ.

ຂະບວນແຫ່ເຄື່ອນໄປຢ່າງມີຊີວິດຊີວາ, ສຽງເສບ ສຽງຂັບລຳ ດັງອື້ອຶງໄປຕະຫລອດທາງ, ຜູ້ທີ່ເບີກບານສຳລານໃຈກວ່າຜູ້ອື່ນໃດທັງຫມົດ ກໍແມ່ນພະຍາກຸສະລາດເພາະພະອົງໄດ້ສົມ ຄວາມປາຖະຫນາທຸກປະການ.

ການເດີນທາງອັນຍາວໄກຫລາຍໂຍດ ຜ່ານພົ້ນໄປຢ່າງໄວ

---

**ສະລ່ຽງ** : ບ່ອນນັ່ງທີ່ໃຊ້ຄົນຫາມສຳລັບເດີນທາງ ຫລື ບັນທຸກເທິງຫລັງຊ້າງ, ແຢ່ງຊ້າງກໍເອີ້ນ.

ເພາະພະຍາອິນໄດ້ຫຍໍ້ແຜ່ນດິນໃຫ້ສັ້ນເຂົ້າ. ພະຍາອິນມາຮ່ວມໃນຂະບວນແຫ່ເພື່ອຊື່ນຊົມຍິນດີນຳສິນໄຊ ທີ່ພະອົງເອງໄດ້ສົ່ງລົງມາເກີດໃນຄັ້ງນັ້ນ, ແຕ່ພະອົງແປງເພດເປັນມະນຸດທຳມະດາຈົນບໍ່ມີຜູ້ໃດສັງເກດເຫັນໄດ້. ແລ້ວໃນທີ່ສຸດ ຂະບວນເດີນທາງກໍມາຮອດປະຕູເມືອງເປັງຈານ ໃນຕອນຄ້າຍແລງຂອງວັນໜຶ່ງ ຊຶ່ງອາກາດ ແຈ່ມໃສດີ. ຊາວເມືອງອອກມາຕ້ອນຮັບຢ່າງຄັບຄັ່ງອົ່ງອໍພາກັນຖືທຸງ ແລະສົ່ງສຽງຮ້ອງສະແດງຄວາມຍິນດີ. ເຂົາເຈົ້າພາກັນ ຫວ່ານດອກໄມ້ເດຍລະດາດເຕັມຫົນທາງ, ບັນຍາກາດຟົດຟື້ນຕື່ນຕາຢ່າງບໍ່ເຄີຍເປັນມາກ່ອນ, ຜູ້ຄົນພາກັນລົງສູ່ຖະໜົນ ແລະ ພາກັນຫລິ້ນມ່ວນຊື່ນຫລາຍອາດຫລາຍແນວ.

ພະຍາກຸສະລາດ ພາເຊື້ອກະສັດທັງຫົກເຂົ້າສູ່ພະລາຊະວັງແລ້ວລົງຈາກພາຫະນະ ຍ່າງໄປເທິງຜ້າພົມທີ່ປູລາດໄປ ຮອດບັນລັງໃນທ້ອງພະໂລງ ທ່າມກາງສາຍຕານັບບໍ່ຖ້ວນທີ່ເຝົ້າເບິ່ງຢ່າງຈົດຈໍ່. ຜູ້ຄົນຍໍມືນົບເປັນຊອນລອນພ້ອມໆກັນ, ແລ້ວສຽງຄ້ອງ ສຽງກອງກໍດັງຂຶ້ນຟົດສະນັ່ນ.

ຂ່າວການເດີນທາງຂອງສິນໄຊຄືນສູ່ເມືອງເປັງຈານ ດັງໄປທົ່ວທຸກແຫ່ງ, ແຕ່ລະເມືອງໄດ້ສົ່ງເຄື່ອງບັນນາການ ມາໃຫ້ ເພື່ອສະແດງຄວາມຊົມຊື່ນຍິນດີ ແລະ ຫວັງເພິ່ງບຸນບາລະມີຂອງທ້າວທີ່ເກັ່ງກ້າລື່ນໂລກ.

ມື້ຕໍ່ມາ ພິທີອະພິເສກສິນໄຊຂຶ້ນຄອງລາຊະບັນລັງ ກໍຖືກ ຈັດຂຶ້ນຕາມປະເພນີ. ພະຍາກຸສະລາດ ອະທິບາຍວ່າ ຕົນເຂົ້າສູ່ **ປັດສິມໄວ** ແລ້ວ ຈຶ່ງຍົກໃຫ້ລູກຊາຍຜູ້ເກັ່ງກ້າຂຶ້ນນັ່ງເມືອງ ແທນ ພະອົງສັ່ງໃຫ້

---

**ປັດສິມໄວ** : ອາຍຸແກ່ຊະລາ, ບັ້ນປາຍຂອງຊີວິດ.

ຈັດແຕ່ງຮາງລິນຄຳ ແລະ ຫໍສົງ ຊຶ່ງປະດັບ ປະດາດ້ວຍເມັດແກ້ວເຫລື້ອມຍິບຍັບ, ເສດຕະສັດຖືກຕັ້ງສູງເດັ່ນ ເປັນສະຫງ່າຢູ່ໃນບໍລິເວນພິທີ. ມີການປູກຕົ້ນກ້ວຍ ຕົ້ນອ້ອຍ ຂຽວ ອຸ່ມຫຸ່ມ, ພໍໄດ້ລືກງາມຍາມດີ ພະຍາກຸສະລາດຈູງແຂນສິນໄຊ ເຂົ້າສູ່ຫໍສົງ ໂດຍມີພົນຖືດາບຖືດາງແຫ່ຈາກຜາສາດໄປສູ່ຫໍສົງ ທ່າມກາງສຽງຄ້ອງສຽງກອງ. ພະອົງເອົາຄັນໂຫນ້ຳຫອມຖອກ ລົງຮາງລິນ ນ້ຳໄຫລລົງທີ່ຫໍສົງ ຢູ່ອີກເບື້ອງຫນຶ່ງ, ຜູ້ອາວຸໂສ ແລະ ເສນາມຸນຕີທຸກຖ້ວນຫນ້າພາກັນຫົດສົງ ເພື່ອເປັນສິລິມຸງຄຸນ ແກ່ສິນໄຊ, ກິ່ນນ້ຳກອມລອຍກຸ້ມໄປທົ່ວບໍລິເວນ.

ຫລັງຈາກນັ້ນ ສິນໄຊກໍນຸ່ງເຄື່ອງເຕັມຍົດ ແລະ ກັບຄືນ ໄປທີ່ຜາສາດ ເພື່ອຮ່ວມພິທີບາສີ. ທ້າວນັ່ງລົງທີ່ບັນລັງ, ດ້ານຂວາມື ມີສີໂຫ, ດ້ານຊ້າຍມື ມີສັງທອງ, ຕໍ່ຫນ້າມີພາບາສີ, **ພາມປຸໂລຫິດ** ແປດຄົນກ່າວນະມັດສະການ ແລະ ອວຍພອນ ແລ້ວກໍປະກາດກ້ອງນາມະຍົດຂອງສິນໄຊວ່າ: ພະຍາສັງສິນໄຊ ມະຫາຈັກກະພັດຕິລາດ. ສ່ວນອີກສອງທ້າວມີນາມະຍົດວ່າ: ສີຫະຈັກກະລາຊາ ແລະ ສັງຂາລະຈັກ.

ນອກຈາກແຂກພາຍໃນແລ້ວ ຍັງມີແຂກຈາກຕ່າງແດນ ຄືບັນດາເຈົ້າຄອງເມືອງຕ່າງໆ ກໍມາຮ່ວມພິທີນີ້ດ້ວຍ ເພື່ອເປັນສັກຂີພິຍານ ໃນການຂຶ້ນຄອງລາຊະບັນລັງ ຂອງທ້າວນ້ອຍຜູ້ເກັ່ງກ້າ.

ສິນໄຊ ທຳການປົກຄອງບ້ານເມືອງຢ່າງມີສິນທຳ, ປະຊາລາສະດອນ ຢູ່ເຢັນເປັນສຸກສະຫນຸກສ້າງບ້ານແປງເມືອງ, ຜູ້ຄົນຫລັ່ງໄຫລມາສູ່ເມືອງເປັງຈານ ຈາກທຸກທິດທຸກທາງ ເພື່ອອາໄສຮົ່ມບຸນບາລະມີຂອງທ້າວ. ສີໂຫກັບສັງທອງເປັນຄືເງົາຫຽມຕົວສິນໄຊໄປທຸກແຫ່ງ, ບາງເທື່ອທັງສອງກໍແປງເພດເປັນມະນຸດຮູບງາມ.

---

**ພາມປຸໂລຫິດ** : ຜູ້ຊົງຄຸນວຸດທິໃນດ້ານຮີດຄອງປະເພນີແລະກົດຫມາຍ

ບໍ່ດົນຕໍ່ມາ ສິນໄຊໄດ້ສັ່ງປ່ອຍທ້າວທັງທົກ ພ້ອມກັບນາງ ທັງທົກ ທີ່ເປັນແມ່ພວກເຂົາ ແລະ ສົ່ງກັບຄືນໄປເມືອງຈຳປາ. ບັນທະເສດຖີ ຜູ້ເປັນພໍ່ເຖົ້າຮູ້ຈັກຄວາມຜິດຂອງຫລານຊາຍທັງທົກ ທີ່ໄດ້ທຳການ ຄິດຄົດປອງຮ້າຍອ້າຍນ້ອງພໍ່ດຽວກັນ ຈຶ່ງເອົາຄຳຫນັກເທົ່າຕົນຕົວ ຂອງສິນໄຊ ມາມອບໃຫ້ ເພື່ອເປັນການໄຖ່ໂທດ ໃຫ້ທ້າວທັງທົກ.

ສ່ວນອະລຸນນະລາດ ທີ່ເປັນເຈົ້າປົກຄອງເມືອງນາກຢູ່ໃຕ້ ສະຫມຸດນັ້ນ ພາຍຫລັງມາຮ່ວມພິທີແຫ່ສິນໄຊເຂົ້າເມືອງແລ້ວ ກັບ ຄືນເມືອເລີຍປ່ອຍບໍ່ມີຍາມເຊົາ ຫນ້າຕາຫລ່າເຫລືອງ ຈິດໃຈບໍ່ຢູ່ ກັບເນື້ອກັບຄີງ ເພາະເອົາແຕ່ຄິດຄະນຶງຫານາງສີດາຈັນຢູ່ທຸກທີ ວາລາຕີ. ໃນທີ່ສຸດ ອະລຸນນະລາດ ກໍຕັດສິນໃຈເດີນທາງສູ່ເມືອ ເປັງ ຈານອີກເທື່ອຫນຶ່ງ ແລະ ຂໍເອົານາງສີດາຈັນ ຄືນໄປເປັນມິ່ງມະເຫ ສີ. ສິນໄຊກັບອາສຸມຸນທາ ປຶກສາກັນ ແລະ ເຫັນດີຕາມຄຳຂໍ, ແລ້ວ ທັງສອງຄື ອະລຸນນະລາດ ກັບ ນາງສີດາຈັນ ກໍກັບຄືນໄປສືບສ້າງ ເມືອງໃຕ້ສະຫມຸດ ທ່າມກາງຄວາມຍິນດີຊົມຊື່ນ ຂອງໄພ່ພົນນາກທັງ ປວງ.

ສິນໄຊ ສີໂຫ ສັງທອງ ພ້ອມກັບປ້າ ແລະ ແມ່ຄື ນາງ ຈັນທາ ກັບນາງລຸນ ແລະ ອາສຸມຸນທາພາກັນຢູ່ສຸກສະບາຍທາຍ ທຸກທາຍຮ້ອນ ສຸຂີກັນທຸກຖ້ວນຫນ້າຢູ່ທີ່ເມືອງເປັງຈານ.

**ສຸດບໍລະບວນ.**

# ອົງການອຸຍນິເຊັບ

# unicef

ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ



ໂຄງການພິມເລື່ອງສຳລັບເດັກ

Sponsored by
ASSOCIATION FOR SENDING PICTURE BOOKS
TO LAO CHILDREN OF JAPAN
A.S.P.B.

ພິມທີ່ ໂຮງພິມແຫ່ງລັດ